ພາກວິຊາວິທະຍາສາດການເມືອງ

Room Black

ພາກທີ I
ລັດ ແລະ ກົດໝາຍ
ບົດທີ 1
ຄວາມຮູ້ທົ່ວໄປກ່ຽວກັບລັດ

Bounsong Keobaosay
ກົດໝາຍ ປີ 2014
ຫຸດ 2. ເລກ. ປີ 2014
ລາຄາ 8000 ກີບ.
78722750

1. ອຳນາດສັງຄົມແລະຂໍ້ກຳນົດການປະພຶດລະໄຫວສັງຄົມບໍ່ທັນມີຊົນຊັ້ນ

1.1. ອຳນາດສັງຄົມ ແລະຂໍ້ກຳນົດເອກະພາບ

ໃນສັງຄົມທີ່ຍັງບໍ່ທັນມີຊົນຊັ້ນແມ່ນບໍ່ທັນມີອຳນາດລັດ ແຕ່ການຈຸ້ມຄອງສັງຄົມແມ່ນສະແດງອອກໃນຂໍ້ກຳນົດຂອງການປະພຶດຂອງຄົນໃນເວລານັ້ນແມ່ນເອີ້ນວ່າຂໍ້ກຳນົດເອກຳພາບ.

ແບບວິທີການຜະລິດສັງຄົມປະຖົມບູຮານ ແມ່ນຮູບການທຳອິດທີ່ຕ່ຳສຸດໃນປະຫວັດສາດແຫ່ງການຈັດຕັ້ງສັງຄົມຂອງຄົນ.ສັງຄົມປະຖົມບູຮານນີ້ເກີດຂຶ້ນປະມານ 2 ລ້ານປີກ່ອນນີ້ ແລະ ຄອງໂລກມາເຖິງ 5 - 4 ພັນປີກ່ອນ ຄ.ສ. ໃນຊົ່ວເວລານັ້ນຄົນສາມາດຜ່ານເສັ້ນທາງການໝູນໃຊ້ວັດຖຸເຊິ່ງແມ່ນທຳມະຊາດສ້າງໄວ້ແລ້ວຄືໄມ້ຄ້ອນ, ກ້ອນຫີນໄປເຖິງຄວາມສາມາດສ້າງເຄື່ອງມືການຜະລິດແບບປະຖົມປະຖານອອກມາໄດ້, ລະດັບການຂະຫຍາຍຕົວທີ່ຕ່ຳສຸດຂອງກຳລັງການຜະລິດໄດ້ກຳນົດການພົວພັນການຜະລິດສອດຄ່ອງນຳກັນ, ນັ້ນຄືການພົວພັນ ຢ່າງສະເໝີພາບ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງຄົນ, ການພົວພັນແມ່ນອີງໃສ່ພື້ນຖານກຳມະສິດລວມໝູ່, ເປັນເຈົ້າຮ່ວມກັນຕໍ່ພາຫະນະການຜະລິດ ແລະ ການແບ່ງປັນເທົ່າທຽມກັນ ໂດຍບໍ່ຂຶ້ນກັບປະລິມານ ແລະ ຄຸນະພາບຂອງແຮງງານໂດຍບໍ່ຂຶ້ນກັບໃຜເປັນຜູ້ຊອກມາໄດ້. ການແຈກຢາຍແບບເທົ່າທຽມກັນນີ້ແມ່ນຜົນຂອງລະດັບການຂະຫຍາຍຕົວຂອງກຳລັງການຜະລິດຂອງສັງຄົມຍັງຕ່ຳ ຮູບແບບນີ້ບໍ່ສາມາດດຳເນີນຢູ່ໃນສັງຄົມອື່ນອີກຕໍ່ໄປ. ການດຳລົງຊີວິດຂອງຄົນປະຖົມບູຮານນີ້ມັນເປັນກົດເກນຂອງສັງຄົມໜຶ່ງທີ່ແນ່ນອນ ອຳນາດສັງຄົມ ແລະ ຂໍ້ກຳນົດເອກະພາບແມ່ນຮູບແບບວິທີການຜະລິດເປັນອັນຕັດສິນ.

ຈຸດພິເສດຂອງຂໍ້ກຳນົດເອກະພາບໃນເວລານັ້ນແມ່ນສ່ອງແສງ ແລະຮັບປະກັນຄວາມເປັນເອກະພາບຂອງຄົນທົ່ວສັງຄົມ ເຊິ່ງກຳນົດພາຍໃຕ້ສະພາບເສດຖະກິດທີ່ຍາກແຄ້ນຄືເສດຖະກິດທີ່ຫຼ້າຫຼັງຊີວິດການເປັນຢູ່ຂຶ້ນກັບທຳມະຊາດ ການຕໍ່ສູ້ໃນເວລານັ້ນ ບໍ່ມີເສັ້ນທາງເລືອກອື່ນນອກຈາກການຢູ່ຮ່ວມກັນເປັນໝູ່, ເປັນກົກເຫຼົ່າ, ເປັນເຜົ່າ, ຈຸ້ມເຈື້ອ ແລະ ການນຳໃຊ້ເຄື່ອງມືການອອກແຮງງານຮ່ວມກັນ, ເຕົ້າໂຮມແຮງງານເຂົ້າກັນ; ດ້ວຍເຫດນັ້ນຈຶ່ງຈຳເປັນຕ້ອງມີກຳມະສິດຂອງສັງຄົມຕໍ່ກັບພາຫະນະການຜະລິດ ແລະ ແບ່ງເປັນຜົນຂອງການອອກແຮງງານບົນພື້ນຖານຄວາມເປັນເອກະພາບ.

1.1ລັກສະນະພື້ນຖານຂອງອຳນາດສັງຄົມ.

- ພື້ນຖານການຈັດຕັ້ງສັງຄົມແມ່ນກົກເຫຼົ່າ, ເຕົ້າໂຮມຄົນຕາມສາຍເລືອດ (ເຊື້ອຕະກຸນດຽວກັນ) ເຊິ່ງສະພາບທີ່ເກີດຂຶ້ນໃນສະໄໝທີ່ມີການພົວພັນຄອບຄົວທີ່ອີງໃສ່ການຜົນລິດແບບລວມໝູ່, ແບບຈັບ

ຈັດພິມໂດຍ : ອຈ ຄຳເມິງ ມອມມະນີ

ຄູ່. ສະນັ້ນ, ແຕ່ລະກົມເຫຼົ່າຈຶ່ງເປັນຫົວໜ່ວຍເສດຖະກິດ, ເປັນເຈົ້າກຳມະສິດຕໍ່ພາຫະນະການຜະລິດ, ເປັນຜູ້ຈັດຕັ້ງແບ່ງງານລວມ.

- ອຳນາດສັງຄົມໃນລະບອບປະຖົມບູຮານ ເປັນສັງຄົມເຊິ່ງສ້າງຂຶ້ນບົນພື້ນຖານປະຊາທິປະໄຕແບບລວມ ສູນ

- ອີງໃສ່ອິດທິພົນຄວາມນັບຖືເພື່ອມານຳພາ ແລະ ເປັນຜູ້ບັນຊາການທະຫານກົມເຫຼົ່າຕະຫຼອດຮອດກົດ ຈະກຳຕ່າງໆຂອງເຜົ່າ.

- ກົມເຫຼົ່າມີຄວາມເປັນເອກະພາບກັນ ຊ່ວຍເຫຼືອຮ່ວມມືກັນປາສະຈາກຄວາມຂັດແຍ່ງທີ່ເກີດຂຶ້ນໃນກົມເຫຼົ່າຂອງເຜົ່າ.

1.3. ຈຸດພິເສດຕົ້ນຕໍຂອງຂໍ້ກຳນົດເອກະພາບ.

ອີງໃສ່ພື້ນຖານທຳມະຊາດເປັນທີ່ກຳນົດທາງດ້ານເສດຖະກິດ, ການດຳລົງຄົງຕົວຢູ່ໃນການປະພຶດ ແລະ ສະຕິຂອງຄົນໃນສະໄໝນັ້ນ.

- ຂໍ້ກຳນົດດັ່ງກ່າວມີຜົນສັກສິດຍ້ອນຄວາມຊິນເຄີຍ ໝາຍຄວາມວ່າ ການປະຕິບັດຂໍ້ກຳນົດສິດພັນທະໄດ້ເຊື່ອມເຂົ້າກັນເປັນອັນໜຶ່ງອັນດຽວ.

- ການວາງລະບຽບໃສ່ການປະພຶດທັງໝົດແມ່ນບົນພື້ນຖານການຮ່ວມມືກັນ, ຊ່ວຍເຫຼືອກັນເຊິ່ງເປັນພື້ນຖານຄວາມເປັນເອກະພາບຄວາມເປັນປຶກແຜ່ນແໜ້ນໜາຂອງກົມເຫຼົ່າຂອງເຜົ່າ.

2. ຕົ້ນກຳເນີດ ແລະ ທາດແທ້ຂອງລັດ.

2.1ລັດແມ່ນຫຍັງ?.

ຄຳວ່າ "ລັດ" ມີຄວາມໝາຍໃກ້ຄຽງກັນກັບຄຳວ່າ" ປະເທດ " " ຊາດ " ໃນບາງຄັ້ງສາມຄຳສັບດັ່ງກ່າວກໍມີການນຳໃຊ້ປົນເປກັນ ແຕ່ກໍບໍ່ແມ່ນສິ່ງທີ່ຜິດເພາະວ່າຄວາມໝາຍຂອງຄຳທັງສາມມີທັງຈຸດຄືກັນ ແລະ ຈຸດແຕກຕ່າງກັນໃນບາງຄັ້ງການເລືອກໃຊ້ຄຳແຕ່ລະຄຳບາງຄຳໃຫ້ເໝາະສົມກັບເລື່ອງລາວທີ່ກ່ຽວຂ້ອງກໍເຮັດໃຫ້ໄດ້ເນື້ອໃນໃຈຄວາມຫຍັບເຂົ້າມໍ່ ແລະ ຖືກຕ້ອງຍິ່ງຂຶ້ນ.

ຄຳວ່າ " ຊາດ " ກໍມີຄວາມໝາຍຢູ່ຫຼາຍຢ່າງຄື ຖ້າພິຈາລະນາຄວາມໝາຍທີ່ກ້ວາງນັ້ນ " ຊາດ " ແມ່ນ " ກຸ່ມຄົນທີ່ຢູ່ຮ່ວມກັນໃນຊຸມຊົນການເມືອງເຊິ່ງມີດິນແດນທີ່ແນ່ນອນ ແລະ ຢູ່ພາຍໃຕ້ອະທິປະໄຕດຽວກັນ " ຄວາມໝາຍນີ້ກົງກັບຄຳວ່າ " ປະເທດ " ແລະ " ລັດ " ທີ່ສຸດ. ອີງການສະຫະປະຊາຊາດເປັນອົງການທີ່ປະກອບດ້ວຍຫຼາຍປະເທດທີ່ປະກອບເຂົ້າເປັນສະມາຊິກກໍໃຊ້ຄຳ ວ່າ" ຊາດ " ຫຼື " ປະຊາຊາດ ກໍມີຄວາມໝາຍດຽວກັນກັບຄຳວ່າ " ປະເທດ " ຖ້າພິຈາລະນາລັກສະນະພາຍນອກ " ຊາດ " ແມ່ນກຸ່ມຄົນທີ່ມີເຊື້ອຊາດທັງພາຍໃນ ແລະ ຕ່າງປະເທດ, ຖ້າພິຈາລະນາທາງດ້ານຈິດໃຈ " ຊາດ " ແມ່ນກຸ່ມຄົນທີ່ມີຄວາມສຳນຶກ ແລະ ເຈດຈຳນົງ, ເປັນອັນໜຶ່ງອັນດຽວກັນ ທີ່ຢູ່ຮ່ວມກັນ.

ບັນດານັກປົກຄອງແລະນັກກົດໝາຍຂອງຝຣັ່ງໄດ້ໃຫ້ທັດສະນະດັ່ງນີ້:

ທ່ານເຣມອງປວງກາເຣ(RAYMOND Poincare) ອາດີດນາຍົກລັດຖະມົນຕີຂອງຝຣັ່ງໄດ້ອະທິບາຍວ່າ

" ລັດຄືຊາດທີ່ມີຖານະເປັນສັງຄົມການເມືອງ " .

ທ່ານໂມຣິດເຊີໂອຣິອູ (MAURICE Hauriou) ນັກກົດໝາຍຊາວຝຣັ່ງໄດ້ໃຫ້ສາລະສຳຄັນວ່າ " ລັດເປັນທີ່ລວມຂອງລະບົບການເມືອງ, ເສດຖະກິດ, ກົດໝາຍ ແລະ ສາລະສຳຄັນອື່ນໆຂອງຊາດ ພາຍໃຕ້ລະບອບການ ປົກຄອງຂອງຝ່າຍພົນລະເຮືອນ"

ທ່ານໂຣເຊບອນມາ (Roger Bonmard) ນັກກົດໝາຍຂອງຝຣັ່ງອີກຄົນໜຶ່ງກໍໃຫ້ນິຍາມວ່າ: " ລັດເປັນອົງກອນແຫ່ງສັງຄົມ ເຊິ່ງປະກອບໄປດ້ວຍສາລະສຳຄັນທາງດ້ານການບໍລິຫານສາທາລະນະທັງໝົດ "

ຈາກຄວາມໝາຍຕ່າງໆທີ່ໄດ້ຍົກມານີ້ ພໍຈະສະຫຼຸບໄດ້ວ່າ " ລັດ" ຈະໃຊ້ເມື່ອຕ້ອງການເນັ້ນເຖິງ ປະກົດການທາງສັງຄົມການເມືອງ, ການປົກຄອງ ຫຼື ນິຕິສາດ ຫຼາຍກ່ວາຈະໃຊ້ກ່ຽວກັບທາງດ້ານພູມ ສາດ, ປະຫວັດສາດເຊື້ອຊາດ ແລະ ວັດທະນະທຳ-ສັງຄົມ. ຄວາມໝາຍຂອງລັດສາມາດແຍກອອກໄດ້ ຫຼາຍລັກສະນະດັ່ງນີ້ :

- **ຄວາມໝາຍກ້ວາງໆ**

ທ່ານແມກເວເບີ (MAX Weber) ນັກສັງຄົມວິທະຍາຊາວເຢຍລະມັນ ໄດ້ໃຫ້ຄຳອະທິບາຍ ໄວ້ວ່າ" ລັດ ໃນສະໄໝປັດຈຸບັນຄື ການລວມຂອງອຳນາດໃນດ້ານຕ່າງໆ, ໃນຮູບຂອງສະຖາບັນເພື່ອຜູກ ຂາດການໃຊ້ກຳລັງ ໂດຍຊອບທຳເຊິ່ງເປັນວິທີການທີ່ຄວບງຳພາຍໃນດິນແດນທີ່ມີເຂບເຂດທີ່ແນ່ນອນ, ບັນດາຜູ້ນຳຈຶ່ງໄດ້ລວບລວມເອົາເຄື່ອງມືການບໍລິຫານໄວ້ໃນມືເພື່ອໃຊ້ໃຫ້ບັນລຸຈຸດໝາຍນີ້ "

- **ຄວາມໝາຍແຄບ:**

ລັດໃນຄວາມໝາຍແຄບ ເຊິ່ງກ່ຽວຂ້ອງໂດຍກົງກັບພຶດຕິກຳທາງດ້ານການເມືອງ ແລະ ການປົກ ຄອງ ທ່ານ ເອມິນ ເດີໄຄ (Emile Durkheim) ນັກສຶກສາວິທະຍາສາດຂອງຝຣັ່ງໄດ້ໃຫ້ຄວາມໝາຍວ່າ " ລັດກໍແມ່ນ ລັດຖະບານ ຫຼື ອົງການທາງການເມືອງ ແລະ ສະຖາບັນທາງການເມືອງທັງຫຼາຍຂອງລັດ, ໂຄງສ້າງທາງສະຖາບັນລັດນີ້ປະກອບດ້ວຍໜ່ວຍງານທາງການເມືອງ ແລະ ໜ່ວຍງານທາງດ້ານການບໍ ລິຫານ. ໜ່ວຍງານທາງການເມືອງນັ້ນເປັນເຄື່ອງມືພິເສດຂອງລັດຖະບານ, ເຊິ່ງຄອຍຄວບຄຸມການດຳ ເນີນງານໃຫ້ເປັນໄປຕາມນະໂຍບາຍທີ່ໄດ້ວາງໄວ້. ລັດ ຈຶ່ງຜູກຂາດ ທັງອຳນາດບັງຄັບ ແລະ ການຄວບ ຄຸມກິດຈະການທາງດ້ານການເມືອງ, ສ່ວນໜ່ວຍງານທາງດ້ານການບໍລິຫານນັ້ນໝາຍເຖິງລະບົບລັດຖະ ບານເຊິ່ງປະກອບຂຶ້ນເປັນອົງກອນຕ່າງໆຂອງລັດນັ້ນເອງ "

ຢ່າງໃດກໍຕາມການໃຫ້ຄວາມໝາຍວ່າ ລັດແມ່ນລັດຖະບານ ແລະ ໜ່ວຍງານຂອງລັດຖະບານ ນັ້ນເປັນການພິຈາລະນາໃນດ້ານອຳນາດໜ້າທີ່ການເມືອງການປົກຄອງພຽງແຕ່ດ້ານດຽວ ບໍ່ໄດ້ຄຳນຶງເຖິງ ອົງປະກອບທີ່ສຳຄັນອື່ນໆ. ທີ່ຈິງແລ້ວລັດຈະມີຄວາມໝາຍກວ້າງກວ່າລັດຖະບານ, ເພາະລັດຖະບານ ເປັນພຽງຜູ້ແທນທີ່ດຳເນີນການຕາມເຈດຕະນາຂອງລັດ ແລະ ໃນວົງຈຳກັດທາງອຳນາດໜ້າທີ່. ຄວາມ ໝາຍ ຂອງລັດຖະບານຈະໄດ້ກ່າວໂດຍລະອຽດຕໍ່ໄປໃນສ່ວນປະກອບຂອງລັດ.

- **ຄວາມໝາຍຕາມລັດທິ ມາກຊິດສ໌:**

ຕາມທິດສະດີມາກແລ້ວ ແມ່ນມີຄວາມຈຳເປັນທີ່ຕ້ອງອະທິບາຍຄວາມໝາຍນີ້ໃຫ້ຈະແຈ້ງ ທ່ານ ກາກ ມາກ (Karl Mark) ໄດ້ກ່າວເຖິງລັດໃນຖານະເຄື່ອງມືຂອງຊົນຊັ້ນປົກຄອງເຊິ່ງມີໄວ້ສຳລັບກົດຂີ່ຂູດຮີດຊົນຊັ້ນອື່ນໆ. ໃນສັງຄົມມະນຸດໄດ້ມອບອຳນາດທາງການເມືອງໄວ້ກັບລັດເພື່ອສະໜັບສະໜູນໃຫ້ລັດໝູດພົ້ນຈາກການຄອບງຳດ້ານອິດທິພົນຂອງສາສະໜາຄຣິສ ໃນຢູໂລບສະໄໝກາງ ອັນຈະເຮັດໃຫ້ມະນຸດໃນສັງຄົມມີຄວາມເປັນອິດສະຫຼະຢ່າງແທ້ຈິງ, ຄົນສ່ວນໃຫຍ່ໃນສັງຄົມຍັງຖືກຄອບງຳຈາກອຳນາດທາງການເມືອງ ແລະ ເສດຖະກິດຢູ່, ຜູ້ທີ່ມີອຳນາດຄອບງຳນັ້ນແມ່ນຊົນຊັ້ນປົກຄອງເຊິ່ງສາມາດໄດ້ອຳນາດທາງການເມືອງ ອັນເນື່ອງມາຈາກມີອຳນາດທາງດ້ານເສດຖະກິດ, ຊົນຊັ້ນປົກຄອງນີ້ຈະໃຊ້ອຳນາດ ແລະ ກົນໄກຂອງລັດເພື່ອຜົນປະໂຫຍດຂອງຕົນເອງ. ໂດຍການເອົາລັດເອົາປຽບຊົນຊັ້ນອື່ນທາງເສດຖະກິດ. ສະນັ້ນ, ສັງຄົມທີ່ດີຕອ້ງເປັນສັງຄົມທີ່ປາສະຈາກຊົນຊັ້ນ ເຊິ່ງເກີດຂຶ້ນໄດ້ກໍຕໍ່ເມື່ອອຳນາດລັດຖືກລົບລ້າງໄປຍັງເຫຼືອແຕ່ຫຼັກການຈັນຍາທຳທີ່ຄວບຄຸມສັງຄົມ.

ທິດສະດີມາກ ຍັງໄດ້ໄຈ້ແຍກຕື່ມວ່າ ໃນເມື່ອສັງຄົມມີຊົນຊັ້ນມັນມີຄວາມຮຽກຮ້ອງຕອ້ງການໃຫ້ມີອຳນາດທາງການເມືອງຄວາມຈຳເປັນທີ່ໃຫ້ມີອຳນາດການເມືອງນັ້ນແມ່ນຖືກກຳນົດໂດຍລະບອບເສດຖະກິດຂອງສັງຄົມທີ່ມີຊົນຊັ້ນ ແລະໂຄງປະກອບທາງສັງຄົມຂອງມັນ. ມາກ - ອັງແກນ ໄດ້ຂຽນໄວ້ວ່າ " ອຳນາດການເມືອງຕາມຄວາມໝາຍຂອງຄຳສັບນັ້ນແມ່ນຄວາມຮຸນແຮງທີ່ມີການຈັດຕັ້ງຂອງຊົນຊັ້ນໜຶ່ງເພື່ອປາບປາມຊົນຊັ້ນອື່ນ ". ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ລັດແມ່ນການສ່ອງແສງ ແລະ ແມ່ນເຄື່ອງມືອັນຕົ້ນຕໍຂອງອຳນາດການເມືອງທີ່ຖືກກຳນົດໂດຍ ຄວາມຮຽກຮ້ອງຕອ້ງການຂອງໂຄງລ່າງ (ເສດຖະກິດ) ຂອງສັງຄົມ. ນັ້ນແມ່ນການຈັດຕັ້ງອຳນາດການເມືອງຂອງຊົນຊັ້ນຄອບຄອງດ້ານເສດຖະກິດ.

ຈາກການຕີລາຄາຄວາມໝາຍ ແລະ ການອະທິບາຍກ່ຽວກັບລັດຕາມລັດທິມາກແລ້ວສາມາດສະຫຼຸບເປັນນິຍາມໄດ້ວ່າ "ລັດແມ່ນການຈັດຕັ້ງພິເສດ ອຳນາດການເມືອງຂອງຊົນຊັ້ນທີ່ຄອບຄອງດ້ານເສດຖະກິດ, ມີກົງຈັກບັງຄັບພິເສດ ແລະ ສາມາດເຮັດໃຫ້ລະບຽບການຂອງຕົນມີຜົນບັງຄັບສຳລັບປະຊາຊົນທັງໝົດປະເທດ".

- **ຄວາມໝາຍໃນທາງນິຕິສາດ:**

ຖານະຂອງລັດໃນທາງກົດໝາຍແລ້ວ ຈະຂໍຍົກເອົາຄຳນິຍາມ ໃນລັດຖະທຳມະນູນຂອງຝຣັ່ງມາດັ່ງນີ້:

" ລັດ ມີຖານະເປັນນິຕິບຸກຄົນຜູ້ຖືສິດອຳນາດອະທິປະໄຕແລະເປັນຕົວແທນທາງດ້ານກົດໝາຍຂອງຊາດ" ລັດກຳເນີດມາເພື່ອສ້າງກົດໝາຍ, ເຖິງແມ່ນວ່າລັດຈະເກີດຂຶ້ນຈາກການລວມຕົວກັນໃນທາງການເມືອງຂອງປະຊາຊົນ ແຕ່ລັດກໍມີເຈດຈຳນົງ, ສິດ ແລະ ຜົນປະໂຫຍດເປັນຂອງຕົນເອງຕ່າງຫາກຈາກແຕ່ລະບຸກຄົນທີ່ຮ່ວມກັນເປັນສ່ວນປະກອບຂອງລັດ.

ຕາມກົດໝາຍລະຫວ່າງຊາດ ລັດແຕ່ລະລັດມີຄວາມເທົ່າທຽມກັນທາງດ້ານກົດໝາຍ, ມີອຳນາດອະທິປະໄຕ ແລະ ສິດໜ້າທີ່ໂດຍສົມບູນ, ລັດຕ່າງໆສາມາດຈັດຕັ້ງອົງການລະຫວ່າງປະເທດເຊິ່ງລັດເຫຼົ່ານີ້ໄດ້ຍອມສະຫຼະສິດທິບາງປະການໃນການເຂົ້າຮ່ວມເປັນສະມາຊິກ, ລັດຕ່າງໆຈະມີຄວາມສຳພັນຕໍ່ກັນໄວ້ໃນທາງທິດສະດີ, ແຕ່ໃນທາງປະຕິບັດ ແລະ ຂໍ້ເທັດຈິງແລ້ວລັດແຕ່ລະລັດບໍ່ມີຄວາມເທົ່າທຽມ

ກັນເພາະປັດໃຈທາງອຳນາດການທະຫານ ແລະ ເສດຖະກິດເຊິ່ງເປັນຕົວກຳນົດຈະໄດ້ກ່າວລະອຽດໃນຂໍ້ທີ່ເວົ້າເຖິງອຳນາດອະທິປະໄຕ (ອົງປະກອບຂອງລັດ).

2.2 ຕົ້ນກຳເນີດ ແລະ ວິວັດທະນາການຂອງລັດ

ກ່ອນທີ່ຊຸມຊົນທາງການເມືອງຈະວິວັດທະນາການຈົນກາຍເປັນລັດນັ້ນໃນສະໄໝບູຮານ ໄດ້ເກີດມີຮູບແບບ ຂອງສັງຄົມການເມືອງມາແລ້ວຫຼາຍລັກສະນະ ບາງລັກສະນະກໍຄ້າຍຄືລັດ ແຕ່ກໍບໍ່ສາມາດເປັນລັດໄດ້ຍ້ອນຂອບເຂດການເຄື່ອງໄຫວ ແລະ ການຄຸມຄອງຍັງເປັນລັກສະນະສັງຄົມປະຖົມບູຮານ.

2.2.1 ສັງຄົມກົກເຫົ່າປະຖົມບູຮານ.

ຄອບຄົວແມ່ນຈຸດເລີ່ມຕົ້ນແຫ່ງການຮ່ວມກັນຂອງມະນຸດຊາດ ແລະ ສະຖາບັນຄອບຄົວກໍເປັນທີ່ມາຂອງລະບົບການປົກຄອງຂັ້ນພື້ນຖານໂດຍແມ່ນ ບິດາ - ມານດາ ເຊິ່ງເປັນຫົວໜ້າຄອບຄົວມີອຳນາດໃນການປົກຄອງບຸດທິດາ, ເມື່ອຫຼາຍຄອບຄົວມາຢາໃສຢູ່ໃກ້ຄຽງກັນ ແລະ ຂະຫຍາຍວົງກວ້າງອອກຈົນກາຍເປັນລະບົບເຄືອຄ່າຍ, ເມື່ອເປັນດັ່ງນັ້ນລະບົບການປົກຄອງຂັ້ນພື້ນຖານກໍເລີ່ມຊັບຊ້ອນຄືນໃໝ່. ຜູ້ອາວຸໂສທີ່ເຂັ້ມແຂງ ແລະ ມີຄວາມສາມາດກໍຈະໄດ້ຮັບການເຄົາລົບນັບຖືໃຫ້ເປັນຫົວໜ້າກຸ່ມ ແລະ ໃນທີ່ສຸດເມື່ອສັງຄົມຂະຫຍາຍກ້ວາງອອກຈົນກາຍເປັນເຜົ່ານັ້ນກໍຈຳເປັນຈະຕ້ອງມີຫົວໜ້າ ແລະ ຄະນະຜູ້ປົກຄອງເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍພາຍໃນເຜົ່າເພື່ອຄຸ້ມຄອງເຜົ່າຈາກໄພທຳມະຊາດ ແລະ ການຮຸກຮານຈາກເຜົ່າອື່ນ. ນອກຈາກມີລະບົບການປົກຄອງຂອງສັງຄົມແລ້ວກໍຍັງມີຂະນົບທຳນຽມທີ່ສະມາຊິກຂອງເຜົ່າຍຶດຖືປະຕິບັດ ລວມທັງການເຄົາລົບເຊື່ອຖືໃນສິ່ງທີ່ສັກສິດປະກົດການຂອງທຳມະຊາດ. ສະມາຊິກຂອງເຜົ່າກໍທຳມາຫາກິນບໍ່ເປັນຫຼັກແຫຼ່ງບາງກຸ່ມກໍສະແຫວງຫາທີ່ຕັ້ງພູມລຳເນົາຂອງເຜົ່າ ແລະ ສ້າງບ້ານເມືອງຂຶ້ນ, ການທີ່ກຸ່ມໝູ່ຊົນຕ່າງໆມີຄວາມເປັນຢູ່ຢ່າງອິດສະຫຼະຕໍ່ກັນ ແລະ ຄອບຄອງອານາບໍລິເວນ ເພື່ອສ້າງບ້ານເມືອງນັ້ນຫົວໜ້າເຜົ່າ ແລະ ຄະນະຜູ້ປົກຄອງມີການປົກຄອງ ແລະ ຈັດລະບຽບໃນສັງຄົມໄດ້ນັ້ນ ຖືວ່າສັງຄົມເລີ່ມເກີດມີຊົນຊັ້ນເຊິ່ງນອນຢູ່ໃນທ້າຍລະບອບສັງຄົມປະຖົມບູຮານ.

2.2.2 ການກຳເນີດ ແລະວິວັດທະນາການຂອງລັດ

ຕົ້ນເຫດໂດຍກົງຂອງການກຳເນີດ ແມ່ນການທີ່ສັງຄົມແບ່ງອອກເປັນຊົນຊັ້ນທີ່ມີຜົນປະໂຫຍດບໍ່ລະປັກກັນ.

ເລນິນໄດ້ຊຽນວ່າ " ລັດແມ່ນຜະລິດຕະພັນແລະການປະກົດຕົວຂອງການບໍ່ລົງລອຍກັນໄດ້ຂອງຄວາມຂັດແຍ່ງທາງຊົນຊັ້ນ, ລັດກຳເນີດຂຶ້ນ ໃນເວລາທີ່ມີຄວາມຂັດແຍ່ງທາງຊົນຊັ້ນທີ່ບໍ່ສາມາດລົງລອຍກັນໄດ້ໂດຍພາວະວິໄສ "

ກ. ການຈັດແບ່ງຊົນຊັ້ນໃນສັງຄົມ.

ເສດຖະກິດຂອງລະບອບປະຖົມບູຮານ ຂະຫຍາຍຕົວໄປຕາມຂະບວນການປັບປຸງເຄື່ອງມືການອອກແຮງງານ, ແຕ່ການຂະຫຍາຍຕົວຂອງເສດຖະກິດນັ້ນສຳຄັນກວ່າໝູ່ແມ່ນການແບ່ງງານ 3 ຄັ້ງໃຫຍ່ໃນສັງຄົມຄື:

- ການລ້ຽງສັດໄດ້ແຍກຕົວອອກຈາກການປູກຝັງ
- ການຫັດຖະກຳໄດ້ແຍກຕົວອອກຈາກວຽກງານກະສິກຳ

- ການຊື້ຂາຍແລກປ່ຽນໄດ້ແຍກຕົວອອກຈາກວຽກງານກະສິກຳ ແລະ ຫັດຖະກຳໃນສັງຄົມໄດ້ຜູ້ຊື້ ແລະ ຂາຍເຮັດໃຫ້ສັງຄົມເກີດມີຜູ້ຮັ່ງ ແລະ ຜູ້ທຸກ. ຍ້ອນການແບ່ງງານ, ມີການປັບປຸງເຄື່ອງມືການອອກແຮງງານຈຶ່ງເຮັດໃຫ້ສະມັດຕະພາບຂອງງານເຕີບໃຫຍ່ຂຶ້ນ, ຜົນຜະລິດສ່ວນເກີນໄດ້ເກີດຂຶ້ນໝາຍຄວາມວ່າເສດຖະກິດມີເງື່ອນໄຂເຮັດໃຫ້ແຕ່ລະຄອບຄົວພຽງພໍກຸ້ມຕົວເອງໄດ້ ແລະຍັງສະສົມໃຫ້ເປັນຜົນຜະລິດເຫຼືອອີກຈຶ່ງສາມາດຮັກສາໄວ້ເພື່ອຂາຍ-ຊື້ ແລະ ແລກປ່ຽນກັນໄດ້. ທັງໝົດນີ້ແມ່ນເປັນຕົ້ນຕໍທີ່ນຳໄປສູ່ການພັງທະລາຍຂອງລະບອບສະຫະຊີບປະຖຳມບູຮານ ແລ້ວກ້າວໄປສູ່ຄວາມບໍ່ສະເໝີພາບໃນສັງຄົມ. ຍ້ອນຜົນຜະລິດສ່ວນເກີນນັ້ນໄດ້ເຮັດໃຫ້ສັງຄົມປະກົດມີລະບອບກຳມະສິດສ່ວນຕົວຕໍ່ກັບພາຫະນະການຜະລິດໃນສັງຄົມຂຶ້ນ. ໂດຍສະເພາະແມ່ນຫົວໜ້າຕະກຸນ , ຫົວໜ້າກຸ່ມ, ຫົວໜ້າເຜົ່າ, ຜູ້ບັນຊາການທະຫານ ແລະ ຜູ້ມີຄວາມສາມາດອື່ນໆ ໄດ້ຄ່ອຍເລີ່ມຕົ້ນໃຊ້ອຳນາດໃນການທ້ອນໂຮມຜົນຜະລິດສ່ວນເກີນ, ເຄື່ອງມືອອກແຮງງານ, ສິນຄ້າ, ວັດຖຸມີຄ່າເອົາມາເປັນຂອງຕົນເອງ, ຄວາມບໍ່ສະເໝີພາບໃນສັງຄົມເລີ່ມປະກົດຕົວຂຶ້ນເກີດມີຄວາມບໍ່ສະເໝີພາບທາງດ້ານຊັບສິນລະຫວ່າງກົກເຫຼົ່າ, ລະຫວ່າງເຜົ່າຫຼືພາຍໃນກົກເຫຼົ່າ ແລະເຜົ່ານັ້ນເອງ. ຈາກການປະກົດຕົວຂອງກຳມະສິດສ່ວນຕົນນັ້ນນຳໄປເຖິງການເກີດມີຜູ້ທຸກຜູ້ຮັ່ງໃນສັງຄົມ, ຜູ້ຮັ່ງເລີ່ມໃຊ້ແຮງງານຂອງຜູ້ທຸກນັ້ນແມ່ນຈຸດເລີ່ມຕົ້ນແຫ່ງການຂູດຮີດແຮງງານ, ການຍາດຊິງຊັບສົມບັດ ແລະ ດິນແດນ. ຈາກການນຳໃຊ້ແຮງງານຜູ້ທຸກຈົນຫຼືນຳໃຊ້ແຮງງານສະເລີຍເສິກທີ່ຈັບມາຈາກການເຮັດສົງຄາມຍາດຊິງຊັບສົມບັດ ແລະ ອຳນາດເປັນຂ້ອຍຂ້າຮັບໃຊ້ຜູ້ຮັ່ງມີນັ້ນຈຶ່ງເຮັດໃຫ້ສັງຄົມແບ່ງຄົນອອກເປັນຜູ້ຂູດຮີດແລະຖືກກົດຂີ່ຂູດຮີດ ຫຼື ສັງຄົມເລີ່ມມີຊົນຊັ້ນທີ່ປໍລະປັກກັນມັນແມ່ນຕົ້ນກຳເນີດຂອງສັງຄົມໃໝ່ຄືສັງຄົມຍຶດຄອງຂ້າທາດ (ສັງຄົມຂ້າທາດ).

ອັງແກນ ໄດ້ໃຫ້ຂໍ້ສັງເກດວ່າ " ຄວາມແຕກຕ່າງທາງດ້ານຊັບສົມບັດລະຫວ່າງຫົວໜ້າຄອບຄົວຕ່າງໆ ໄດ້ທັບມ້າງປະຊາຄົມກອມມຸຍນິດເກົ່າແກ່ແບບຄອບຄົວ ".

ຂ. ການແບ່ງສັງຄົມອອກເປັນຊົນຊັ້ນທີ່ນຳໄປສູ່ການກຳເນີດລັດ

ຊົນຊັ້ນກຳເນີດບໍ່ພຽງແຕ່ເປັນກຸ່ມຕ່າງໆ ຂອງຄົນເທົ່ານັ້ນພວກເຂົາເຈົ້າຍັງມີຖານະແຕກຕ່າງກັນທາງດ້ານການຜະລິດຂອງສັງຄົມ ແລະພວກເຂົາເຈົ້າເລີ່ມມີບົດບາດແຕກຕ່າງ. ກົງກັນຂ້າມກັນທາງດ້ານກຳມະສິດ, ກຸ່ມໜຶ່ງຂູດຮີດແຮງງານຂອງກຸ່ມໜຶ່ງ ແລະ ມີການຕໍ່ສູ້ກັນເກີດຂຶ້ນລະຫວ່າງກຸ່ມດັ່ງກ່າວ (ຕໍ່ສູ້ຊົນຊັ້ນ) ຊົນຊັ້ນຄອບຄອງພະຍາຍາມປົກປັກຮັກສາ ແລະ ເພີ່ມທະວີຖານະຂອງຕົນ, ສ່ວນຊົນຊັ້ນທຸກຍາກ (ຊົນຊັ້ນຖືກຂູດຮີດ) ກໍພະຍາຍາມປ່ຽນແປງຖານະຂອງຕົນ ຄື ລົບລ້າງການຖືກຂູດຮີດ, ການຕໍ່ສູ້ເພື່ອຜົນປະໂຫຍດຂອງແຕ່ລະຊັ້ນຄົນນັ້ນບໍ່ສາມາດລົງລອຍກັນໄດ້.

ເພື່ອບໍລິຫານການຈັດຕັ້ງຄຸ້ມຄອງສັງຄົມ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະຢູ່ພາຍໃຕ້ອຳນາດນັ້ນການຈັດຕັ້ງກົກເຫຼົ່າ, ການຈັດຕັ້ງເຜົ່າຢ່າງມີຄວາມສາມາດເຮັດລ້ອມໜ້າທີ່ຂອງຕົນໄດ້ນັ້ນຈຶ່ງຈຳເປັນຕ້ອງມີອົງການຈັດຕັ້ງພິເສດຂຶ້ນ ເພື່ອຄຸ້ມຄອງສັງຄົມອົງການຈັດຕັ້ງດັ່ງກ່າວຕ້ອງມີຄວາມສາມາດປົກປັກຮັກສາ ແລະ ອຸ້ມຊູການຄອບຄອງຂອງຊົນຊັ້ນໃຫ້ຢູ່ເໜືອຊົນຊັ້ນອື່ນ, ພ້ອມທັງດັບມອດການປໍລະປັກທາງຊົນຊັ້ນ ເພື່ອຮັບປະກັນການດຳລົງຄົງຕົວ ແລະການເຄື່ອນໄຫວຂອງສັງຄົມ .

ອົງການໃໝ່ທີ່ໄດ້ຕັ້ງຂຶ້ນນີ້ຕ້ອງມີພະລັງອັນເຂັ້ມແຂງມີອຳນາດທີ່ກ້າຫານຈຶ່ງຮຽກຮ້ອງໃຫ້ມີສຳນັກງານສະເພາະກໍ່ສ້າງກອງກຳລັງພິເສດເຊິ່ງມີໜ້າທີ່ປົກຄອງ ແລະ ດຳເນີນການບັງຄັບຢ່າງມີການຈັດຕັ້ງ,

ອົງການຈັດຕັ້ງດັ່ງກ່າວນີ້ກໍແມ່ນລັດນັ້ນເອງ, ລັດເກີດຂຶ້ນຍ້ອນຄວາມຮຽກຮ້ອງຕ້ອງການຂອງສັງຄົມທີ່ມີຊົນຊັ້ນ, ຂອງຄວາມບໍ່ລົງລອຍກັນໄດ້ ແລະ ຄວາມຂັດແຍ່ງທາງຊົນຊັ້ນ.

ຄ. ວິວັດທະນາການຂອງລັດ

ຕາມທິດສະດີມາກ - ເລນິນ ການກຳເນີດ ແລະ ວິວັດທະນາການຂອງລັດນັບແຕ່ທ້າຍສັງຄົມປະຖົມບູຮານເຖິງປັດຈຸບັນແມ່ນໄດ້ອີງໃສ່ການຂະຫຍາຍຕົວຂອງປະຫວັດສາດຂອງສັງຄົມມະນຸດເຊິ່ງກຳນົດເອົາ 4 ຮູບຖານເສດຖະກິດສັງຄົມທີ່ມີຊົນຊັ້ນເປັນຫຼັກ, ໝາຍຄວາມວ່າ ປະຫວັດສາດການຂະຫຍາຍຕົວຂອງສັງຄົມມະນຸດແມ່ນໄດ້ມີ 4 ໂຄງລ່າງເສດຖະກິດແລະ 4 ປະເພດລັດທີ່ສົມຄູ່ກັນຄື ລັດເຈົ້າທາດ, ລັດສັກດິນາ, ລັດທຶນນິຍົມ ແລະ ລັດສັງຄົມນິຍົມແຕ່ລະປະເພດລັດມີຄວາມແຕກຕ່າງກັນທາງດ້ານໂຄງລ່າງ ທາດແທ້ທາງຊົນຊັ້ນ ແລະຄຸນປະໂຫຍດຂອງສັງຄົມ.

- ລັດເຈົ້າທາດ

ແມ່ນປະເພດລັດທຳອິດໃນປະຫວັດສາດເຊິ່ງເກີດຂຶ້ນພາຍຫຼັງການພັງທະລາຍຂອງລະບອບສະຫະຊີບປະຖົມບູຮານພື້ນຖານເສດຖະກິດແມ່ນກຳມະສິດເອກະຊົນຕໍ່ພາທະນະການຜະລິດ ແລະ ຕໍ່ຂ້າທາດເອງ. ຂ້າທາດບໍ່ພຽງແຕ່ເປັນກຳມະສິດຂອງເຈົ້າທາດຜູ້ໃດໜຶ່ງເທົ່ານັ້ນແຕ່ຍັງສາມາດເປັນກຳມະສິດລວມຂອງລັດ, ການຜະລິດແມ່ນອີງໃສ່ການກົດຂີ່ຂູດຮີດຂ້າທາດ. ຮູບແບບຂອງລັດເຈົ້າທາດໄດ້ແບ່ງອອກເປັນ 4 ແບບຄື:

- ລະບອບລາຊາທິປະໄຕເຈົ້າທາດ ຫຼື ລັດທີ່ປົກຄອງດ້ວຍອຳນາດກົດຂີ່ເດັດຂາດ(Desptoism) ເຊັ່ນຢູ່ ເອຢິບບູຮານ, ບາບີລອນ, ອິນເດຍ ແລະ ຈີນ(ສະໄໝຂ້າທາດ).

- ລະບອບສາທາລະນະລັດຊຸນນາງ ຫຼື ລັດທີ່ປົກຄອງດ້ວຍລະບອບທໍລະລາດ(Tyranny) ເຊັ່ນ ກຸງໂຣມ, ນະຄອນລັດສະປາຕາຂອງເກຣັກ.

- ລະບອບສາທາລະນະລັດ ປະຊາທິປະໄຕເຈົ້າທາດ ຫຼື ລັດທີ່ປົກຄອງດ້ວຍລະບອບປະຊາທິໄຕ (Democacy) ນະຄອນອາເທນ(Athens).

- ລັດທີ່ປົກຄອງດ້ວຍລະບອບຈັກກະພັດ(Empire) ເຊັ່ນ ຈັກກະພັດໂຣມ. ລັດເຫຼົ່ານີ້ອາດຈະມີຜູ້ປົກຄອງທີ່ມີອຳນາດເດັດຂາດແຕ່ຜູ້ດຽວ ຫຼື ອຳນາດການປົກຄອງຢູ່ໃນກຳມືຂອງບຸກຄົນກຸ່ມດຽວເຖິງວ່າພົນລະເມືອງສ່ວນໜຶ່ງຂອງລັດມີສ່ວນຮ່ວມໃນການປົກຄອງກໍຕາມ ແຕ່ລັກສະນະລວມທີ່ສຳຄັນກໍມີການໃຊ້ແຮງງານຂ້າທາດເປັນຫຼັກ, ການກໍ່ສ້າງຕົວເມືອງ, ການຜະລິດຜົນການຈະເລີນເຕີບໂຕທາງດ້ານເສດຖະກິດຂອງລັດເຫຼົ່ານັ້ນຕ້ອງເພິ່ງພາອາໄສແຮງງານຂອງຂ້າທາດທັງໝົດ.

- ລັດສັກດິນາ

ແມ່ນລັດ ທີ່ສືບຕໍ່ຈາກການພັງທະລາຍຂອງລັດເຈົ້າທາດ, ແຮງງານທີ່ມີຜົນຜະລິດນ້ອຍຂອງຂ້າທາດໄດ້ຄ່ອຍໆຖືກສັບປ່ຽນໂດຍແຮງງານຂອງຍ່າວມາ, ຍ່າວມາສາມາດມີດິນເພື່ອທຳການປູກຝັງພາຍໃຕ້ເງື່ອນໄຂການປະຕິບັດພັນທະໃນການເຮັດວຽກໃຫ້ເຈົ້າຂອງດິນ. ພື້ນຖານເສດຖະກິດແມ່ນກຳມະສິດຂອງເຈົ້າທີ່ດິນຕໍ່ດິນ ແລະ ພາທະນະການຜະລິດອື່ນໆ, ການຜູກຂາດຂອງສັກດິນາໄດ້ເຮັດໃຫ້ຊາວມາຖືກບັງຄັບຕິດພັນກັບທີ່ດິນຂອງເຈົ້າສັກດິນາ.

ຮູບແບບຂອງລັດສັກດິນາໃນສະໄໝລາຊາທິປະໄຕ ເບື້ອງຕົ້ນຢູ່ໃນກົງຈັກລັດ ແມ່ນມີເຈົ້າຊີວິດ, ລາຊະວົງ, ມີກອງປ້ອງກັນ, ມີອົງການກຳເນີດຂຶ້ນ ເຊັ່ນ ສານ, ຕຳຫຼວດ, ການເງິນ ແລະ ອື່ນໆ, ຮູບແບບຂອງລັດມີຫຼາຍຢ່າງຂຶ້ນກັບເງື່ອນໄຂຕົວຈິງຂອງປະຫວັດສາດ ແຫ່ງການຄົງຕົວຂອງແຕ່ລະລັດ ແຕ່ຮູບແບບຕົ້ນຕໍແມ່ນລາຊາທິປະໄຕເຊິ່ງແບ່ງອອກເປັນ 2 ແບບຄື:

- ລັດທີ່ມີການປົກຄອງແບບກະຈາຍອຳນາດ ໂດຍເຈົ້າຜູ້ປົກຄອງນະຄອນ ຫຼື ເຈົ້າທີ່ດິນມີອິດສະຫຼະແລະອຳນາດໃນແຄ້ວນຂອງຕົນຢ່າງເຕັມສ່ວນແຕ່ໃນເບື້ອງຕົ້ນແມ່ນສະແດງອອກໃນການແບ່ງແຍກດິນແດນເປັນອານາຈັກຕ່າງໆ ເຊິ່ງອີງໃສ່ເສດຖະກິດທຳມະຊາດ ອຳນາດບໍ່ລວມສູນ ອາດມີລັດໃຫຍ່ໂຕແຕ່ບໍ່ໝັ້ນຄົງ.

ຕົວຢ່າງ: ແຄວ້ນຕ່າງໆຢູ່ໃນຢູໂຣບສະໄໝກາງ, ອານາຈັກລາວລ້ານຊ້າງຢູ່ໃນໄລຍະທ້າຍແຫ່ງການຂະຫຍາຍຕົວຂອງລະບອບສັກດິນາແມ່ນລາຊາທິປະໄຕຜະເດັດການ ໃນນັ້ນອຳນາດທັ້ງໝົດຕົກຢູ່ໃນກຳມືຂອງເຈົ້າຊີວິດແຕ່ຜູ້ດຽວ.

- ລັດທີ່ມີການປົກຄອງແບບລວມສູນອຳນາດເຂົ້າສູ່ລັດຖະບານກາງຂອງກະສັດ ເຊັ່ນ ປະເທດຝຣັ່ງຕັ້ງແຕ່ພະເຈົ້າລຸຍທີ 14 ລັກສະນະລວມຂອງສັກດິນາທັ້ງສອງແບບແມ່ນອຳນາດທັ້ງສອງສັງຄົມເປັນອະພິສິດແຕ່ຊາວນາເຊິ່ງເປັນປະຊາຊົນສ່ວນໃຫຍ່ຂອງປະເທດຕ້ອງໃຊ້ແຮງງານເພື່ອຜະລິດຜົນທາງການກະເສດໃຫ້ແກ່ບັນດາຂຸນນາງເຈົ້າທີ່ດິນ.

- **ລັດທຶນນິຍົມ**

ແມ່ນຈັດຕັ້ງການຄອບຄອງທາງດ້ານການເມືອງຂອງຊົນຊັ້ນນາຍທຶນເໜືອຊົນຊັ້ນຊາວຜູ້ອອກແຮງງານ, ມີໜ້າທີ່ຮັບປະກັນການຄອບຄອງທາງເສດຖະກິດນາຍທຶນ ເພື່ອຈຸດປະສົງກົດຂີ່ຂູດຮີດຊາວຜູ້ອອກແຮງງານ ແລະມີກຳໄລສູງ, ພື້ນຖານເສດຖະກິດແມ່ນສາຍພົວພັນກຳມະສິດເອກະຊົນຂອງນາຍທຶນຕໍ່ພາທະນະການຜະລິດຊາວຜູ້ອອກແຮງງານແມ່ນມີສິດເສລີພາບສ່ວນບຸກຄົນ ແຕ່ກໍເປັນອິດສະລະພາບຈາກພາທະນະການຜະລິດ, ເພື່ອຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ ມີຄວາມຈຳເປັນຕ້ອງຂາຍແຮງງານຂອງຕົນໃຫ້ນາຍທຶນ.

ຮູບແບບຂອງລັດທຶນນິຍົມແມ່ນມີສາທາລະນະລັດ ຫຼື ລາຊາທິປະໄຕພາຍໄຕ້ລັດຖະທຳມະນູນ.

- ສາທາລະນະລັດແບບມີສະພາ ຫຼື ປະທານາທິບໍດີ ແມ່ນຖືກເລືອກຕັ້ງໂດຍສະພາ, ລັດຖະບານປະກອບດ້ວຍຜູ້ຕາງໜ້າຂອງພັກການເມືອງທີ່ມີສຽງສ່ວນຫຼາຍໃນສະພາ. ແຕ່ບາງລັດທຶນນິຍົມປະທານາທິບໍດີບໍ່ໄດ້ຖືກເລືອກຕັ້ງໂດຍສະພາ ແຕ່ຖືກເລືອກຕັ້ງໂດຍສະພາ, ຜູ້ເລືອກເຊິ່ງເລືອກຕັ້ງຈາກປະຊາຊົນ ຂອງລັດໃນບາງຈຳນວນທີ່ສອດຄ່ອງກັບຈຳນວນຕົວແທນຂອງແຕ່ລະລັດຢູ່ໃນສະພາສູງ. ເຊັ່ນ ສະຫະລັດອາເມຣິກາ (ອຳນາດທັ້ງໝົດຢູ່ໃນສະພາ).

- ລາຊາທິປະໄຕພາຍໃຕ້ລັດຖະທຳມະນູນ ແມ່ນລາຊາທິປະໄຕປະເພດໜຶ່ງທີ່ມີຂອບເຂດອຳນາດຂອງເຈົ້າຊີວິດຖືກຈຳກັດໂດຍລັດຖະທຳມະນູນ ແລະ ສະພາເຊັ່ນ ອັງກິດ, ຊູແອດ, ນອກແວ, ແດນມາກ, ໂຮນລັງ.

ບໍ່ວ່າລະບອບການປົກຄອງຂອງລັດເຫຼົ່ານີ້ຈະເປັນຮູບແບບແນວໃດກໍຕາມແຕ່ກໍມີຈຸດປະສົງລວມຢູ່ທີ່ວ່າລະບົບເສດຖະກິດເຊິ່ງໄດ້ພັດທະນາສູ່ລະບົບອຸດສາຫະກຳແລ້ວນັ້ນຕົກຢູ່ໃນກຳມືຂອງກຸ່ມນາຍທຶນເຊິ່ງເປັນກຸ່ມຄົນໜ້ອຍໃນສັງຄົມແຕ່ມີຖານະຮັ່ງມີອັນນຳໄປສູ່ການມີອຳນາດທາງດ້ານການເມືອງຂອງລັດ

ປະຊາຊົນສ່ວນຫຼາຍຂອງປະເທດ ມີຖານະເປັນຜູ້ອອກແຮງງານເພື່ອຄວາມຮັ່ງມີໃຫ້ແກ່ບັນດານາຍທຶນເຫຼົ່ານັ້ນ.

- ລັດສັງຄົມນິຍົມ

ແມ່ນການຈັດຕັ້ງອຳນາດການເມືອງຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານໂດຍການນຳພາຂອງພັກຄອມມຸຍນິດ. ທາງເສດຖະກິດແມ່ນບົນພື້ນຖານກຳມະສິດສ່ວນລວມກ່ຽວກັບພາຫະນະການຜະລິດ, ທາດແທ້ຂອງລັດແມ່ນເຄື່ອງມືຂອງຊົນຊັ້ນກຳມະກອນແລະຜະເດັດການກຳມະຊີບ, ມີກົງຈັກລັດເອກະພາບພາຍໃຕ້ການນຳພາຂອງພັກຄອມມຸຍນິດ, ມີສະພາ, ມີລັດຖະບານ ແລະ ອົງການອື່ນໆທີ່ປະກອບດ້ວຍບັນດາບຸກຄົນທີ່ໄດ້ຮັບການເລືອກຕັ້ງ ຫຼື ບຸກຄົນຕົວແທນທີ່ກ້າວໜ້າຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ.

ຮູບແບບຂອງລັດສັງຄົມນິຍົມໄດ້ແບ່ງອອກເປັນ 2 ແບບຍ່ອຍ:

- ລັດທີ່ປົກຄອງດ້ວຍລະບອບປະຊາທິປະໄຕ (**People's Democracy**) ເຊັ່ນ ລັດສັງຄົມນິຍົມຕ່າງໆ ທີ່ຢູ່ໂຮບຕາເວັນອອກໃນອາດີດ ແລະ ຢູ່ອາຊີປັດຈຸບັນ.

- ລັດປົກຄອງດ້ວຍລະບອບຜະເດັດການກຳມະຊີບເຊັ່ນ ອາດີດສະຫະພາບສາທາລະນະລັດສັງຄົມນິຍົມໂຊຫວຽດ, ອາດີດ ສາທາລະນະລັດສັງຄົມນິຍົມເຢຍລະມັນ ແລະ ອື່ນໆ.

ລັດສັງຄົມນິຍົມ ບໍ່ວ່າຈະໃສ່ຊື່ລະບອບການປົກຄອງຢ່າງໃດ ແລະ ມີຂະບວນການທາງການເມືອງແນວໃດກໍຕາມ ຈຸດໝາຍແມ່ນເຮັດໃຫ້ປະຊາຊົນ ເຊິ່ງເປັນຊົນສ່ວນໃຫຍ່ຂອງປະເທດ ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກລະບົບເສດຖະກິດການເມືອງຂອງລັດຢ່າງແທ້ຈິງ, ລັດສັງຄົມນິຍົມເມື່ອຂະຫຍາຍຕົວເຖິງລະດັບອັນແນ່ນອນແລ້ວກໍຈະກາຍເປັນສັງຄົມນິຍົມທີ່ສົມບູນ ໂດຍປາສະຈາກການເອົາລັດເອົາປຽບກັນໃນສັງຄົມ, ບໍ່ມີການແບ່ງຊົນຊັ້ນໃນສັງຄົມ.

2.3 ທາດແທ້ ແລະ ເຄື່ອງໝາຍສະເພາະຂອງລັດ

ລັດແມ່ນເຄື່ອງມື, ແມ່ນກົງຈັກຜະເດັດການຂອງຊົນຊັ້ນ ແມ່ນການຈັດຕັ້ງພິເສດຂອງກຳລັງການເມືອງ. ແມ່ນການຈັດຕັ້ງຄວາມຮຸນແຮງເພື່ອປາບປາມຊົນຊັ້ນໃດໜຶ່ງ, ລັດແມ່ນກົງຈັກເພື່ອຮັກສາການຄອບຄອງຂອງຊົນຊັ້ນໜຶ່ງເໜືອຊົນຊັ້ນອື່ນ.

ຄຳວ່າກົງຈັກ ແມ່ນຢາກເວົ້າເຖິງທາດແທ້ ທາງດ້ານຊົນຊັ້ນຂອງລັດ ຊີ້ໃຫ້ເຫັນວ່າລັດເໝືອນກົງຈັກທຸກອັນແມ່ນເຄື່ອງມືທີ່ເພີ່ມທະວີກຳລັງແຮງຂອງຊົນຊັ້ນຄອບຄອງທາງດ້ານເສດຖະກິດ.

ຕາມທິດສະດີມາກ - ເລນິນ ໃນສັງຄົມນິຍົມລັດໄດ້ເຊົາເປັນອົງການຄອບຄອງທາງດ້ານຊົນຊັ້ນ ແຕ່ໃນນີ້ລັດກໍຍັງເປັນເຄື່ອງມືອຳນາດການເມືອງຂອງຊາວຜູ້ອອກແຮງງານ ພາຍໃຕ້ການນຳພາຂອງພັກຊົນຊັ້ນກຳມະກອນ. ລັດມີຄວາມແຕກຕ່າງກັບອົງການຈັດຕັ້ງ ແລະ ສຳນັກງານອື່ນໆຂອງສັງຄົມທີ່ມີຊົນຊັ້ນຍ້ອນວ່າລັດມີເຄື່ອງໝາຍສະເພາະຄື:

- ລັດແມ່ນການຈັດຕັ້ງອຳນາດການເມືອງສາທາລະນະ, ອຳນາດການເມືອງສາທາລະນະແມ່ນເຄື່ອງໝາຍຕັດສິນຊີ້ຂາດຂອງລັດ ເຊິ່ງມີຄວາມໝາຍຕັດສິນຊີ້ຂາດຂອງລັດ. ໝາຍຄວາມວ່າລັດ ແມ່ນອຳນາດເຊິ່ງບໍ່ເຈືອປົນກັບສັງຄົມແຕ່ຢູ່ເໜືອສັງຄົມ ແຕ່ອຳນາດທີ່ປະກົດອອກຂອງລັດ ແມ່ນຕ້ອງໜ້າໃຫ້ສັງຄົມເປັນອົງການພິເສດເພື່ອປົກປ້ອງສັງຄົມ.

- ແມ່ນການຈັດຕັ້ງ ອຳນາດເຊິ່ງມີກົນຈັກ ບັງຄັບພິເສດເປັນພື້ນຖານການບັງຄັບຂອງລັດນັ້ນບໍ່ແມ່ນການບັງຄັບລວມ ແຕ່ແມ່ນການບັງຄັບພິເສດທີ່ດຳເນີນໂດຍຄົນຈຳນວນໜຶ່ງ ເຊິ່ງຖືກຈັດຕັ້ງຂຶ້ນສະເພາະເພື່ອຈຸດປະສົງຂອງຊົນຊັ້ນຄອບຄອງ.

- ແມ່ນການຈັດຕັ້ງອຳນາດທີ່ສາມາດເຮັດໃຫ້ລະບຽບການຂອງຕົນ ມີຜົນບັງຄັບສຳລັບພົນລະເມືອງທັງປະເທດ.

- ແມ່ນການຈັດຕັ້ງອຳນາດທີ່ມີອະທິປະໄຕ, ອະທິປະໄຕຂອງລັດແມ່ນເຄື່ອງໝາຍທາງດ້ານການເມືອງ ແລະ ກົດໝາຍຂອງອຳນາດທີ່ສ່ອງແສງເຖິງຄວາມເປັນເອກະພາບຂອງອຳນາດຢູ່ພາຍໃນ ແລະ ນອກອະທິປະໄຕຂອງລັດແມ່ນມີການແກ້ໄຂບັນຫາຂອງຕົນເອງຢ່າງມີອິດສະຫຼະພາບ.

3. ຮູບແບບການປົກຄອງຂອງລັດ.

3.1 ຮູບການປົກຄອງແບບລັດດ່ຽວ.

ຮູບການປົກຄອງແບບລັດດ່ຽວ ແມ່ນອຳນາດສູງສຸດຢູ່ໃນລັດ ເຊິ່ງມີສອງຮູບການພື້ນຖານ ຄື ລາຊາທິປະໄຕ ແລະ ສາທາລະນະລັດ.

- ລາຊາທິປະໄຕແມ່ນຮູບການປົກຄອງ ເຊິ່ງອຳນາດສູງສຸດຖືກດຳເນີນໂດຍບຸກຄົນຜູ້ໜຶ່ງຜູ້ດຽວ ເຊິ່ງມາຈາກຕະກຸນຜູ້ປົກຄອງ. (ເຊື້ອກະສັດ)

- ສາທາລະນະລັດ ແມ່ນຮູບການປົກຄອງ ເຊິ່ງອຳນາດສູງສຸດຖືກດຳເນີນໂດຍພົນລະເມືອງທົ່ວລັດໃນກຳນົດເວລາທີ່ແນ່ນອນ.

ຮູບການປົກຄອງ ລັດດ່ຽວແບບສາທາລະນະລັດ ແມ່ນລັດທີ່ມີລັດຖະບານກາງເປັນຜູ້ມີອຳນາດປົກຄອງບໍລິຫານສູງສຸດ, ການວາງແຜນນະໂຍບາຍ, ການແຕ່ງຕັ້ງລັດຖະບານ ແລະ ການຈັດຕັ້ງໜ່ວຍງານປົກຄອງໃນສ່ວນທ້ອງຖິ່ນຕ້ອງມາຈາກລັດຖະບານກາງ, ລັດຖະບານກາງເປັນຜູ້ນຳໃຊ້ອຳນາດອະທິປະໄຕທັງໝົດຄື ອຳນາດນິຕິບັນຍັດ, ອຳນາດບໍລິຫານ ແລະ ອຳນາດຕຸລາການແຕ່ພຽງຜູ້ດຽວເຖິງແມ່ນວ່າລັດຖະບານຈະມີການແບ່ງອຳນາດຈາກສ່ວນກາງ ໄປຍັງສ່ວນທ້ອງຖິ່ນ, ມີລະບົບການປົກຄອງຈາກລະດັບສູງໄປສູ່ລະດັບຕ່ຳ ແລະ ເປີດໂອກາດໃຫ້ມີການຈັດການສ່ວນທ້ອງຖິ່ນໂດຍການລິເລີ່ມໃນທ້ອງຖິ່ນນັ້ນເອງ ເຊັ່ນ ມີການເລືອກຕັ້ງສະພາແຂວງ, ແຕ່ນະໂຍບາຍ ແລະ ລະບຽບຂໍ້ບັງຄັບຂອງອົງການທ້ອງຖິ່ນຕ້ອງສອດຄ່ອງກັບນະໂຍບາຍ ແລະ ກົດໝາຍຂອງລັດຖະບານກາງ, ການປະຕິບັດຕາມ ຫຼື ທ້າທາຍຕໍ່ອຳນາດລັດຖະບານກາງຖືວ່າເປັນກະບົດ.

ລັດຖະບານກາງຂອງລັດດ່ຽວ ຈຶ່ງເປັນອົງກອນດຽວທີ່ມີອຳນາດໂດຍແທ້ຈິງບັນຫາທີ່ຄວນເຂົ້າໃຈແມ່ນລັດດ່ຽວແບບສາທາລະນະລັດນີ້ບໍ່ຈຳເປັນຈະຕັ້ງຢູ່ດິນແດນຜືນດຽວກັນສະເໝີໄປ, ອາດຈະມີດິນແດນແຍກອອກຈາກກັນເປັນສອງສ່ວນ ຫຼື ຫຼາຍສ່ວນໂດຍມີດິນແດນຂອງລັດອື່ນ ຫຼື ທະເລກັ້ນກາງຢູ່ກໍໄດ້, ຄວາມສຳຄັນຢູ່ທີ່ດິນແດນເຫຼົ່ານີ້ຢູ່ພາຍໃຕ້ລັດຖະບານ ແລະ ອຳນາດອະທິປະໄຕດຽວກັນ ເຊັ່ນ ປະເທດປາກີສະຕັງຕາເວັນຕົກ ໂດຍມີປະເທດອິນເດຍກັ້ນກາງ (ໃນປັດຈຸບັນປະເທດປາກີສະຕັງຕາເວັນຕົກໄດ້ແຍກຕົວອອກມາເປັນປະເທດລັດອິດສະຫຼະຊື່ວ່າປະເທດບັງກະລາເທດແລ້ວຕັ້ງແຕ່ວັນທີ2/3/1971).

3.2 ຮູບການໂຄງຮ່າງແບບລັດລວມ

ກ. ສະຫະພັນທະລັດ

ສະຫະພັນທະລັດ ແມ່ນລັດທີ່ກຳເນີດມາຈາກການລວມຕົວກັນລະຫວ່າງລັດຕ່າງໆ ນັບແຕ່ສອງລັດຂຶ້ນໄປໂດຍຕົກລົງໃຫ້ມີລັດຖະທຳມະນູນສະບັບດຽວກັນ ແລະ ຄວາມສຳພັນລະຫວ່າງລັດເຫຼົ່ານີ້ເປັນໄປຕາມບົດບັນຍັດຂອງລັດຖະທຳມະນູນ ບໍ່ແມ່ນເກີດມາຈາກການເຮັດໃບສົນທິສັນຍາໃດໆຮູບການປົກຄອງຈະແບ່ງອອກເປັນສອງລະດັບຄື ມີລັດຖະບານກາງຂອງສະຫະພັນທະລັດ ແລະລັດຖະບານທ້ອງຖິ່ນຂອງແຕ່ລະລັດ,ລະບົບລັດຖະບານທັງສອງລະດັບນີ້ໄດ້ແຍກອຳນາດໜ້າທີ່ເປັນອິດສະຫຼະຕໍ່ກັນຕາມບົດບັນຍັດຂອງລັດຖະທຳມະນູນ, ແຕ່ລະລັດມີສະພາ, ອົງກອນຝ່າຍບໍລິຫານ ແລະລະບົບສານຂອງຕົນເອງ ເພື່ອເຮັດໜ້າທີ່ກ່ຽວກັບກິດຈະການພາຍໃນທ້ອງຖິ່ນຂອງແຕ່ລະລັດ ເຊັ່ນ ອອກກົດໝາຍປົກຄອງ, ຮັກສາກົດໝາຍ, ບັງຄັບໃຫ້ເປັນໄປຕາມກົດໝາຍຂອງລັດ, ຈັດລະບົບການສຶກສາ, ສາທາລະນະສຸກ, ລະບົບຈໍລະຈອນ, ເກັບພາສີອື່ນໆ, ທັງໜົດນີ້ບໍ່ຄັດກັບລັດຖະທຳມະນູນຂອງສະຫະພັນທະລັດ ຫຼື ລັດຖະບານກາງ ສຳລັບອຳນາດໜ້າທີ່ຂອງລັດຖະບານກາງ ແມ່ນເປັນເລື່ອງລະດັບຊາດເຊິ່ງມີຜົນຕໍ່ປະຊາຊົນທັງປະເທດ ເຊັ່ນ ປ້ອງກັນປະເທດ, ການຕິດຕໍ່ກັບຕ່າງປະເທດ, ກິດຈະການດ້ານເງິນຕາຂອງຕ່າງປະເທດ, ການອອກກົດໝາຍອາຍາ, ໂດຍລັດຖະສະພາຂອງລັດຖະບານກາງ. ອຳນາດໜ້າທີ່ບາງຢ່າງກໍເປັນຄວາມຮັບຜິດຊອບຮ່ວມກັນຂອງລັດຖະບານທັງສອງລະດັບເຊັ່ນ ການພັດພະນາອຸດສາຫະກຳ, ການໃຊ້ຊັບພະຍາກອນທຳມະຊາດການຈັດສັນທີ່ຢູ່ອາໃສໃຫ້ປະຊາຊົນໃນແຕ່ລະລັດ.

ຕົວຢ່າງ ລັດສະຫະພັນທະລັດໄດ້ແກ່ ສະຫະລັດອາເມລິກາ, ອິນເດຍ, ມາເລເຊຍເປັນຕົ້ນ.

ຂ. ສະມາພັນທະລັດ (ຫຼືສຳພັນທະລັດ).

ສະມາພັນທະລັດ ແມ່ນການລວມຕົວ ຂອງລັດແຕ່ສອງລັດຂຶ້ນໄປໂດຍການເຮັດສົນທິສັນຍາຮ່ວມກັນແຕ່ບໍ່ໄດ້ຮ່າງລັດຖະທຳມະນູນ ຫຼື ຈັດຕັ້ງລັດຖະບານຮ່ວມກັນແຕ່ລະລັດຕ່າງກໍມີລະບົບລັດຖະສະພາ - ລະບົບສານແຍກອອກຈາກກັນຕ່າງຫາກ ເພາະວ່າລັດເຫຼົ່ານີ້ເຂົ້າຮ່ວມກັນໂດຍມີຈຸດປະສົງທີ່ຈະເຮັດຢ່າງໃດຢ່າງໜຶ່ງເປັນການຊົ່ວຄາວ ແລະເປັນບາງກໍລະນີເທົ່ານັ້ນ. ເມື່ອຈຸດປະສົງສຳເລັດແລ້ວກໍໝົດໄປເຊັ່ນ ການເປັນພັນທະມິດກັນເພື່ອເຮັດສົງຄາມເປັນຕົ້ນ.ດັ່ງນັ້ນ, ລັດທີ່ມາຮ່ວມກັນແຕ່ລະລັດຈຶ່ງສະຫງວນອຳນາດອະທິປະໄຕຂອງຕົນໄວ້ໃຫ້ຫຼາຍທີ່ສຸດ ໂດຍຍິນຍອມທີ່ຈະກຳຈັດອຳນາດອະທິປະໄຕສະເພາະບາງເລື່ອງເພື່ອປະໂຫຍດຂອງການດຳເນີນການ ແລະ ຈຸດມຸ້ງໝາຍຂອງສະມາພັນຂອງສະມາພັນລັດຕົນຢູ່ໃຕ້ການບັງຄັບຂອງກອງບັນຊາການຮ່ວມຂອງສະມາພັນທະລັດ.ໃນປັດຈຸບັນລັກສະນະຂອງສະມາພັນທະລັດບໍ່ມີອີກແລ້ວແຕ່ຈະກາຍເປັນຮູບອົງການລະຫວ່າງປະເທດທີ່ມີຈຸດປະສົງເພື່ອການຮ່ວມມືລະຫວ່າງລັດໃນກິດຈະການໜຶ່ງ ຫຼື ຫຼາຍ ກິດຈະການກໍໄດ້.

ຕົວຢ່າງ ສະມາພັນທະລັດໃນອາດີດ ໄດ້ແກ່ສະມາພັນທະລັດສະວິດ ແຕ່ ຄ.ສ 1648 ເຖິງ 1848 ແລະສະມາພັນທະລັດອາເມຣິກາ ເຊິ່ງເກີດຈາກການຮ່ວມກັນຂອງລັດອານານິຍົມຂອງອັງກິດ 13 ລັດຈົນເຖິງປີ ຄ.ສ 1787.

ຄ. ສະຫະພາບຂອງລັດແບບມີປະມຸກຮ່ວມກັນ

ສະພາບຂອງລັດແບບມີປະມຸກລັດຮ່ວມກັນ ເປັນຮູບແບບຂອງລັດລວມໃນອາດີດເຊິ່ງມີແຕ່ສອງລັດຂຶ້ນໄປຕົກລົງກັນທີ່ຈະຢູ່ພາຍໃຕ້ອຳນາດຂອງປະມຸກລັດຄົນດຽວກັນ ຕະຫຼອດໄລຍະເວລາທີ່ປະມຸກ

ຄົນນັ້ນຫຼືລາຊາວົງຂອງປະມຸກຄົນນັ້ນຍັງມີອຳນາດຢູ່.ລັດທີ່ມາຮ່ວມກັນຕ່າງກໍບໍ່ຂຶ້ນຕໍ່ຕໍ່ກັນໃນການໃຊ້ອຳນາດອະທິປະໄຕທັງພາຍນອກ ແລະ ພາຍໃນ, ລັດແຕ່ລະລັດມີກົດໝາຍ ແລະ ການຈັດລະບົບບໍລິຫານຂອງຕົນເອງຕາມກົດໝາຍລະຫວ່າງປະເທດ ກໍຍັງຄົງມີສະພາບເປັນເອກະລາດໂດຍສົມບູນ. ໃນຄະນະທີ່ບາງລັດມີລະບອບການປົກຄອງແບບສົມບູນນາຍາສິດທິລາດ (ກົດຄຳສັ່ງຂອງອາຍາ) ອີກລັດໜຶ່ງອາດຈະມີລະບອບການປົກຄອງແບບກະສັດພາຍໃຕ້ລັດຖະທຳມະນູນກໍໄດ້ ລັດແຕ່ລະລັດຈຶ່ງສາມາດເຮັດສົນທິສັນຍາກັບຕ່າງປະເທດໄດ້ໂດຍອິດສະຫຼະພາບ ຫຼື ອາດຈະປະກາດສົງຄາມກັບລັດອື່ນໆ ນອກສະຫະພາບຂອງລັດ ໂດຍບໍ່ມີຜົນຜູກພັນກັບສະມາຊິກອື່ນໆ ຂອງສະຫະພາບຂອງລັດ.

ສະຫະພາບຂອງລັດແບບມີປະມຸກຮ່ວມກັນ ອາດຈະເກີດຂຶ້ນຈາກສາເຫດທາງການເມືອງ ເຊັ່ນ ການອ້າງສິດທິຂອງກະສັດແຫ່ງລາດສະວົງ ຂອງລັດໜຶ່ງເໜືອລາສະບັນລັງທີ່ກຳລັງຫວ່າງຢູ່ຂອງອີກລັດໜຶ່ງໂດຍຖືກຫຼັກການສົບສັນຕິວົງກ່ຽວພັນ ໂດຍເປັນສາຍຍາດກັນ ແລະ ລັດຖະບານກັບປະຊາຊົນຂອງທັງສອງໄດ້ເຫັນດີໃຫ້ຄວາມຍິນຍອມຕໍ່ການອ້າງສິດທິນີ້ ເຊັ່ນ ສະຫະພາບຂອງລັດລະຫ່ວາງລາດສະອານາຈັກອັງກິດກັບລາດສະອານາຈັກຮັນໂນເວີລະຫ່ວາງປີ ຄ.ສ.1714 -1937

ງ. ສະຫະພາບຂອງລັດແບບແທ້ຈິງ

ເປັນຮູບແບບຂອງລັດທີ່ເຕົ້າໂຮມເຂົ້າກັນນັບແຕ່ສອງລັດຂຶ້ນໄປ ແລະ ມີປະມຸກອົງດຽວກັນຄືກັບສະຫະພາບຂອງລັດແບບມີປະມຸກຮ່ວມກັນ ກິດຈະການພາຍໃນຂອງແຕ່ລະລັດຕ່າງກໍເປັນອິດສະຫຼະຕໍ່ກັນຢ່າງເຕັມສ່ວນມີລັດຖະບານ, ມີສະພາ, ມີເຄື່ອງໝາຍສະເພາະມີລັດຖະທຳມະນູນເປັນຂອງຕົວເອງ. ແຕ່ກິດຈະການພາຍນອກເປັນອັນໜຶ່ງອັນດຽວກັນການເຮັດສົນທິສັນຍາກັນກັບຕ່າງປະເທດຕ້ອງເຮັດໃນນາມຂອງສະຫະພາບ ເຊັ່ນ ສະຫະພາບອອດສະເຕເລຍ - ຮົງກາລີ ເຊິ່ງຮ່ວມກັນເປັນເວລາເຖິງ 50 ປີລະຫວ່າງ (ປີ ຄ.ສ.1867 - 1978)

ປັດຈຸບັນຮູບແບບຂອງລັດແບບລັດລວມໃນຕົວຈິງມີພຽງແຕ່ຮູບແບບດຽວ ຄື ສະຫະພັນທະລັດ ສ່ວນຮູບແບບອື່ນໆນອກຈາກນີ້ແມ່ນບໍ່ມີອີກແລ້ວ.

ຄຳຖາມ

1. ອຳນາດສັງຄົມ ແລະຂໍ້ກຳນົດຂອງການປະພຶດສະໄໝສັງຄົມບໍ່ທັນມີຊົນຊັ້ນແມ່ນແນວໃດ ?
2. ທາດແທ້ຂອງລັດແມ່ນແນວໃດ ?
3. ຄວາມໝາຍ ແລະ ນິຍາມຂອງລັດແມ່ນແນວໃດ ?
4. ຕົ້ນກຳເນີດຂອງລັດມີແນວໃດ ?
5. ຈົ່ງອະທິບາຍວິວັດທະນາການຂອງລັດມີຄືແນວໃດ ?
6. ລັດມີຈັກຮູບແບບ ? ແຕ່ລະຮູບແບບມີຄືແນວໃດ ?

ບົດທີ 2
ຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ

1. ຕົ້ນກຳເນີດ ແລະ ທາດແທ້ຂອງກົດໝາຍ

1.1 ຄວາມສຳນຶກກ່ຽວກັບກົດໝາຍ

ກົດໝາຍ ແມ່ນຂໍ້ກຳນົດທີ່ລັດວາງອອກ ແລະປະກາດໃຊ້ເຊິ່ງມີຜົນບັງຄັບສຳລັບພົນລະເມືອງທັງໝົດໃນທົ່ວປະເທດ. ມີຄວາມຊັດເຈນທາງດ້ານຮູບການຮັບປະກັນໂດຍລັດ ແລະ ສອ່ງແສງເຖິງເຈດຈຳນົງຂອງຊົນຊັ້ນທີ່ຄອບຄອງທາງດ້ານເສດຖະກິດ.

1.2 ຕົ້ນກຳເນີດຂອງກົດໝາຍ

ໃນເມື່ອລັດປະກົດຕົວຂຶ້ນ ກົດໝາຍກໍກຳເນີດຂຶ້ນເພື່ອເປັນເຄື່ອງມືປົກປ້ອງສິດຜົນປະໂຫຍດໃຫ້ລັດ. ລັດຢາກຄົງຕົວຢູ່ໄດ້ຕ້ອງມີບັນດາຂໍ້ກຳນົດຕ່າງໆທີ່ມີຜົນບັງຄັບທົ່ວໄປທີ່ຮັບປະກັນການຄອບຄອງທາງດ້ານຊົນຊັ້ນ ພ້ອມທັງຮັບປະກັນດັດປັບສາຍພົວພັນສັງຄົມ ເຊິ່ງບັນດາຂໍ້ກຳນົດທີ່ດຳເນີນດວ້ຍຍົດບາດຢ່າງຕັ້ງໜ້າ ແລະ ແຂງແຮງດັ່ງກ່າວນັ້ນແມ່ນກົດໝາຍນັ້ນເອງ.

ກົດໝາຍກຳເນີດຂຶ້ນໄດ້ສອງເສັ້ນທາງຄື:

- ເກີດມາຈາກການຫັນປ່ຽນຂໍ້ກຳນົດເອກະພາບ (ຂໍ້ກຳນົດສັງຄົມປະຖົມບູຮານເຊິ່ງມີລັກສະນະຮີດຄອງຂອງປະຊາຊົນ) ໃຫ້ເປັນກົດໝາຍຮັບໃຊ້ໃນທົ່ວສັງຄົມ.

- ເກີດມາຈາກການອອກກົດໝາຍໂດຍລັດບັນດານິຕິກຳຕ່າງໆ ຂໍ້ກຳນົດທີ່ສະແດງອອກໃນຮູບດຳລັດ, ລັດຖະບັນຍັດ, ລັດຖະດຳລັດ, ມະຕິກອງປະຊຸມ, ຄຳສັ່ງຂໍ້ຕົກລົງ ແລະ ອື່ນໆ ໄດ້ກຳເນີດຂຶ້ນພາຍຫຼັງທີ່ລັດໄດ້ອອກເອກະສານກົດໝາຍຮັບຮອງ ແລະ ໄດ້ປະກາດໃຊ້.

1.3 ທາດແທ້ຂອງກົດໝາຍ

ທາດແທ້ຂອງກົດໝາຍ ແມ່ນສອ່ງແສງອອກໃນການມີຊົນຊັ້ນຂອງມັນ. ກົດໝາຍແມ່ນມາດຕະການໜຶ່ງທີ່ດັດປັບສາຍພົວພັນສັງຄົມ ເຊິ່ງມີກຳລັງແຮງທີ່ເຂັ້ມແຂງຂອງຊົນຊັ້ນ ແລະ ຮັບປະກັນໂດຍລັດ.

ມາກ - ອັງແກນ ໄດ້ຂຽນໄວ້ກ່ຽວກັບກົດໝາຍທຶນນິຍົມວ່າ "ກົດໝາຍຂອງພວກເຈົ້າແມ່ນພຽງແຕ່ເຈດຈຳນົງຂອງຊົນຊັ້ນພວກເຈົ້າທີ່ຍົກຂຶ້ນເພື່ອເປັນກົດໝາຍ, ເນື້ອໃນຂອງເຈດຈຳນົງດັ່ງກ່າວຖືກກຳນົດຂຶ້ນໂດຍເງື່ອນໄຂທາງດ້ານວັດຖຸແຫ່ງຊີວິດຂອງພວກເຈົ້າ "

ອັນນັ້ນເປັນອັນພິສູດໃຫ້ຮັບຮູ້ໄດ້ຢ່າງຈະແຈ້ງວ່າ ທາດແທ້ຂອງກົດໝາຍແມ່ນເຈດຈຳນົງຂອງຊົນຊັ້ນຄອບຄອງທີ່ຍົກຂຶ້ນເປັນກົດໝາຍສະແດງອອກໃນສັງຄົມຂ້າທາດທາສັງຄົມນາຍທຶນ, ກົດໝາຍຂອງເຂາຍອ່ມຈະສະແດງອອກໃຫ້ເຫັນເຖິງທາດແທ້ຂອງການມີຊົນຊັ້ນໃນສັງຄົມຂອງມັນຢ່າງເປີດເຜີຍ.

ໃນສັງຄົມທີ່ມີຊົນຊັ້ນ ກົດໝາຍທີ່ມີທີ່ຕັ້ງອັນດັບໜຶ່ງໃນການວາງລະບຽບໃສ່ສັງຄົມ, ກົດໝາຍແມ່ນຜົນທີ່ຈຳເປັນ ແລະ ຫຼີກລ່ຽງບ່ໄດ້ແຫ່ງລະບອບເສດຖະກິດສັງຄົມທີ່ມີຊົນຊັ້ນ, ຖ້າປາສະຈາກກົດໝາຍ ແລະ ລັດແລ້ວຊົນຊັ້ນຄອບຄອງກໍຈະບ່ສາມາດປົກປັກຮັກສາ ແລະ ເພີ່ມທະວີການຄອບຄອງຂອງຕົນໄດ້.

ກົດໝາຍອຳນວຍຄວາມສະດວກໃນການວາງສາຍພົວພັນ ທີ່ຄອບງຳທາງດ້ານກຳມະສິດ, ພື້ນຖານຕົ້ນຕໍຂອງລະບຽບສັງຄົມທີ່ກ່ຽວຂ້ອງ, ຮັບປະກັນການປົກປັກຮັກສາສາຍພົວພັນທາງສັງຄົມທີ່ສອດ

ຄອ່ງກັບຜົນປະໂຫຍດຂອງຊົນຊັ້ນຄອບຄອງແລະຍົກເອົາສາຍພົວພັນທັງໝົດເຫຼົ່ານີ້ຂຶ້ນເປັນສາຍພົວພັນ ທີ່ແຕະຕອ້ງບ່ໄດ້. ຊົນຊັ້ນຄອບຄອງນຳໃຊ້ກົດໝາຍເພື່ອເຮັດໃຫ້ເຈດຈຳນົງຂອງລັດ ມີຜົນບັງຄັບລວມ ແລະ ນຳເອົາເຈດຈຳນົງດັ່ງກ່າວນີ້ໄປສູ່ປະຊາຊົນທັງໝົດ.

2. ບົດບາດ ແລະ ຄຸນປະໂຫຍດຂອງກົດໝາຍ

2.1 ການພົວພັນລະຫວ່າງກົດໝາຍກັບເສດຖະກິດ, ການເມືອງ ແລະ ຂໍ້ກຳນົດຂອງສັງຄົມ

2.1.1 ການພົວພັນລະຫວ່າງກົດໝາຍ, ເສດຖະກິດ ແລະ ການເມືອງ

ກົດໝາຍຖືກກຳນົດໃນບັ້ນທ້າຍໂດຍເສດຖະກິດ ຫຼື ຄວາມຮຽກຮ້ອງຕອ້ງການຂອງເສດຖະກິດ, ມັນສອ່ງແສງອອກຜ່ານເຈດຈຳນົງຂອງລັດ, ກົດໝາຍຖືກກຳນົດໂດຍເງື່ອນໄຂທາງດ້ານວັດຖຸຂອງຊີວິດ ສັງຄົມຂອງຊົນຊັ້ນຄອບຄອງ ເຖິງຢ່າງໃດກໍຕາມສາຍພົວພັນລະຫວ່າງເສດຖະກິດ ແລະ ກົດໝາຍນັ້ນບ່ ແມ່ນສາຍພົວພັນໂດຍກົງ. ຄວາມຮຽກຮ້ອງຕ້ອງການທາງດ້ານເສດຖະກິດນັ້ນແມ່ນສ່ອງແສງອອກຜ່ານ ເຈດຈຳນົງຂອງລັດ.

ກົດໝາຍກໍກະທົບໃສ່ເສດຖະກິດຢ່າງຫ້າວຫັນ. ໃນສັງຄົມທີ່ມີຊົນຊັ້ນກົດໝາຍແມ່ນພາຫະນະທີ່ ຈຳເປັນເພື່ອປະກັນການວາງລະບຽບໃສ່ຂະບວນວິວັດຂອງເສດຖະກິດ ກຳນົດສາຍພົວພັນເສດຖະກິດທີ່ ຄອບຄອງ, ປົກປັກຮັກສາ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ແຕ່ຖ້າຄວາມຮຽກຮ້ອງຂອງ ເສດຖະກິດຫາກສອ່ງແສງຢ່າງບ່ຖືກຕອ້ງຢູ່ໃນກົດໝາຍ ໃນເວລານັ້ນກົດໝາຍອາດເປັນສິ່ງທ່ວງດຶງການ ຂະຫຍາຍຕົວຂອງເສດຖະກິດ.

ກົດໝາຍມີເນື້ອໃນການເມືອງ ເພາະມັນພົວພັນກັບການເມືອງກົດໝາຍສອ່ງແສງເຖິງການເມືອງ ທີ່ຄອບຄອງ, ການເມືອງຂອງລັດເທ່ານັ້ນ. ເລນິນ ໄດ້ຂຽນວ່າ " ກົດໝາຍແມ່ນມາດຕະການການເມືອງ, ແມ່ນການເມືອງ ".

2.1.2 ການພົວພັນລະຫວ່າງລັດ ແລະ ກົດໝາຍ

ລັດ ແລະ ກົດໝາຍແມ່ນພາກສວ່ນໜຶ່ງຂອງໂຄງບົນ ທີ່ມີສາຍພົວພັນກັນຢ່າງໃກ້ສິດ, ລັດ ແລະ ກົດໝາຍແມ່ນພາຫະນະຄອບຄອງທາງດ້ານການເມືອງ.ຍ້ອນແນວນັ້ນກົດໝາຍຈ່ຶງມີເນື້ອໃນການເມືອງ ໂດຍກົງ. ການເມືອງເປັນສິ່ງເຕ້ົາໂຮມຂອງລັດ ແລະ ກົດໝາຍເຂ້ົາກັນ, ລັດ ແລະກົດໝາຍເກີດຂຶ້ນ, ດຳລົງຄົງຕົວ, ເຄື່ອນໄຫວ ແລະ ດັບສູນໄປພ້ອມໆກັນ, ແຕ່ວ່າລັດ ແລະ ກົດໝາຍແມ່ນປະກົດການທາງ ດ້ານສັງຄົມທີ່ມີການກະທົບເຊ່ິງກັນ ແລະ ກັນ, ລັດຂຶ້ນກັບກົດໝາຍ ແລະ ກົດໝາຍກ່ໍຂຶ້ນກັບລັດ. ກົດ ໝາຍແມ່ນເຄ່ືອງມືອັນຈຳເປັນຢູ່ໃນກຳມືຂອງລັດ, ອັນນ້ີໄດ້ສ່ອງແສງໃຫ້ເຫັນວ່າ ລັດຂຶ້ນກັບກົດໝາຍ. ລັດບ່ສາມາດປາສະຈາກກົດໝາຍໄດ້, ລັດນຳໃຊ້ກົດໝາຍເພື່ອປະຕິບັດພາລະໜ້າທ່ີອັນຈຳເປັນ, ກົດ ໝາຍເປັນພາຫະນະຈັດຕ້ັງອຳນາດການເມືອງຂອງລັດ, ເຖິງຢ່າງໃດກໍຕາມກົດໝາຍກໍເປັນໄປບ່ໄດ້ຖ້າ ວ່າບ່ມີລັດ ອ.ອ. ເລນິນ ໄດ້ເວ້ົາວ່າ "ກົດໝາຍບ່ເປັນຫຍັງໄດ້ຖ້າປົດສະຈາກກົງຈັກທ່ີສາມາດບັງຄັບໃຫ້ ເຄົາລົບຂໍ້ກຳນົດຂອງກົດໝາຍ." ຂໍ້ກຳນົດຂອງກົດໝາຍອອກມາຈາກລັດ, ລັດເປັນຜູ້ເຮັດໃຫ້ຂໍ້ກຳນົດກົດ ໝາຍປາກົດຕົວອອກຢູ່ໃນນິຕິກຳສະເພາະ ແລະ ຮັບປະກັນມັນດວ້ຍກຳລັງບັງຄັບຂອງຕົນ. ການທ່ີກົດ ໝາຍຂ້ຶນກັບລັດສະແດງອອກໃນຮູບການປະຕິບັດພາລະໜ້າທ່ີຂອງລັດ ເຊ່ິງສ້າງກົດໝາຍ, ໝາຍຄວາມ ວ່າລັດເປັນຜູ້ວາງອອກ, ປ່ຽນແປງ ແລະ ລົບລ້າງຂໍ້ກຳນົດຂອງກົດໝາຍ, ເຮັດໃຫ້ຂໍ້ກຳນົດກົດໝາຍປະ

ກົດຕົວຍອກມາໃນນິຕິກຳລະເພາະ (ການເຄື່ອນໄຫວປະຕິບັດກົດໝາຍ) ນຳໃຊ້ມາດຕະການເພື່ອຮັບປະກັນຂໍ້ກຳນົດຂອງກົດໝາຍ.

2.1.3 ການພົວພັນລະຫວ່າງກົດໝາຍກັບຂໍ້ກຳນົດອື່ນໆຂອງສັງຄົມ.

ການພົວພັນລະຫວ່າງກົດໝາຍ ແລະ ຂໍ້ກຳນົດອື່ນໆຂອງສັງຄົມມີຄວາມແຕກຕ່າງອັນຕົ້ນຕໍຢູ່ບ່ອນວ່າ ກົດໝາຍນັ້ນຍາມໃດກໍເປັນສິ່ງດັດປັບ ສາຍພົວພັນສັງຄົມທີ່ມີຊົນຊັ້ນ. ອັນນີ້ໄດ້ມີຄວາມໝາຍວ່າ:

- ກົດໝາຍດຳລົງຄົງຕົວຢູ່ໄດ້ໃນສັງຄົມທີ່ມີຊົນຊັ້ນ ແລະ ເປັນເຄື່ອງມືແຫ່ງການຄອບຄອງທາງດ້ານຊົນຊັ້ນ.

- ການກຳເນີດ ແລະ ການເຄື່ອນໄຫວຂອງກົດໝາຍນັ້ນບໍ່ສາມາດຕັດແຍກອອກຈາກລັດ ໂດຍສະເພາະກໍແມ່ນອອກມາຈາກລັດ ແລະ ຮັບປະກັນໂດຍລັດ, ຂໍ້ກຳນົດອື່ນໆຂອງສັງຄົມນັ້ນເຊັ່ນ ຂໍ້ກຳນົດຂອງຈັນຍາທຳ, ຂໍ້ກຳນົດຂອງອົງການຈັດຕັ້ງສັງຄົມ, ຮີດຄອງບໍ່ມີສາຍພົວພັນອັນໃກ້ຊິດກັບລັດ.

- ໃນປະເທດໃດໜຶ່ງກົດໝາຍໄດ້ປະກອບເປັນລະບົບເອກະພາບຂອງຂໍ້ກຳນົດ, ຂໍ້ກຳນົດອື່ນໆຂອງສັງຄົມ ສ່ວນໃຫຍ່ແລ້ວບໍ່ປະກອບເປັນລະບົບທີ່ເອກະພາບ ເຊັ່ນ ຮີດຄອງປະເພນີຂອງແຕ່ລະທ້ອງຖິ່ນບໍ່ຄືກັນ.

2.2 ບົດບາດຂອງກົດໝາຍ

ບົດບາດສຳຄັນຂອງກົດໝາຍ ແມ່ນເພື່ອປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໂດຍສະເພາະໃນສັງຄົມທີ່ມີຊົນຊັ້ນກົດໝາຍມີທີ່ຕັ້ງອັນດັບໜຶ່ງໃນການວາງລະບຽບໃນສັງຄົມ;ຖ້າມີລັດບໍ່ມີກົດໝາຍຊົນຊັ້ນທີ່ຄອບຄອງສັງຄົມກໍບໍ່ສາມາດປົກປັກຮັກສາ ແລະ ເພີ່ມທະວີຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມຂອງຕົນໄດ້.

2.3 ຄຸນປະໂຫຍດຂອງກົດໝາຍ

ກົດໝາຍແມ່ນທິດທາງອັນສຳຄັນໃນການວາງລະບຽບໃສ່ສາຍພົວພັນສັງຄົມ ແລະ ມີການພົວພັນຢ່າງສະໜິດແໜ້ນກັບພາລະໜ້າທີ່ຂອງລັດ, ຖ້າເວົ້າສະເພາະແລ້ວກົດໝາຍມີຄຸນປະໂຫຍດສອງຢ່າງ ຄື

- ຄຸນປະໂຫຍດໃນການວາງລະບຽບ ແລະ ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍດັ່ງກ່າວໃນສັງຄົມໃຫ້ດີຂຶ້ນ.

- ມີຄຸນປະໂຫຍດສະໜັບສະໜູນ ແລະ ເສີມສ້າງແນວທາງແຜນນະໂຍບາຍຂອງລັດ - ຂອງພັກການເມືອງທີ່ກຳອຳນາດໃນແຕ່ລະໄລຍະນັ້ນໃຫ້ເປັນອັນລະອຽດ.

ຈາກຄຸນປະໂຫຍດ ແລະ ຄວາມສຳຄັນດັ່ງກ່າວຈຶ່ງມີຄວາມຈຳເປັນໃຫ້ພວກເຮົາຕ້ອງໄດ້ຮັບເພາະວ່າຢັ່ນດາຂໍ້ກຳນົດທີ່ໄດ້ລະບຸໄວ້ໃນກົດໝາຍຕ່າງໆນັ້ນ ລ້ວນແຕ່ມີທັງຂໍ້ອະນຸຍາດ ແລະ ຂໍ້ຫ້ามກ່ຽວກັບການປະພຶດຂອງຄົນເຮົາ.

ກົດໝາຍມີຄຸນປະໂຫຍດທາງດ້ານສັງຄົມຢ່າງໜວງໜາຍເຊິ່ງມີຄວາມໝາຍວ່າກົດໝາຍເປັນສິ່ງຄ້ຳປັນສາຍພົວພັນສັງຄົມເປັນປົກໃຈທີ່ວາງລະບຽບມີໜ້າທີ່ຮັບປະກັນການມີການຈັດຕັ້ງຄວາມເປັນລະບຽບຮຽບຮ້ອຍຂອງຊີວິດສັງຄົມ ແລະປົນທັດສະນະນີ້, ກໍແມ່ນພື້ນຖານຂອງຊີວິດອັນເປັນປົກກະຕິຂອງຊີ

ວິດສັງຄົມ, ເຊິ່ງຖືກກຳນົດໂດຍສາຍພົວພັນທີ່ຄອບຄອງທີ່ກ່ຽວຂ້ອງໂດຍເຈດຈຳນົງ ແລະ ຜົນປະໂຫຍດ ຂອງຊົນຊັ້ນປົກຄອງ.

ອີງໃສ່ພຶດຕິກຳຕົວຈິງແລ້ວ ກົດໝາຍມີຄຸນປະໂຫຍດເປັນມາດຖານການປະພຶດທີ່ຊອບທຳ ແລະ ບໍ່ຊອບທຳຂອງສັງຄົມ. ດັ່ງນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ພົນລະເມືອງທຸກຄົນຕ້ອງປະພຶດຕົນໃຫ້ສອດຄ່ອງກັບ ຂໍ້ກຳນົດຂອງກົດໝາຍຖ້າຫາກການເຄື່ອນໄຫວຂອງບຸກຄົນໃດໜຶ່ງຫາກບໍ່ສອດຄ່ອງກັບຂໍ້ກຳນົດດັ່ງກ່າວ ມັນຈຳເປັນຕ້ອງໄດ້ປະຕິບັດຕາມມາດຕະການບັງຄັບຂອງກົດໝາຍເພື່ອດັດປັບຄວາມເປັນລະບຽບຮຽບ ຮ້ອຍຂອງສັງຄົມ.

3. ນິຕິທຳ

3.1 ນິຕິທຳ ແລະ ທາດແທ້ຂອງນິຕິທຳ

- ນິຕິທຳ ແມ່ນການເຄົາລົບລະບຽບກົດໝາຍຢ່າງເຂັ້ມງວດແລະເອກະພາບໂດຍອົງການຈັດຕັ້ງ ລັດ - ອົງການຈັດຕັ້ງສັງຄົມ, ພະນັກງານ, ລັດຖະກອນ ແລະ ພົນລະເມືອງທຸກຄົນ.

- ທາດແທ້ຂອງນິຕິທຳ ແມ່ນຄວາມຮຽກຮ້ອງຕ້ອງການໃຫ້ເຄົາລົບກົດໝາຍຢ່າງເຂັ້ມງວດ. ເຊິ່ງ ຄວາມຮຽກຮ້ອງຕ້ອງການດັ່ງກ່າວໄດ້ສະແດງອອກໂດຍສອດຄ່ອງ ແລະ ຜ່ານແນວທາງນະໂຍບາຍຂອງ ພັກການເມືອງທີ່ກຳອຳນາດ ເຊິ່ງປະກົດອອກໃນການໂຄສະນາ - ການສຶກສາອົບຮົມຈັດຕັ້ງປະຕິບັດກົດ ໝາຍ, ສະກັດກັ້ນການລະເມີດກົດໝາຍ ພ້ອມກັນນັ້ນຕ້ອງວາງມາດຕະການໃສ່ຜູ້ລະເມີດກົດໝາຍ.

3.2 ເນື້ອໃນພື້ນຖານຂອງນິຕິທຳ

ຜູ້ທີ່ເຄົາລົບກົດໝາຍ ແມ່ນອົງການອຳນາດລັດ, ອົງການບໍລິຫານ, ເຈົ້າໜ້າທີ່ຕຳຫຼວດເຖິງພົນ ລະເມືອງທຸກຄົນເຊິ່ງສະແດງເຖິງສິດສະເໝີພາບຕໍ່ໜ້າກົດໝາຍ.

- ທຸກໆກົດໝາຍ ທຸກຂໍ້ກຳນົດ ແລະ ລະບຽບການຕ່າງໆຂອງສັງຄົມຕ້ອງໄດ້ຮັບການປະຕິບັດ ຢ່າງເຂັ້ມງວດຈາກປະຊາຊົນໃນທົ່ວປະເທດ.

- ກົດໝາຍ ແລະ ນິຕິທຳມີການຕິດພັນກັນຢ່າງແໜ້ນແຟ້ນ. ມີກົດໝາຍແຕ່ບໍ່ມີນິຕິທຳກໍຈະ ບໍ່ມີຜົນສັກສິດ, ແຕ່ນິຕິທຳພັດຮຽກຮ້ອງໃຫ້ມີກົດໝາຍເປັນພື້ນຖານໄວ້ກ່ອນ.

ດັ່ງນັ້ນ, ການເພີ່ມທະວີນິຕິທຳແມ່ນພາລະໜ້າທີ່ຂອງກົງຈັກລັດສ່ວນອົງການຈັດຕັ້ງພັກ. ອົງການ ຈັດຕັ້ງມະຫາຊົນຕ້ອງເຮັດທຸກສິ່ງທຸກຢ່າງເພື່ອຮັບປະກັນການເຄົາລົບ, ການປັບປຸງ,ການສຶກສາອົບຮົມ ກົດໝາຍໃຫ້ແກ່ຊາວຜູ້ອອກແຮງງານ ແລະ ມະຫາຊົນໃຫ້ຕື່ນຕົວປະຕິບັດ ແລະ ເຄົາລົບຕໍ່ກົດໝາຍຢ່າງ ເຂັ້ມງວດ.

ຄຳຖາມ

1. ຕົ້ນກຳເນີດຂອງກົດໝາຍແມ່ນແນວໃດ ? (ນິຍາມກົດໝາຍ)
2. ກົດໝາຍມີທາດແທ້ແນວໃດ ?
3. ກົດໝາຍມີບົດບາດ ແລະ ມີຄຸນປະໂຫຍດແນວໃດ ?
4. ລັດ ແລະ ກົດໝາຍມີການພົວພັນກັນແນວໃດ?
5. ນິຕິທຳແມ່ນຫຍັງ?
6. ນິຕິທຳມີທາດແທ້ແນວໃດ ? ເນື້ອໃນພື້ນຖານຂອງນິຕິທຳມີຄືແນວໃດ ?

ບົດທີ 3

ລັດ ແລະ ກົດໝາຍແຫ່ງ ສ.ປ.ປ .ລາວ

1. ຕົ້ນກຳເນີດ , ທາດແລະ ໜ້າທີ່ຂອງລັດ ສ.ປ.ປລາວ.

1.1. ຕົ້ນກຳເນີດຂອງລັດ ສ.ປ.ປລາວ.

ພາຍໃຕ້ລະບອບການປົກຄອງຂອງພວກລ່າເມືອງຂຶ້ນທັງເກົ່າ ແລະ ໃໝ່ຂອງພວກຮຸກຮານນັ້ນ ປະຊາຊົນທຸກເຜົ່າໄດ້ຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ, ຮອບດ້ານ. ສະພາບທັງໝົດນັ້ນປະຊາຊົນລາວບັນດາເຜົ່າຈຳຕ້ອງຢູ່ພາຍໃຕ້ອຳນາດລັດ ແລະ ກົດໝາຍຂອງຈັກກະພັດຮຸກຮານພ້ອມທັງຕົກຢູ່ໃຕ້ການປົກຄອງຂອງກົດໝາຍໃນລະບອບສັກດິນາ. ດ້ວຍເຫດນັ້ນປະຊາຊົນລາວບັນດາເຜົ່າບໍ່ມີທາງອື່ນນອກຈາກເຕົ້າໂຮມຄວາມສາມັກຄີປະຊາຊົນທົ່ວຊາດລຸກຂຶ້ນຕໍ່ສູ້ກັບບັນດາຈັກກະພັດດັ່ງກ່າວ ເພື່ອນຳເອົາຄວາມເປັນເອກະລາດ, ນຳເອົາອຳນາດມາສູ່ກຳມືຂອງປະຊາຊົນຊາວຜູ້ອອກແຮງງານລາວບັນດາເຜົ່າ.

ໂດຍໃຕ້ການນຳພາອັນປົຊາສາມາດ, ສະຫງ່າຜ່ອງໃສຂອງພັກຄອມມຸນິດອິນດູອິນໃນເມື່ອກ່ອນກໍຄືພັກປະຊາຊົນປະຕິລາວປະຈຸບັນບວກໃສ່ນ້ຳໃຈອັນອົງອາດກ້າຫານແລະຄວາມສາມັກຄີຂອງປະຊາຊົນບັນດາເຜົ່າພາຍໃນຊາດການປະຕິລາວຈຶ່ງໄດ້ຮັບໄຊຊະນະເປັນຂັ້ນໆມາ. ໃນທີ່ສຸດລັດທີ່ລ່າເມືອງຂຶ້ນທີ່ໄດ້ປົກຄອງລາວມາເປັນເວລາຍາວນານນັ້ນກໍໄດ້ສິ້ນສຸດລົງໃນທ້າຍປີ 1975 .

ວັນທີ2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄດ້ຕົກລົງລົບລ້າງລະບອບລາຊາທິປະໄຕແລ້ວສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນແທນອັນນີ້ຄືລັດທີ່ເປັນຕົວແທນອັນໜຶ່ງອັນໜຶ່ງອັນດຽວ ຂອງປະຊາຊົນບັນດາເຜົ່າພາຍໃຕ້ການນຳພາຂອງພັກ. ການກຳເນີດຂອງລັດປະຊາທິປະໄຕປະຊາຊົນລາວ ແມ່ນໝາກຜົນການຕໍ່ສູ້ປະຕິວັດອັນຍືດເຍື້ອຍາວນານ, ເຕັມໄປດ້ວຍຄວາມຫຍຸ້ງຍາກລຳບາກ ແລະ ຄວາມເສຍສະຫຼະຂອງກອງທັບ ແລະ ປະຊາຊົນບັນດາເຜົ່າເພື່ອປົດປ່ອຍຊາດ .

1.2 ທາດແທ້ຂອງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ .

ລັດແຫ່ງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ລັດປະຊາທິປະໄຕປະຊາຊົນ, ແມ່ນພາກສ່ວນໜຶ່ງຂອງໂຄງປະກອບຂອງລະບົບການເມືອງ, ແຕ່ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ.

ພາລະກຳປະຫວັດສາດຂອງລັດ ແມ່ນຈັດຕັ້ງ , ປຸກລະດົມຊຸກຍູ້ປະຊາຊົນບັນດາເຜົ່າ ເພື່ອປົກປັກຮັກສາຄວາມເປັນເອລາດແຫ່ງຊາດ ແລະ ອຳນາດອະທິປະໄຕຂອງຊາດໂດຍຕິດພັນກັບພາລະກິດສ້າງສາປະເທດຊາດ ຕາມທິດກ້າວຂຶ້ນສັງຄົມນິຍົມ, ກຳລັງແຮງຂອງລັດ, ພື້ນຖານການເມືອງຂອງລັດແມ່ນກ້ອນກຳລັງຄວາມສາມັກຄີເປັນອັນໜຶ່ງອັນດຽວ ຂອງປະຊາຊົນລາວທົ່ວຊາດ ບົນພື້ນຖານພັນທະພາບກຳມະກອນ - ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນປະຕິວັດພາຍໃຕ້ການນຳພາຂອງພັກ.

ສະນັ້ນ, ທາດແທ້ຂອງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະແດງອອກຢູ່ບ່ອນວ່າເປັນລັດຂອງປະຊາຊົນ,ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃຕ້ການນຳພາຂອງຊົນຊັ້ນກຳມະກອນເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກນນຳ ດັ່ງໄດ້ກ່າວໄວ້ໃນມາດ

ຕາ 2 ແລະມາດຕາ 3 ຂອງລັດຖະທຳມະນູນ. ນັບແຕ່ກົດໝາຍ, ກົນໄກ ແລະນະໂຍບາຍຕ່າງໆຈົນເຖິງບັນດາຫຼັກການການຈັດຕັ້ງ ແລະ ການເຄື່ອນໄຫວຂອງລັດລ້ວນແລ້ວແຕ່ເຊື່ອມຊຶມແນວຄິດທັດສະນະຂອງຊົນຊັ້ນກຳມະກອນ ແນໃສ່ຮັບໃຊ້ຜົນປະໂຫຍດຂອງຊາດຂອງປະຊາຊົນບັນດາເຜົ່າ, ພາລະກຳປະຫວັດສາດຂອງລັດແມ່ນຈັດຕັ້ງເຕົ້າໂຮມທຸກກຳລັງເພື່ອຄຸ້ມຄອງປະເທດຊາດ, ສ້າງບັນດາປະຖົມປັດໃຈໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວ.

ການເຊື່ອມຊຶມທາດແທ້ຂອງລັດໝາຍຄວາມວ່າ ຕ້ອງຍຶດໝັ້ນລັດທິມາກ-ເລນິນ, ຍຶດໝັ້ນບິດບາດການນຳພາຂອງພັກ, ຍຶດໝັ້ນພາລະກິດປ່ຽນແປງໃໝ່ ແລະຍຶດໝັ້ນຕໍ່ເສັ້ນທາງກ້າວຂຶ້ນທີ່ເລືອກໄວ້. ໃນວິວັດການປ່ຽນແປງໃໝ່ນີ້ຕ້ອງມີສະຕິລະມັດ ລະວັງ ຮອບຄອບຖີ່ຖ້ວນ ແລະ ເດັດດ່ຽວຕໍ່ສູ້ກັບທັດສະນະຕ່າງໆທີ່ບໍ່ຈະແຈ້ງ, ປະກົດການຜິດເຂວເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ການຮ່າງກົດໝາຍ ແລະ ນະໂຍບາຍຕ່າງໆຫັນເຫອອກຈາກແນວທາງຂອງພັກ.

ການເຊື່ອມຊຶມ ຫຼື ເນັ້ນໜັກທາດແທ້ຊົນຊັ້ນຂອງລັດບໍ່ໝາຍວ່າເປັນການແຍກພັກ, ແຍກພວກ, ໜັກໄປດ້ານຄວາມຮຸນແຮງປາບປາມ, ລັດ, ເຊິ່ງຢູ່ພາຍໃຕ້ການນຳພາຂອງພັກດຳເນີນສອງໜ້າທີ່ຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນ ມັນແມ່ນລັດເປັນຕົວແທນໃຫ້ແກ່ຊາດ, ໃຫ້ແກ່ປະຊາຊົນບັນດາເຜົ່າຢ່າງແທ້ຈິງ, ມີບົດບາດຜະເດັດການຕໍ່ອິດທິກຳລັງປໍລະປັກທີ່ທໍລະຍົດຕໍ່ປະເທດຊາດ, ປະຕິບັດປະຊາທິປະໄຕຕໍ່ປະຊາຊົນ ແລະຕໍ່ບັນດາປະເທດທີ່ເປັນພັນທະມິດ, ແຕ່ພາລະບົດບາດພື້ນຖານແມ່ນຈັດຕັ້ງແລະກໍ່ສ້າງສັງຄົມໃໝ່ຕາມທິດສັງຄົມນິຍົມເພື່ອນຳເອົາຄວາມຢູ່ດີກິນດີມາໃຫ້ແກ່ປະຊາຊົນ ແລະ ເຮັດໃຫ້ປະເທດຊາດເຂັ້ມແຂງ.

1.3 ພາລະໜ້າທີ່ຂອງລັດ ສ ປ ປ ລາວ

ກ. ພາລະໜ້າທີ່ພາຍໃນ

ພາລະໜ້າທີ່ພື້ນຖານຂອງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂອງພວກເຮົາແມ່ນປະຕິບັດສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ຕະຫຼອດໄລຍະ 20 ກ່ວາປີມານີ້ລັດໄດ້ແບກຫາບພາລະໜ້າທີ່ອັນໜັກໜ່ວງໄດ້ຈັດຕັ້ງຄຸ້ມຄອງປະຊາຊົນບັນດາເຜົ່າປະຕິບັດສອງໜ້າທີ່ຍຸດທະສາດດັ່ງກ່າວ, ໂດຍມີການນຳພາຂອງພັກ, ມີການສະໜັບສະໜູນຂອງປະຊາຊົນ ລັດໄດ້ນັບມື້ເຕີບໃຫຍ່ຂະຫຍາຍຕົວເຂັ້ມແຂງ ແລະ ສຳເລັດຜົນອັນໃຫຍ່ຫຼວງໃນທຸກຂົງເຂດຂອງຊີວິດສັງຄົມ, ປະກອບສ່ວນເຂົ້າໃນພາລະກິດລວມຂອງການປະຕິວັດ.

ໃນພາລະກິດປ່ຽນແປງໃໝ່ ລັດຍັງສືບຕໍ່ປະຕິບັດສອງໜ້າທີ່ຍຸດທະສາດ ທີ່ມີເນື້ອໃນໃໝ່ສະແດງອອກດັ່ງນີ້:

- ພາລະບົດບາດປົກປັກຮັກສາປະເທດຊາດ ແມ່ນສືບຕໍ່ປະຕິບັດແນວທາງປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນແນໃສ່ປົກປັກຮັກສາຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ປົກປັກຮັກສາລະບອບໃໝ່, ປົກປັກຮັກສາພັກ, ຮັບປະກັນຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ໃນເງື່ອນໄຂທີ່ມີການເປີດກ້ວາງການພົວພັນກັບຕ່າງປະເທດ ມັນຮຽກຮ້ອງໃຫ້ທຸກຂັ້ນ, ທຸກຂະແໜງການ ແລະ ພະນັກງານທຸກຄົນຕ້ອງມີສະຕິສຳນຶກກ່ຽວກັບການປ້ອງກັນ, ປະສານສົມທົບແໜ້ນກັບຂະແໜງການປ້ອງກັນຄວາມສະຫງົບສຸກ; ພ້ອມກັນນັ້ນກໍຕ້ອງປະຕິບັດແນວທາງ, ນະໂຍບາຍຕ່າງໆປະ

ເທດຂອງພັກເຮົາຢ່າງຖືກຕ້ອງ. ແນໃສ່ສ້າງເງື່ອນໄຂອຳນວຍໃຫ້ແກ່ພາລະກິດສ້າງສາປະເທດຊາດ, ສັນຕິພາບຂອງປະຊາຊົນເຮົາ.

- ພາລະບົດບາດສ້າງສາປະເທດຊາດ/ ໃນການສ້າງສາລະບອບໃໝ່ ລັດເຮົາແມ່ນມີພາລະໜ້າທີ່ສຳຄັນຍິ່ງໃນພາລະກິດໃໝ່ ເພື່ອນຳເອົາຄວາມຢູ່ດີກິນດີ, ຄວາມອຸດົມຮັ່ງມີມາໃຫ້ແກ່ປະຊາຊົນ ແລະ ຄວາມເຂັ້ມແຂງຂອງປະເທດຊາດ. ດັ່ງນັ້ນ, ພາລະໜ້າທີ່ຂອງບັນດາອົງການລັດ ແມ່ນຫັນແນວທາງ, ແຜນນະໂຍບາຍຂອງພັກໃນທຸກດ້ານໃຫ້ກາຍເປັນກົດໝາຍ, ເປັນນະໂຍບາຍລະອຽດ ແລະ ດຳເນີນການຄຸ້ມຄອງ, ຈັດຕັ້ງປະຕິບັດ, ອຳນວຍຄວບຄຸມທົ່ວສັງຄົມຢ່າງມີປະສິດທິພາບຕາມຫຼັກການລວມສູນປະຊາທິປະໄຕ.

ຂ. ໜ້າທີ່ພາຍນອກ

ຕ້ານ ແລະ ສະກັດກັ້ນການແຊກແຊງ, ຮຸກຮານຈາກພາຍນອກ. ເພີ່ມທະວີຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຢ່າງຮອບດ້ານກັບຫວຽດນາມ, ກຳປູເຈຍ, ເພີ່ມທະວີມິດຕະພາບ ແລະ ການຮ່ວມມືກັບບັນດາອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆໃນໂລກ, ບົນພື້ນຖານສິດສະເໝີພາບ, ເຄົາລົບເອກະລາດອະທິປະໄຕ ແລະ ຜົນປະໂຫຍດອັນຄົບຖ້ວນຂອງກັນ ແລະ ກັນ. ສະໜັບສະໜູນຂະບວນການຕໍ່ສູ້ຂອງປະຊາຊົນໃນໂລກເພື່ອສັນຕິພາບ ແລະ ຢູ່ຮ່ວມກັນໂດຍສັນຕິ.

2. ຕົ້ນກຳເນີດ, ທາດແທ້ ແລະ ຄຸນປະໂຫຍດຂອງກົດໝາຍແຫ່ງ ສ ປ ປ ລາວ

2.1 ຕົ້ນກຳເນີດຂອງກົດໝາຍ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໄປພ້ອມໆກັບການກຳເນີດຂອງລັດ ປະຊາທິປະໄຕ ປະຊາຊົນລາວນັ້ນ ກົດໝາຍໃໝ່ກໍໄດ້ປະກົດຂຶ້ນ. ໃນເບື້ອງຕົ້ນກົດໝາຍໃໝ່ໄດ້ສະແດງອອກເປັນມະຕິຕ່າງໆຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ຄັ້ງວັນທີ 2 ທັນວາ 1975 ດັ່ງລາຍລະອຽດມີຄື:

1. ມະຕິສ້າງຕັ້ງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
2. ມະຕິຕົກລົງແຕ່ງຕັ້ງປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ .
3. ມະຕິສ້າງຕັ້ງສະພາປະຊາຊົນສູງສຸດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
4. ມະຕິຕົກລົງສ້າງຕັ້ງຄະນະລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
5. ມະຕິຕົກລົງແຕ່ງຕັ້ງປະທານສະພາປະຊາຊົນສູງສຸດແຫ່ງ ສປປ ລາວ.

ມາເຖິງປັດຈຸບັນໄດ້ມີກົດໝາຍຫຼາຍຢ່າງ, ຫຼາຍສະບັບທີ່ສະພາແຫ່ງຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄດ້ຮັບຮອງເອົາ ແລະ ປະກາດໃຊ້ເປັນທາງການ ເຊັ່ນ ລັດຖະທຳມະນູນ, ກົດໝາຍອາຍາ, ກົດໝາຍແພ່ງ , ກົດໝາຍແຮງງານ, ກົດໝາຍປະກັນໄພສັງຄົມ, ກົດໝາຍການລົງທຶນ... ເຊິ່ງພວມໄດ້ຮັບການປັບປຸງໃຫ້ນັບມື້ເຂັ້ມແຂງ ແລະກາຍເປັນພາຫະນະທີ່ສຳຄັນ ໃຫ້ການບໍລິຫານວຽກງານຕ່າງໆຂອງລັດເຮົາ.

2.2 ທາດແທ້ຂອງກົດໝາຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ກົດໝາຍແມ່ນລະບົບຂໍ້ກຳນົດຫຼັກການປະພຶດ ໂດຍແມ່ນລັດວາງອອກ, ສະແດງເຖິງເຈດຈຳນົງຂອງຊົນຊັ້ກຳອຳນາດ, ມີຜົນບັງຄັບລວມ ແລະ ຮັບປະກັນການປະຕິບັດໂດຍແນໃສ່ດັດປັບການພົວພັນສັງຄົມດ້ວຍວິທີການສຶກສາອົບຮົມ, ຊວນເຊື່ອ ແລະ ການບັງຄັບຂອງລັດ.

ກົດໝາຍແມ່ນມີທາດແທ້ຊົນຊັ້ນຢ່າງຈະແຈ້ງ, ບໍ່ວ່າກົດໝາຍຂອງລັດໃດ, ລະບົບການເມືອງ -ສັງຄົມໃດລ້ວນແຕ່ແມ່ນເຈດຈຳນົງຂອງຊົນຊັ້ນກຳອຳນາດທີ່ໄດ້ "ວາງອອກເປັນກົດໝາຍ" ຊີ້ບອກເຖິງທາດແທ້ຊົນຊັ້ນຂອງກົດໝາຍ, ມາກ - ອັງແກນ ໄດ້ຂຽນໄວ້ວ່າ ກະໂຕບັນດາແນວຄິດຂອງຊົນຊັ້ນພວກເຈົ້າແມ່ນໄດ້ກຳເນີດຈາກລະບອບການຜະລິດ ແລະ ກຳມະສິດສ່ວນຕົວເຊັ່ນດຽວກັບກົດໝາຍຂອງພວກເຈົ້າພຽງແຕ່ເປັນເຈດຈຳນົງຂອງຊົນຊັ້ນພວກເຈົ້າໄດ້ວາງອອກເປັນກົດໝາຍ, ເນື້ອໃນຂອງເຈດຈຳນົງນັ້ນຕັດສິນໂດຍເງື່ອນໄຂດຳລົງຊີວິດທາງດ້ານວັດຖຸຂອງຊົນຊັ້ນພວກເຈົ້າ (ຖະແຫຼງການຂອງພັກຄອມມຸນິດ).

ກົດໝາຍຂອງລະບອບປະຊາທິປະໄຕຂອງພວກເຮົາ ແມ່ນເຈດຈຳນົງຂອງຊົນຊັ້ນກຳມະກອນ - ຊາວກະສິກອນ ແລະ ຊັ້ນຄົນອອກແຮງງານອື່ນໆໃຕ້ການນຳພາຂອງພັກໄດ້ "ວາງອອກເປັນກົດໝາຍ" ເນື້ອໃນເຈດຈຳນົງດັ່ງກ່າວຖືກກຳນົດດ້ວຍພື້ນຖານເສດຖະກິດ ຂອງລະບອບປະຊາທິປະໄຕປະຊາຊົນ. ພັກນຳພາ ລັດ ແລະ ສັງຄົມດ້ວຍແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍ ລັດຄຸ້ມຄອງດ້ວຍການທັນເອົາແນວທາງຂອງພັກເປັນຂໍ້ກຳນົດກົດໝາຍ.

2.3 ຄຸນປະໂຫຍດຂອງກົດໝາຍແຫ່ງ ສ.ປ.ປ.ລາວ.

ໃນເງື່ອນໄຂຕົວຈິງໃນປັດຈຸບັນ ເຖິງວ່າກົດໝາຍແຫ່ງລັດ ສ ປ ປລາວຍັງບໍ່ທັນພຽງພໍ ແລະ ຄົບຖ້ວນເທື່ອກໍຕາມແຕ່ມັນຍັງສາມາດເສີມຂະຫຍາຍຄຸນປະໂຫຍດຂອງມັນຄື:

- ກົດໝາຍຂອງພວກເຮົາແມ່ນການທັນແນວທາງ, ແຜນນະໂຍບາຍຂອງພັກ ເປັນອັນລະອຽດ ແລະເປັນພາຫະຮັບປະກັນການປະຕິບັດແນວທາງນະໂຍບາຍດັ່ງກ່າວໃນທົ່ວຂົງເຂດສັງຄົມ.

- ກົດໝາຍຂອງພວກເຮົາ ແມ່ນເຄື່ອງມືທີ່ສະແດງອອກ ແລະ ຮັບປະກັນສິດເປັນເຈົ້າລວມໝູ່ຂອງປະຊາຊົນບັນດາເຜົ່າ. ລັດນຳໃຊ້ກົດໝາຍເພື່ອຄຸ້ມຄອງ. ອຳນວຍຄວບຄຸມຂົງເຂດຕ່າງໆຂອງຊີວິດສັງຄົມ(ເສດຖະກິດ, ການເມືອງ, ວັດທະນາທຳ, ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ ...).

- ກົດໝາຍຂອງພວກເຮົາແມ່ນເຄື່ອງມືທີ່ສຳຄັນ ເພື່ອເຮັດໃຫ້ລັດໄດ້ຈັດຕັ້ງ ແລະ ຄຸ້ມຄອງທຸກການເຄື່ອນໄຫວຂອງສັງຄົມ, ປະຕິບັດໜ້າທີ່ພາຍໃນ ແລະ ຕ່າງປະເທດໄດ້ຢ່າງມີປະສິດທິຜົນ.

ຄຸນປະໂຫຍດອັນສຳຄັນຂອງກົດໝາຍໃນການທັນເປັນອັນລະອຽດທາງດ້ານສິດເປັນເຈົ້ານັ້ນຍັງສະແດງອອກບ່ອນວ່າ ມັນໄດ້ກຳນົດເງື່ອນໄຂທາງດ້ານວັດຖຸ ແລະ ຈິດໃຈ, ພັນທະ ແລະ ຄວາມຮັບຜິດຊອບຂອງລັດໃນການແນະນຳຊ່ວຍເຫຼືອ, ຈັດຕັ້ງປະຊາຊົນປະຕິບັດສິດ ແລະ ພັນທະຂອງພົນລະເມືອງ, ພ້ອມກັນນັ້ນກົດໝາຍຍັງກຳນົດບັນດາມາດຕະການແນໃສ່ສະກັດກັ້ນ ແລະ ລົງໂທດການກະທຳຜິດ ທີ່ແຕະຕ້ອງເຖິງສິດເສລີພາບ ປະຊາທິປະໄຕຂອງພົນລະເມືອງ, ການກະທຳທີ່ເປັນການຫຼົບຫຼີກຈາກພັນທະທີ່ກົດໝາຍໄດ້ກຳນົດໄວ້.

ປັດຈຸບັນສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ ເຊິ່ງສະແດງອອກໃນສິດ ແລະ ພັນທະພື້ນຖານຂອງພົນລະເມືອງໄດ້ກຳນົດໄວ້ໃນກົດໝາຍ ແລະ ລັດຖະທຳມະນູນຕ່າງໆ. ດ້ວຍເຫດນັ້ນພົນລະເມືອງແຕ່ລະຄົນຍາມໃດກໍຕ້ອງເຄົາລົບແລະ ເຄື່ອນໄຫວຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ.

3. ພັນທະຂອງພົນລະເມືອງລາວຕໍ່ກົດໝາຍ.

ພົນລະເມືອງລາວທຸກຄົນ ຕ້ອງມີຄວາມຮັບຜິດຊອບຕໍ່ກົດໝາຍໃນສອງດ້ານທີ່ເປັນພື້ນຖານຄື:

+ ດ້ານທີ 1: ພົນລະເມືອງລາວທຸກຄົນມີໜ້າທີ່ປະຕິບັດໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍຕາມຄຳຂ້ວນທີ່ວ່າ " ດຳລົງຊີວິດ ແລະ ການເຄື່ອນໄຫວວຽກງານໃຫ້ຖືກຕ້ອງຕາມກົດໝາຍ ". ບໍ່ມີສິດລະເມີດກົດໝາຍ ເພາະກົດໝາຍແມ່ນຂໍ້ບັງຄັບແຕ່ລະຄົນໃນສັງຄົມເພື່ອເປັນລະບຽບຮຽບຮ້ອຍໃນສັງຄົມ.

+ ດ້ານທີ 2: ພົນລະເມືອງລາວແຕ່ລະຄົນຕ້ອງມີສິດປະກອບສ່ວນເຂົ້າໃນການສ້າງກົດໝາຍ ເພື່ອເຮັດໃຫ້ກົດໝາຍຂອງປະເທດເຮົານັບມື້ອຸດົມສົມບູນ ແລະ ຄົບຖ້ວນ. ໝາຍຄວາມວ່າແຕ່ລະຄົນຕ້ອງມີໜ້າທີ່ຮັບຜິດຊອບຊ່ວຍເຫຼືອອົງການລັດໃນການປັບປຸງ, ກໍ່ສ້າງກົດໝາຍ ແລະ ພົນລະເມືອງແຕ່ລະຄົນຕ້ອງປະຕິບັດຕາມກົດໝາຍຢ່າງຖືກຕ້ອງ.

ຄຳຖາມຄົ້ນຄວ້າ

1. ຕົ້ນກຳເນີດ, ທາດແທ້ ແລະໜ້າທີ່ຂອງລັດ ສ ປ ປລາວມີມາແນວໃດ?
2. ຈົ່ງອະທິບາຍແຈ້ງຕົ້ນກຳເນີດ, ທາດແທ້,ຄຸນປະໂຫຍດຂອງກົດໝາຍແຫ່ງລັດ ສປປລາວ.
3. ພັນທະພື້ນຖານຂອງພົນລະເມືອງລາວຕໍ່ກົດໝາຍມີຄືແນວໃດ ?



ພາກທີ II

ລັດຖະທຳມະນູນ

ບົດທີ 4

ລັດຖະທຳມະນູນ

1. ຄວາມສຳນຶກກ່ຽວກັບລັດຖະທຳມະນູນ.

ໃນເມື່ອການຕໍ່ສູ້ຊົນຊັ້ນຂະຫຍາຍຕົວເຖິງຂັ້ນດຸເດືອດຂັ້ງຂາດທີ່ບໍ່ອາດຈະອະນຸໂລມກັນໄດ້, ລັດ ກໍ່ໄດ້ປະກົດຕົວຂຶ້ນ. ພ້ອມກັບການປະກົດຕົວຂອງລັດ, ກົດໝາຍໄດ້ປະກົດຕົວຂຶ້ນເຊັ່ນດຽວກັນ. ບໍ່ວ່າ ລັດໃດກໍລ້ວນແຕ່ມີກົດໝາຍຂອງຕົນ. ລັດເຈົ້າທາດກໍມີກົດໝາຍຂອງເຈົ້າທາດ, ລັດສັກດິນາກໍມີກົດ ໝາຍສັກດິນາ, ລັດທຶນນິຍົມກໍມີກົດໝາຍທຶນນິຍົມ. ໃນເມື່ອການປະຕິວັດສັງຄົມນິຍົມສຳເລັດແລ້ວລັດ ສັງຄົມນິຍົມກໍວາງກົດໝາຍຂອງຕົນອອກ ເພື່ອປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ປາບ ປາມສັດຕູຂອງການປະຕິວັດ.

ລັດຖະທຳມະນູນກໍແມ່ນກົດໝາຍເຊັ່ນດຽວກັນ ແຕ່ບໍ່ໄດ້ເກີດຂຶ້ນພ້ອມກັນກັບກົດໝາຍອື່ນໆ ແຕ່ ຫົວທີໂລດ. ໃນລະບອບເຈົ້າທາດ ແລະ ລະບອບສັກດິນາ ຍັງບໍ່ທັນມີລັດຖະທຳມະນູນເທື່ອ. ຈົນຮອດ ລະບອບທຶນນິຍົມລັດຖະທຳມະນູນຈຶ່ງໄດ້ປະກົດຕົວຂຶ້ນເນື່ອງຈາກສອງເຫດຜົນຄື :

- ລັດທຶນນິຍົມໃນລະດັບການແກ້ງແຍ້ງກັນຕ້ອງມີການຕົກລົງ ເພື່ອສະເລ່ຍສິດຜົນປະໂຫຍດລະ ຫວ່າງນາຍທຶນດ້ວຍກັນ ແລະ ເພື່ອພ້ອມກັນເປັນເອກະພາບກັນ ໃນການກົດຂີ່ຂູດຮີດຊາວຜູ້ອອກແຮງ ງານ.

- ເມື່ອອຳນາດຂອງຊົນຊັ້ນສັກດິນາອ່ອນເພຍລົງ ແລະ ຊົນຊັ້ນນາຍທຶນກໍບໍ່ທັນເອົາຊະນະຊົນ ຊັ້ນສັກດິນາໄດ້ຢ່າງສົມບູນເທື່ອເວລານັ້ນຕ້ອງມີການຕົກລົງເພື່ອສະເລ່ຍຜົນປະໂຫຍດລະຫວ່າງນາຍທຶນ ແລະ ສັກດິນາ.

1.1. ນິຍາມຂອງລັດຖະທຳມະນູນ.

ຕາມທັດສະນະຂອງພວກເຮົາລັດຖະທຳມະນູນແມ່ນກົດໝາຍພື້ນຖານຂອງລັດສະແດງເຖິງເຈດ ຈຳນົງຂອງຊົນຊັ້ນປົກຄອງ, ກຳນົດລະບອບການເມືອງ, ເສດຖະກິດ, ສັງຄົມ , ສິດ ແລະ ພັນທະພື້ນຖານ ຂອງພົນລະເມືອງ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ .

ລັດຖະທຳມະນູນແຫ່ງລັດ ສ ປ ປ ລາວ ແມ່ນກົດໝາຍພື້ນຖານຂອງ ສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນລາວ ສະແດງເຖິງເຈດຈຳນົງຂອງປະຊາຊົນບັນດາເຜົ່າເຊິ່ງປະກອບດ້ວຍປະຊາຊົນ ບັນດາເຜົ່າ, ບັນດາຊັ້ນຄົນໃນສັງຄົມ , ກຳນົດລະບອບການເມືອງ, ເສດຖະກິດ, ສັງຄົມ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ກຳນົດຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດແຫ່ງ ສປປລາວ.

1.2 ທາດແທ້ຊົນຊັ້ນຂອງລັດຖະທຳມະນູນ

ບັນຫາພື້ນຖານກ່ວາໝູ່ຂອງລັດຖະທຳມະນູນແມ່ນທາດແທ້ຊົນຊັ້ນຂອງມັນລັກສະນະຂອງລັດ

ແມ່ນບັນຫາຕົ້ນຕໍຂອງລັດຖະທຳມະນູນ , ອຳນາດການປົກຄອງຕົກຢູ່ໃນການຄວບຄຸມຂອງໃຜ ແລະ ຮັບໃຊ້ໃຜ, ຂໍ້ນີ້ຕັດສິນຊີ້ຂາດເນື້ອໃນທັງໝົດລັດຖະທຳມະນູນ.

ລັດປະຊາທິປະໄຕປະຊາຊົນລາວ ແມ່ນລັດຂອງປະຊາຊົນ ,ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ (ມາດຕາ 2 ຂອງລັດຖະທຳມະນູນ). ອັງແກນເວົ້າວ່າ: " ລັດຖະທຳມະນູນຂອງລັດຕ່າງໆ ເວລາໃດກໍແມ່ນໝາກຜົນຂອງການຕໍ່ສູ້ຊົນຊັ້ນ ໂດຍແມ່ນຊົນຊັ້ນທີ່ຊະນະເປັນຜູ້ວາງອອກພາຍຫຼັງທີ່ຍາດໄດ້ໄຊຊະນະ ແລະ ກຳອຳນາດໄດ້ແລ້ວ ". ເລນິນເວົ້າວ່າ " ເນື້ອໃນຂອງລັດຖະທຳມະນູນສະແດງອອກການເຊື່ອງຊາ ເຖິງກຳລັງຕົວຈິງ ໃນການຕໍ່ສູ້ຊົນຊັ້ນນັ້ນເອງ ".

2. ລັກສະນະຂອງລັດຖະທຳມະນູນ. (ຄວາມຈຳເປັນຂອງລັດຖະທຳມະນູນ)

2.1 ລັດຖະທຳມະນູນແມ່ນເອກະສານນິຕິກຳທີ່ມີລັກສະນະສັງລວມ

~~ລັດຖະທຳມະນູນສະຫຼຸບສັງລວມບັນດາໝາກຜົນທີ່ການປະຕິວັດຍາດມາໄດ້ ພາຍໃຕ້ການນຳ~~ ພາຂອງພັກລະບຸແຈ້ງໄຊຊະນະອັນໃຫ່ຍຫຼວງຂອງປະຊາຊົນເຮົາຍາດມາໄດ້ໃນໄລຍະທີ່ຜ່ານມາ ແມ່ນການສະຫຼຸບສັງລວມຄົ້ນເຖິງບັນດາໄລຍະທາງສຳຄັນຂອງປະຫັວາດສາດປະເທດໜຶ່ງ. ສະຫຼຸບບັນດາບົດຮຽນຂອງການປະຕິວັດເປັນຕົ້ນແມ່ນບົດຮຽນທີ່ຖອດຖອນມາໄດ້ໃນຂົງເຂດການໄຫວຕ່າງໆຂອງລັດທີ່ຈະໃຊ້ເປັນພື້ນຖານໃຫ້ແກ່ການກໍ່ສ້າງລັດ.

2.2 ລັດຖະທຳມະນູນມີລັກສະນະໂຄງການດຳເນີນງານ

ລັດຖະທຳມະນູນ ບໍ່ພຽງແຕ່ເວົ້າເຖິງບັນດາໝາກຜົນຂອງການປະຕິວັດເທົ່ານັ້ນແຕ່ຫາກຍັງຊີ້ໃຫ້ເຫັນທິດທາງກ້າວຂຶ້ນໃນອານາຄົດ, ກຳນົດສິ່ງທີ່ຈະຕ້ອງບັນລຸເຖິງໃນການກຳນົດເວລາອັນຍາວນານສົມຄວນ. ຢູ່ໃນຄຳແນະນຳຂອງລັດຖະທຳມະນູນໄດ້ກຳນົດຈຸດໝາຍທີ່ບັນລຸ ຄື ສ້າງປະເທດຊາດໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ວັດທະນາຖາວອນ.

ລັດຖະທຳມະນູນໄດ້ສົ່ງຄວາມມຸ້ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າໃນການສືບຕໍ່ກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ສ້າງບັນດາປະຖົມປັດໃຈໃຫ້ການສ້າງສັງຄົມນິຍົມໃນອານາຄົດ.

2.3 ລັດຖະທຳມະນູນເຮັດໃຫ້ແນວທາງນະໂຍບາຍຂອງພັກກາຍເປັນລະບອບຂອງລັດ

ລັດຖະທຳມະນູນ ຕິດພັນຢ່າງແໜ້ນແຟ້ນກັບໜ້າທີ່ການເມືອງ,ກັບແນວທາງນະໂຍບາຍທີ່ມະຕິຂອງກອງປະຊຸມໃຫ່ຍຄັ້ງທີ v ຂອງພັກວາງອອກໃນການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ສ້າງບັນດາປະຖົມປັດໃຈໃຫ້ແກ່ການສ້າງສັງຄົມນິຍົມໃນອານາຄົດ. ເນື້ອໃນພື້ນຖານຂອງມະຕິກອງປະຊຸມໃຫ່ຍຄັ້ງທີ v ຂອງພັກໄດ້ ເຂົ້າຢູ່ໃນລັດຖະທຳມະນູນ. ລັດໄດ້ຜັນຂະຫຍາຍແນວທາງໂຍບາຍຂອງ ພັກເປັນອັນລະອຽດເປັນກົດໝາຍພື້ນຖານ.

2.4 ລັດຖະທຳມະນູນແມ່ນກົດໝາຍພື້ນຖານ.

ລັດຖະທຳມະນູນຖືວ່າເປັນໃຈກາງຂອງລະບົບກົດໝາຍຂອງສາທາລະນະລັດປະຊາທິປະ ໄຕປະຊາຊົນລາວລັດຖະທຳມະນູນກຳນົດລະບອບການເມືອງ, ເສດຖະກິດ, ສັງຄົມສິດ ແລະ ພັນທະພື້ນຖານ ຂອງພົນລະເມືອງ, ກົງຈັກລັດ ໝາຍຄວາມວ່າ ລັດຖະທຳມະນູນກຳນົດຫຼັກຖານ ຂອງລະບອບປະຊາ ທິປະໄຕປະຊາຊົນ. ມັນກຳນົດບັນດາບັນຫາທີ່ກວມລວມກວ່າໝູ່ , ເປັນພື້ນຖານກວ່າໝູ່, ບັນດາຫຼັກການ ທີ່ມີຄວາມໝາຍສຳຄັນກວ່າໝູ່ .ລັດຖະທຳມະນູນ, ແມ່ນແມ່ຂອງບັນດາຂະແໜງກົດໝາຍຕ່າງໆ ລັດຖະ ທຳມະນູນ ເປັນພື້ນຖານດ້ານນິຕິໄນໃຫ້ແກ່ການກໍ່ສ້າງລະບົບກົດໝາຍແຫ່ງ ສປປລາວ ທຸກນິຕິກຳຕ້ອງ ສອດຄ່ອງກັບລັດຖະທຳມະນູນ.

3. ພາລະບົດບາດ ແລະ ໜ້າທີ່ຂອງລັດຖະທຳມະນູນ

3.1. ພາລະບົດບາດຂອງລັດຖະທຳມະນູນ

ລັດຖະທຳມະນູນຂອງລັດ ສປປລາວມີພາລະບົດບາດທັ້ງປົກປັກຮັກສາ ແລະທັ້ງກໍ່ສ້າງຄື ປົກປັກ ຮັກສາລະບອບປະຊາທິປະໄຕປະຊາຊົນ, ປົກປັກຮັກສາໝາກຜົນຂອງການປະຕິວັດ, ປາບປາມສັດຕູ ພາຍໃນ ແລະ ພາຍນອກ, ທັ້ງກໍ່ສ້າງລະບອບໃໝ່, ໃນທຸກດ້ານພື້ນຖານເສດຖະກິດໃໝ່, ວັດທະນາທຳ ອັນດີງາມ, ຄົນລຸ່ນໃໝ່ໃຫ້ເປັນພົນລະເມືອງດີ ແລະ ອື່ນໆ.

3.2. ໜ້າທີ່ພື້ນຖານຂອງລັດຖະທຳມະນູນ.

ກ. ໜ້າທີ່ທາງດ້ານເມືອງ

ລັດຖະທຳມະນູນກຳນົດລະບອບການເມືອງ, ເສດຖະກິດ, ສັງຄົມ , ທາດແທ້ຊົນຊັ້ນຂອງອຳນາດ ລັດ, ແນວທາງການເມືອງພາຍໃນ - ຕ່າງປະເທດ, ສິດ ແລະ ພັນທະຂອງພົນລະເມືອງ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ.

ຂ. ໜ້າທີ່ດ້ານກົດໝາຍ

ລັດຖະທຳມະນູນຂອງ ສ ປ ປ ລາວ ແມ່ນກົດໝາຍພື້ນຖານ, ແມ່ນໃຈກາງຂອງລະບົບກົດໝາຍ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມັນແມ່ນຍຸດທະສາດທາງດ້ານກົດໝາຍຂອງ ສ ປ ປ ລາວ .

ຄ. ໜ້າທີ່ດ້ານແນວຄິດ.

ລັດຖະທຳມນູນ ມີການກະທົບດ້ານແນວຄິດຕໍ່ສັງຄົມ, ສຶກສາອົບຮົມໃຫ້ປະຊາຊົນໃຫ້ມີນ້ຳໃຈຮັກ ຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ເຊີດຊູສະຕິເປັນເຈົ້າຂອງປະເທດຊາດ, ສະຕິເຄົາລົບກົດ ໝາຍ.

4. ຫຼັກການພື້ນຖານຂອງລັດຖະທຳມະນູນ

ຫຼັກ ການພື້ນຖານຂອງລັດຖະທຳມະນູນ ສະແດງອອກທາດແທ້ທາງສັງຄົມຂອງລັດ. ຫຼັກການ ພື້ນຖານຂອງລັດຖະທຳມະນູນສ່ອງແສງລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ ຂອງປະເທດເຮົາຖ້າຂໍ້ກຳນົດຂອງລັດຖະທຳມະນູນສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະ ກິດ, ສັງຄົມກໍມີຜົນກະທົບຢ່າງຕັ້ງໜ້າເຮັດໃຫ້ເສດຖະກິດ ແລະ ສັງຄົມຂະຫຍາຍຕົວ, ກົງກັນຂ້າມຖ້າ ຫາກມັນບໍ່ສອດຄ່ອງກັນກໍເປັນການກີດໜ່ວງການຂະຫຍາຍຕົວຂອງເສຖະກິດ - ສັງຄົມ. ຫຼັກການພື້ນ

ຖານ ຂອງລັດຖະທຳມະນູນເຮົາ ແມ່ນສອດຄ່ອງກັບລັກສະນະໄລຍະການປະຕິວັດຂອງປະເທດເຮົາໃນ ປັດຈຸບັນແມ່ນໄລຍະກໍ່ສ້າງ, ປັບປຸງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ໃຫ້ອຸດົມສົມບູນ ຂຶ້ນໄປເລື້ອຍໆ. ບັນດາຫຼັກມູນພື້ນຖານຂອງ ລັດຖະທຳມະນູນຂອງສາທາລະນະລັດ ປະຊາທິປະໄຕປະ ຊາຊົນລາວ ມີດັ່ງນີ້:

4.1 ຫຼັກການອຳນາດເປັນຂອງປະຊາຊົນ

ຫຼັກການອຳນາດເປັນຂອງປະຊາຊົນ ເປັນຫຼັກການທີ່ສຳຄັນກວ່າໝູ່. ຫຼັກການນີ້ໄດ້ຖືກກຳນົດໄວ້ ໃນມາດຕາ 2 ຂອງລັດຖະທຳມະນູນ " ລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ລັດປະຊາທິປະໄຕປະຊາຊົນ, ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະ ໂຫຍດຂອງປະຊາຊົນບັນດາເຜົ່າ ເຊິ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມໂດຍແມ່ນກຳມະກອນ, ກະສິ ກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫ່ງ ".

ມາດຕາ 3 ຍັງບົ່ງໄວ້ວ່າ: " ສິດເປັນເຈົ້າຂອງປະເທດຂອງປະຊາຊົນບັນດາເຜົ່າໄດ້ຮັບການປະຕິບັດ ແລະຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກນ ນຳ ".

ມາດຕາ 4 ຂອງລັດຖະທຳມະນູນໄດ້ບົ່ງໄວ້ວ່າ " ສະພາແຫ່ງຊາດເປັນອົງການຕົວແທນຂອງປະ ຊາຊົນ. ການເລືອກຕັ້ງສະມາຊິກສະພາແຫ່ງຊາດແມ່ນປະຕິບັດຕາມຫຼັກການທົ່ວໄປ, ສະເໝີພາບ, ໂດຍ ກົງ ແລະ ລົງຄະແນນສຽງປິດລັບ. ຜູ້ປ່ອນບັດເລືອກຕັ້ງມີສິດສະເໜີປົດຜູ້ແທນຂອງຕົນໄດ້ຖ້າຫາກເຫັນ ວ່າມີການປະພຶດຕົນບໍ່ສົມກຽດສັກສີ ແລະ ຂາດຄວາມໄວ້ວາງໃຈຈາກປະຊາຊົນ ". ໝາຍຄວາມວ່າ ອຳນາດຂອງປະຊາຊົນໄດ້ຮັບການປະຕິບັດໂດຍຜ່ານອົງການຕົວແທນຂອງຕົນເຊິ່ງແມ່ນສະພາແຫ່ງຊາດ

4.2. ຫຼັກການນຳພາຂອງພັກ

ຫຼັກການນີ້ໄດ້ຖືກກຳນົດໄວ້ໃນມາດຕາ 3 ຂອງລັດຖະທຳມະນູນວ່າ " ສິດເປັນເຈົ້າປະເທດຊາດ ຂອງປະຊາຊົນບັນດາເຜົ່າໄດຮັບການປະຕິບັດ ແລະ ການຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບ ການເມືອງເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກນນຳ ".

8.4.1988

4.3 ຫຼັກການອຳນາດເອກະພາບ

ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອຳນາດລັດເປັນຂອງປະຊາຊົນເຊິ່ງແມ່ນ ສະພາແຫ່ງຊາດເປັນຕົວແທນ. ລັດຖະທຳມະນູນໄດ້ແບ່ງໜ້າທີ່ໃຫ້ແຕ່ລະອົງການລັດ ແຕ່ຢູ່ໃຕ້ການຕິດ ຕາມກວດກາຂອງສະພາແຫ່ງຊາດ ຄື ອົງການນິຕິບັນຍັດເຊິ່ງແມ່ນສະພາແຫ່ງຊາດເອງ, ອົງການບໍລິ ຫານ ແລະ ອົງການຕຸລາການ.

4.4. ຫຼັກການລວມສູນປະຊາທິປະໄຕ

ຫຼັກການອຳນາດເອກະພາບຕິດຕາມຢ່າງສະໜິດແໜ້ນກັບຫຼັກການລວມສູນປະຊາທິປະໄຕ. ມາດຕາ 5 ຂອງລັດຖະທຳມະນູນໄດ້ບົ່ງໄວ້ວ່າ " ສະພາແຫ່ງຊາດທຸກອົງການຂອງລັດໄດ້ຮັບການສ້າງ ຕັ້ງ ແລະ ການເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ ".

ລວມສູນບົນພື້ນຖານປະຊາທິປະໄຕຕິດພັນກັບປະຊາທິປະໄຕບົນພື້ນຖານການນຳພາຢ່າງລວມສູນອົງການລັດຂັ້ນເທິງກວດກາການເຄື່ອນໄຫວຂອງອົງການລັດຂັ້ນລຸ່ມ. ອົງການລັດຂັ້ນລຸ່ມລາຍງານການເຄື່ອນໄຫວຂອງຕົນຕໍ່ອົງການລັດຂັ້ນເທິງ.

4.5. ຫຼັກການນິຕິທຳ

ນິຕິທຳແມ່ນການເຄົາລົບກົດໝາຍຢ່າງເຂັ້ມງວດ ໂດຍອົງການຂອງພັກ, ລັດສັງຄົມ, ລັດຖະກອນ ແລະ ພົນລະເມືອງ. ຫຼັກການນິຕິທຳໄດ້ກຳນົດໄວ້ໃນມາດຕາ 10 ຂອງລັດຖະທຳມະນູນວ່າ " ລັດຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ. ທຸກອົງການຈັດຕັ້ງຂອງພັກ ແລະ ລັດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນຕ້ອງເຄື່ອນໄຫວຢູ່ໃນຂອບເຂດຂອງລັດຖະທຳມະນູນ ແລະ ກົດໝາຍ ".

ນິຕິທຳແມ່ນຫຼັກການໜຶ່ງໃນການເຄື່ອນໄຫວຂອງລັດ ສ ປ ປລາວ, ມັນແມ່ນກົດເກນໜາວະວິໄສ, ເງື່ອນໄຂອັນຈຳເປັນສຳລັບການກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນລາວ.

4.6 ຫຼັກການສິດ ແລະພັນທະພື້ນຖານຂອງພົນລະເມືອງ.

ຢູ່ໃນໝວດ 4 ຂອງລັດຖະທຳມະນູນໃນມາດຕາ 34 ເຖິງມາດຕາ 51 ໄດ້ກຳນົດສິດ ແລະ ພັນທະພື້ນຖານຂອງພົນລະເມືອງມັນ ແມ່ນສິດ ແລະ ເສລີພາບປະຊາທິປະໄຕຂອງພົນລະເມືອງທັງແມ່ນສິດທິມະນຸດ. ລັດຖະທຳມະນູນໃຫ້ ສິດ ແລະ ເສລີພາບປະຊາທິປະໄຕຢ່າງກ້ວາງຂວາງທັງຮັບປະກັນຕົວຈິງດ້ວຍກົດໝາຍມັນແມ່ນລັກສະນະທີ່ສຳຄັນຂອງປະຊາທິປະໄຕ ສ ປ ປ ລາວ.

ຄຳຖາມ

1. ຄວາມສຳນຶກກ່ຽວກັບລັດຖະທຳມະນູນແມ່ນແນວໃດ ?
2. ນິຍາມລັດຖະທຳມະນູນແມ່ນມີແນວໃດ ?
3. ລັດຖະທຳມະນູນມີລັກສະນະແນວໃດແດ່ ?
4. ລັດທະທຳມະນູນມີໜ້າທີ່ຫຍັງແດ່ ?
5. ລັດຖະທຳມະນູນມີຈັກຫຼັກການ ? ຫຼັກການໃດແດ່ ?

ບົດທີ 5

ເນື້ອໃນພື້ນຖານຂອງລັດຖະທຳມະນູນ

ເນື້ອໃນຂອງລັດຖະທຳມະນູນຂຶ້ນກັບທາດແທ້ຊົນຊັ້ນຂອງລັດຖະທຳມະນູນ. ທັງຂຶ້ນກັບທາດແທ້ຊົນຊັ້ນ ແລະ ພາລະບົດບາດຂອງລັດ ສ ປ ປ ລາວ. ເນື້ອໃນພື້ນຖານຂອງລັດຖະທຳມະນູນ ສ ປ ປ ລາວມີ 12 ບັນຫາໃຫຍ່ດັ່ງນີ້:



1. ຄຳນຳ
2. ລະບອບການເມືອງ
3. ລະບອບເສຖະກິດ - ສັງຄົມ
4. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
5. ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ
6. ສະພາແຫ່ງຊາດ
7. ປະທານປະເທດ
8. ລັດຖະບານ
9. ການປົກຄອງທ້ອງຖິ່ນ
10. ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ
11. ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ,ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ
12. ບັຍັດສຸດທ້າຍ

1. ຄຳນຳ

ນັບເປັນເວລາຫຼາຍພັນປີມາແລ້ວ ທີ່ປະຊາຊົນບັນດາເຜົ່າ ໄດ້ດຳລົງຄົງຕົວ ແລະ ຂະຫຍາຍຕົວຢູ່ບົນດິນແດນອັນແສນຮັກແຫ່ງນີ້ ເລີ່ມແຕ່ກາງສະຕະວັດທີ 14 ເປັນຕົ້ນມາ ບັນພະບູລຸດຂອງພວກເຮົາ ໂດຍສະເພາະພຣະເຈົ້າຟ້າງຸ່ມໄດ້ນຳພາປະຊາຊົນເຮົາກໍ່ຕັ້ງປະເທດລ້ານຊ້າງເອກະພາບ ແລະ ສ້າງໃຫ້ຈະເລີນຮຸ່ງເຮືອງ.

ຕັ້ງແຕ່ສະຕະວັດທີ 18 ເປັນຕົ້ນມາ, ແຜ່ນດິນລາວໄດ້ຖືກອິດທິກຳລັງພາຍນອກຈ້ອງມອງ ແລະ ຮຸກຮານຢູ່ສະເໝີ. ປະຊາຊົນເຮົາໄດ້ພ້ອມກັນເສີມຂະຫຍາຍມູນເຊື້ອອັນພິລະອາດຫານບໍ່ຍອມຈຳນົນຂອງບັນພະບູລຸດ ແລະ ໄດ້ຕໍ່ສູ້ຢ່າງຕໍ່ເນື່ອງ, ເດັດດ່ຽວໝຸ່ງແໜ້ນເພື່ອກອບກູ້ເອກະລາດອິດສະຫຼະພາບ.

ນັບແຕ່ປີ 1930 ເປັນຕົ້ນມາ ພາຍໃຕ້ການນຳພາອັນຖືກຕ້ອງ ຂອງພັກກອມມູນິດອິນດູຈີນໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວໃນປັດຈຸບັນ, ປະຊາຊົນລາວບັນດາເຜົ່າໄດ້ດຳເນີນການຕໍ່ສູ້ອັນຫຍຸ້ງຍາກລຳບາກ ແລະ ເຕັມໄປດ້ວຍຄວາມເສຍສະຫຼະຈົນສາມາດທັບມ້າງແອກອອບຄອງ, ກົດຂີ່ຂອງພວກລ່າເມືອງຂຶ້ນ ແລະ ລະບອບສັກດິນາ, ປົດປ່ອຍປະເທດຊາດຢ່າງສົມບູນ, ສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975 ອັນໄດ້ຂຶ້ນສູ່ກາດໃໝ່, ສັງກາດ ທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນມີອິດສະຫຼະພາບຢ່າງແທ້ຈິງ.

ໂນຊຸມປີຜ່ານມານີ້ ປະຊາຊົນເຮົາໄດ້ພ້ອມກັນປະຕິບັດສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດ ໂດຍສະເພາະແມ່ນການດຳເນີນແນວທາງປ່ຽນແປງໃໝ່ຢ່າງຮອບດ້ານເພື່ອຊຸດ

ຄົ້ນ ແລະ ເສີມຂະຫຍາຍກຳລັງແຮງສັງລວມເຂົ້າໃນການສ້າງ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນ ເຊິ່ງໄດ້ຮັບໝາກຜົນເບື້ອງຕົ້ນ ອັນເປັນໜ້າພາກພູມໃຈ.

ມາໃນໄລຍະໃໝ່ນີ້ ຊີວິດສັງຄົມໄດ້ຮຽກຮ້ອງໃຫ້ລັດເຮົາ ຕ້ອງມີລັດຖະທຳມະນູນ. ລັດຖະທຳມະນູນແມ່ນລັດຖະທຳມະນູນຂອງລະບອບປະຊາທິປະໄຕປະຊາຊົນຢູ່ປະເທດເຮົາ, ມັນຮັບຮູ້ຜົນງານອັນຍິ່ງໃຫຍ່ທີ່ປະຊາຊົນຍາດມາໄດ້ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ ແລະ ສ້າງສາປະເທດຊາດ; ກຳນົດລະບອບການເມືອງ, ເສດຖະກິດ - ສັງຄົມ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ແລະ ລະບົບການຈັດຕັ້ງກົງຈັກລັດໃນໄລຍະໃໝ່. ໃນປະຫວັດສາດຂອງຊາດເຮົາເທື່ອນີ້ເປັນເທື່ອທຳອິດ ທີ່ໄດ້ກຳນົດສິດເປັນເຈົ້າຂອງປະຊາຊົນ ຢູ່ໃນກົດໝາຍພື້ນຖານຂອງຊາດ.ລັດຖະທຳມະນູນສະບັບນີ້ ແມ່ນໝາກຜົນຂອງຂະບວນວິວັດແຫ່ງການປະກອບຄວາມເຫັນຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງເຖິງເຈດຈຳນົງອັນຍາວນານ ແລະ ຄວາມຕັດສິນໃຈອັນແຮງກ້າຂອງວົງຄະນາຍາດແຫ່ງຊາດ ທີ່ຈະພ້ອມກັນຕໍ່ສູ້ຈົນບັນລຸຈຸດໝາຍສ້າງປະເທດລາວໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ວັດທະນາຖາວອນ.

ຄຳນຳແມ່ນການສັງລວມໝາກຜົນຂອງການປະຕິວັດ ເຊິ່ງປະຊາຊົນບັນດາເຜົ່າຍາດມາໄດ້ພາຍໃຕ້ການນຳພາຂອງພັກ.ໃນຄຳນຳຍັງຊີ້ບອກທິດທາງຂຶ້ນເພື່ອກໍ່ສ້າງສັງຄົມ.ຢູ່ໃນຄຳນຳຂອງລັດຖະທຳມະນູນຂອງ ສ ປ ປ ລາວ ໄດ້ເຕືອນຄົ້ນເສັ້ນທາງປະຫວັດສາດແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງປະເທດຊາດ. ໄດ້ເນັ້ນໜັກເຖິງມູນເຊື້ອຕໍ່ສູ້ຢ່າງທໍລະຫົດອົດທົນ ແລະ ພິລະອາດຫານຂອງປະຊາຊົນເຮົາພາຍໃຕ້ການນຳພາຂອງພັກໄປເຖິງໄຊຊະນະຢ່າງສະຫງ່າງາມໃນວັນທີ 2 ທັນວາ 1975 ອັນພາໃຫ້ປະເທດຊາດມີເອກະລາດ, ເອກະພາບຢ່າງແທ້ຈິງ. ຢູ່ໃນຄຳຂວັນຍັງໄດ້ກຳນົດບັນຫາພື້ນຖານຂອງລະບອບປະຊາທິປະໄຕປະຊາຊົນ, ກຳນົດສິດ ແລະ ພັນທະຂອງພົນລະເມືອງ ແລະ ການຈັດຕັ້ງຂອງກົງຈັກລັດ, ກຳນົດຈຸດໝາຍສູ້ຊົນເພື່ອໃຫ້ບັນລຸຄື ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ .

2. ລະບອບການເມືອງ

ຢູ່ໃນລະບອບການເມືອງກ່ອນອື່ນໝົດ ໄດ້ເວົ້າເຖິງຄວາມເປັນເອກະລາດ, ອຳນາດອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນ ແລະຄວາມເປັນເອກະລາດແຫ່ງຊາດທີ່ແມ່ນບັນຫາພື້ນຖານກ່ວາໝູ່. ມັນແມ່ນໝາກຜົນອັນຍິ່ງໃຫຍ່ທີ່ປະຊາຊົນເຮົາຍາດມາໄດ້ດ້ວຍຄວາມເສຍສະຫຼະຕໍ່ສູ້ຢ່າງລຳບາກຍາວນານ. ມັນແມ່ນອົງປະກອບຂອງລັດໜຶ່ງທີ່ເປັນເອກະລາດ (ມາດຕາ1). ໃນມາດຕາ 2 ຂອງລັດຖະທຳມະນູນໄດ້ກຳນົດລັກສະນະຂອງລັດເຮົາເຊິ່ງແມ່ນລັດປະຊາທິປະໄຕປະຊາຊົນ. ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າເຊິ່ງປະກອບດ້ວຍຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ.

ຢູ່ມາດຕາ 3 ເວົ້າວ່າ " ສິດ ເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປະຕິບັດ ແລະ ຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງ ເຊິ່ງມີພັກປະຊາຊົນປະຕິວັດລາວເປັນແກນນຳ ".

ລັດຖະທຳມະນູນໄດ້ກຳນົດວ່າ ສະພາແຫ່ງຊາດເປັນການຕົວແທນຂອງຂອງປະຊາຊົນເຊິ່ງໄດ້ຮັບເລືອກຕັ້ງໂດຍກົງຈາກປະຊາຊົນ ດ້ວຍປະຕິບັດຫຼັກການທົ່ວໄປ, ສະເໝີພາບ, ໂດຍກົງ ແລະ ລົງຄະແນນສຽງປິດລັບ, ກຳນົດການສ້າງຕັ້ງ ແລະ ການເຄື່ອນຂອງທຸກອົງການລັດຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ລັດປົກປ້ອງສິດເສລີພາບ ແລະ ສິດປະຊາທິປະໄຕຂອງປະຊາຊົນທີ່ບໍ່ມີໃຜຈະລ່ວງລະເມີດໄດ້ນອກຈາກນັ້ນກໍໄດ້ກຳນົດອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆເພື່ອເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມທຸກຊັ້ນຄົນຂອງບັນດາເຜົ່າເຂົ້າຮ່ວມໃນການປົກປັກຮັກສາ ແລະ ກໍ່ສ້າງປະເທດ ທັງຮັບປະກັນສິດເປັນເຈົ້າຂອງປະຊາຊົນ (ມາດຕາ 4 -7).

× ລັດຖະທຳມະນູນໄດ້ກຳນົດບັນດານະໂຍບາຍພາຍໃນປະເທດ ແຕ່ມາດຕາ 8 - 12ມີດັ່ງນີ້:

✓ - ນະໂຍບາຍສາມັກຄີປອງດອງລະຫວ່າງຊົນເຜົ່າຕ່າງໆໂດຍໄດ້ເນັ້ນໜັກເຖິງສິດສະເໝີພາບລະຫວ່າງຊົນເຜົ່າ, ສິດໃນການເສີມຂະຫຍາຍຮີດຄອງປະເພນີອັນດີງາມຂອງບັນດາຊົນເຜົ່າ ແລະ ຄວາມຮັບຜິດຊອບຂອງລັດເຮົາໃນການຍົກລະດັບໃນທຸກດ້ານ ຂອງຊັ້ນຄົນໃຫ້ສູງຂຶ້ນເລື້ອຍໆ .

✓ - ນະໂຍບາຍສາສະໜາ ລັດເຄົາລົບ ແລະ ປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະໜານິກະຊົນ ແລະສາສະນິກະຊົນອື່ນໆ. ມັນແມ່ນນະໂຍບາຍປຸກລະດົມສົ່ງເສີມພະພິກຸ, ສຳນະເນນ ແລະ ນັກບວດຂອງສາສະໜາອື່ນ ໃຫ້ເຂົ້າຮ່ວມການເຄື່ອນໄຫວທີ່ເປັນໂຫຍດແກ່ປະເທດຊາດ ແລະ ປະຊາຊົນ ພ້ອມກັນນັ້ນກໍຫ້າມທຸກການກະທຳ ທີ່ເປັນການແບ່ງແຍກສາສະໜາ ແລະ ແບ່ງແຍກປະຊາຊົນ.

✓ - ນະໂຍບາຍຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ. ມັນເລັ່ງໜວງໃຫ້ທຸກການຈັດຕັ້ງຂອງພັກ ແລະ ລັດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ. ນະໂຍບາຍນີ້ແມ່ນເພື່ອປົກປັກຮັກສາສິດເປັນເຈົ້າ ແລະ ເສີມຂະຫຍາຍປະຊາທິປະໄຕ ປະຊາຊົນ ທັງປົກປັກຮັກສາລະບອບຂອງລັດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

✓ - ນະໂຍບາຍປ້ອງກັນຊາດປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະ ຮອບດ້ານເພາະການປ້ອງກັນຊາດ ປ້ອງກັນຄວາມສະຫງົບແມ່ນໜ້າທີ່ຂອງທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນ. ຕ້ອງເສີມຂະຫຍາຍກຳລັງແຮງທົ່ວປວງຊົນ ຈຶ່ງຈະຮັບປະກັນວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບນີ້ໄດ້ດີ.

✓ - ນະໂຍບາຍຕ່າງປະເທດແນໃສ່ບັນລຸຈຸດໝາຍສັນຕິພາບ, ເອກະລາດ, ມິຕະພາບ ແລະ ຮ່ວມມື. ຂະຫຍາຍສາຍພົວພັນແລະການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜົນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ລັດ ສປປລາວ ສະໜັບສະໜຸນການຕໍ່ສູ້ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

3. ລະບອບເສດຖະກິດ-ສັງຄົມ.

ລະບອບເສດຖະກິດຢູ່ ສ ປປລາວ ແມ່ນເສດຖະກິດຫຼາຍພາກສ່ວນທີ່ມີຈຸດໝາຍຂະຫຍາຍການ

ຜະລິດ ແລະເປີດກວ້າງການຈໍລະຈອນ, ຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ເຮັດໃຫ້ພື້ນຖານເສດກິດແຫ່ງຊາດມີການຂະຫຍາຍຕົວຍິ່ງຂຶ້ນ. ແລະ ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນເລື້ອຍໆ (ມາດຕາ13).

ລັດຖະທຳມະນູນໄດກຳນົດລັດປົກຄອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງ ລັດ, ລວມໝູ່, ເອກະເທດ, ກຳມະສິດເອກະຊົນຂອງນາຍທຶນຢູ່ພາຍໃນປະເທດ ແລະ ກຳມະສິດຊາວຕ່າງປະເທດທີ່ມາລົງທຶນໃນປະເທດເຮົາ.

ລັດມີນະໂຍບາຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ພາຍໃນປະເທດລົງທຶນເຂົ້າໃນການຜະ ລິດ, ທຸລະກິດ ແລະບໍລິການ, ປະກອບສ່ວນເຂົ້າໃນການຫັນເປັນອຸດສະຫະກຳ ແລະ ການຫັນເປັນອັນທັນສະໄໝ ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ຂະຫຍາຍຕົວ(ມາດຕາ14).

ລັດສົ່ງເສີມການລົງທຶນຂອງຕ່າງປະເທດຢູ່ ສປປລາວ ສ້າງສິ່ງແວດລ້ອມອຳນວຍຄວາມສະດວກໃຫ້ແກ່ການນຳເອົາທຶນ, ເຕັກໂນໂລຢີ ແລະ ການຄຸ້ມຄອງທີ່ກ້າໜ້າເຂົ້າສູ່ຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ.

ຊັບສົມບັດ ແລະ ທຶນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນຢູ່ ສປປລາວຈະບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫຼື ໂອນເປັນຂອງລັດ(ມາດຕາ15)

ລັດປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊື້ຂາດ) ແລະ ສິດສືບທອດຊັບສົມບັດຂອງການຈັດຕັ້ງ ແລະຂອງບຸກຄົນ. ສຳລັບທີ່ດິນແມ່ນເປັນກຳມະສິດຂອງ ວົງຄະນາຍາດແຫ່ງຊາດ, ລັດຮັບປະກັນສິດນຳໃຊ້, ສິດໂອນ ແລະ ສິດສືບທອດຕາມກົດໝາຍ (ມາດ ຕາ17)

ລັດຄຸ້ມຄອງເສດຖະກິດຕາມກົນໄກເສດຖະກິດຕະຫຼາດທີ່ມີການດັດສົມຂອງລັດ, ປະຕິບັດຫຼັກການ ສົມທົບການຄຸ້ມຄອງລວມສູນເປັນເອກະພາບຂອງຂະແໜງການສູນກາງກັບການແບ່ງຄວາມ ຮັບຜິດຊອບຄຸ້ມຄອງໃຫ້ທ້ອງຖິ່ນຕາມລະບຽບກົດໝາຍ(ມາດຕາ18).

ທຸກອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນຕ້ອງປົກປັກຮັກສາສິ່ງແວດລ້ອມ, ປົກປັກຮັກສາ ຊັບພະຍາກອນທຳມະຊາດ(ມາດຕາ 19).

ລັດປະຕິບັດນະໂຍບາຍເປີດກ້ວາງການພົວພັນຮ່ວມມືເສດຖະກິດ ກັບຕ່າງປະເທດໂດຍໃຊ້ຮູບ ການສຳພັນເສດຖະກິດຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບບົນຫຼັກການເຄົາລົບເອກະລາດ, ອະທິປະໄຕ ຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ(ມາດຕາ 20).

ລັດໃຫ້ຄວາມສຳຄັນແກ່ການພັດທະນາເສດຖະກິດຕິດພັນກັບການພັດທະນາວັດທະນະທຳ - ສັງ ຄົມໂດຍໃຫ້ບຸລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ(ມາດຕາ 21).

ລັດເອົາໃຈໃສ່ຂະຫຍາຍການສຶກສາ ຕິດພັນກັບການກໍ່ສ້າງຄົນລຸ້ນໃໝ່ໃຫ້ເປັນພົນລະເມືອງດີ,ມີ ຄຸນສົມບັດສົນທຳປະຕິວັດ, ມີຄວາມຮູ້ ແລະ ຄວາມສາມາດ.ພັດທະນາການສຶກສາໃຫ້ມີຄຸນະພາບ, ສ້າງ ໂອກາດ ແລະເງື່ອນໄຂໃຫ້ປະຊາຊົນ, ແມ່ຍິງ ແລະ ເດັກນ້ອຍ, ຜູ້ດ້ອຍໂອກາດທີ່ຢູ່ຫ່າງໄກສອກຫຼີກ. ລັດ ສົ່ງເສີມໃຫ້ ແລະ ຊຸກຍູ້ໃຫ້ເອກະຊົນລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດຕາມກົດໝາຍ (ມາດຕາ 22).

ລັດສົ່ງເສີມການອະນຸລັກວັດທະນະທຳທີ່ດີງາມຂອງຊາດ, ສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິນລະປະວັນນະຄະດີ, ການປະດິດແຕ່ງ, ຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກທາງວັດທະນະທຳ, ປະຫວັດສາດ, ທຳມະຊາດ... ລັດສົ່ງເສີມສະຕິປັນຍາ ແລະ ຫົວຄິດປະດິດສ້າງໃນວຽກງານການຄົ້ນຄ້ວາ (ມາດຕາ 24-24).

ລັດເອົາໃຈໃສ່ປັບປຸງ ແລະ ຂະຫຍາຍວຽກງານສາທາລະນະສຸກເພື່ອຮັກສາສຸຂະພາບຂອງປະຊາຊົນ; ຊຸກຍູ້ສົ່ງເສີມ ແລະ ລົງທຶນເຂົ້າໃນວຽກງານກິລາການຍະກຳຂອງມະຫາຊົນ ເພື່ອຍົກລະດັບຄວາມສາມາດດ້ານການກິລາໃຫ້ສູງເພື່ອເສີມສ້າງກຳລັງການ ແລະ ສຸຂະພາບຂອງປະຊາຊົນ(ມາດຕາ25-26).

ລັດເອົາໃຈໃສ່ພັດທະນະສີມືແຮງງານ, ສົ່ງເສີມວິຊາອາຊີບ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງຊາວຜູ້ອອກແຮງງານ; ປະຕິບັດນະໂຍບາຍສະຫວັດດີການສັງຄົມເປັນຢ່າງດີ (ມາດຕາ 27-28).

ລັດ, ສັງຄົມ, ຄອບຄົວເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ເດັກນ້ອຍ; ເປີດກ້ວາງການທ່ອງທ່ຽວວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ (ມາດຕາ 29-30).

4. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແມ່ນໜ້າທີ່ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແມ່ນພັນທະຂອງທຸກການຈັດຕັ້ງ, ພົນລະເມືອງລາວທຸກຄົນ ແລະສົມທົບແໜ້ນກັບການພັດທະນາເສດຖະກິດ-ສັງຄົມ; ເອົາໃຈໃສ່ກໍ່ສ້າງຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ, ເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ... ລັດເອົາໃຈໃສ່ປະກອບວັດຖຸອຸປະກອນ, ເຕັກນິກ, ເຕັກໂນໂລຢີ, ພາຫະນະ, ເຄື່ອງມື ແລະ ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາສະເພາະໃຫ້ສູງຂຶ້ນ(ມາດຕາ 31-32).

ລັດເອົາໃຈໃສ່ປະຕິບັດນະໂຍບາຍເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ, ເອົາໃຈໃສ່ຍົກສູງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ. ອອກແຮງສ້າງພາລາທິການກັບທີ່ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ ແລະ ປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ(ມາດຕາ 33).

5. ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ .

ລັດຖະທຳມະນູນໄດ້ກຳນົດສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ສອດຄ່ອງກັບທາດແທ້ຂອງລະບອບປະຊາທິປະໄຕປະຊາຊົນ, ເງື່ອນໄຂ ແລະ ຄວາມສາມາດຕົວຈິງທາງດ້ານເສດຖະກິດ, ສັງຄົມຢູ່ປະເທດເຮົາ, ມັນເປັນການຮັບປະກັນທາງດ້ານກົດໝາຍກ່ຽວກັບການປົກປັກຮັກສາສິດທິມະນຸດອີກດ້ວຍ. ຢູ່ ສ ປ ປລາວ ພົນລະເມືອງລາວລ້ວນແຕ່ມີສິດ ແລະ ພັນທະປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການກຳນົດສິດ ແລະ ພັນທະຂອງພົນລະເມືອງຕິດພັນກັບການຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນ. ມັນເປັນການຍົກສູງຄວາມຮັບຜິດຊອບຂອງພົນລະເມືອງໃນຖານະເປັນເຈົ້າຂອງປະເທດ.

ລັດຖະທຳມະນູນໄດ້ກຳນົດສິດພື້ນຖານຂອງພົນລະເມືອງລາວຢູ່ໃນໝວດທີ 4 ດັ່ງລຸ່ມນີ້:

- ພົນລະເມືອງລາວແມ່ນຜູ້ມີສັນຊາດລາວ.
- ຍິງ-ຊາຍມີສິດສະເໝີພາບຕໍ່ກົດໝາຍ

- ອາຍຸ 18 ປີຂຶ້ນໄປມີສິດປ່ອນບັດເລືອກຕັ້ງ ແລະ ສະໝັກເລືອກຕັ້ງເວັ້ນເສຍຜູ້ທີ່ເປັນບ້າເສຍຈິດ, ຜູ້ຖືກສານຕັດສິນປິດສິດເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ.

- ສິດສະເໝີພາບລະຫວ່າງຍິງ -ຊາຍໃນດ້ານການເມືອງ-ເສດຖະກິດ, ວັດທະນະທຳ ແລະ ຄອບຄົວ.

- ສິດໄດ້ຮັບການສຶກສາຮ່ຳຮຽນ

- ສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບລະບຽບກົດໝາຍ, ມີສິດໄດ້ຮັບພັກຜ່ອນ, ປິ່ນປົວ ທີ່ກຳນົດຢູ່ໃນກົດໝາຍ.

- ສິດເສລີພາບ ໃນການຕັ້ງພຸມລຳເນົາ ແລະ ໄປມາຕາມທີ່ກຳນົດໄວ້ໃນກົດໝາຍກຳນົດໄວ້.

- ສົດຮ້ອງຂໍຕໍ່ວ່າ , ກ່າວຟ້ອງ ແລະ ສະເໜີຄຳເຫັນຕໍ່ອົງການລັດ.

- ສິດບໍ່ມີໃຜຈະລ່ວງລະເມີດໄດ້ຕໍ່ຮ່າງກາຍ ແລະ ເຄຫະສະຖານ.

- ສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ.

- ສິດເສລີພາບໃນການປາກເວົ້າ ແລະການຂີດຂຽນ , ໂຮມຊຸມນຸມ, ລົງໜັງສືພິມ, ສ້າງຕັ້ງສະມາຄົມ ແລະ ເດີນຂະບວນທີ່ຂັດກັບລະບຽບກົດໝາຍ.

- ສິດເສລີພາບໃນການຄົ້ນຄວ້າແລະການນຳໃຊ້ຜົນດຳຜົນສຳເລັດຂອງຄວາມກ້າວໜ້າທາງດ້ານວິທະຍາສາດເຕັກນິກ, ເຕັກໂນໂລຊີ, ປະດິດຄິດແຕ່ງສິລະປະວັນນະຄະດີ ທີ່ບໍ່ຂັດກັບລະບຽບກົດໝາຍ.

- ລັດປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກກົດໝາຍຂອງຜົນລະເມືອງລາວຢູ່ຕ່າງປະເທດ.

ການກຳນົດສິດຕ້ອງໄປຄຽງຄູ່ກັບພັນທະຂອງພົນລະເມືອງ, ໃນເມື່ອລັດປົກປ້ອງສິດເສລີພາບປະຊາທິປະໄຕແລ້ວ ພົນລະເມືອງແຕ່ລະຄົນຕ້ອງເຮັດພັນທະຕໍ່ລັດ, ສິດ ແລະ ພັນທະຕິດພັນກັນ. ລັດຖະທຳມະນູນໄດ້ກຳນົດພັນທະຂອງພົນລະເມືອງດັ່ງນີ້:

- ເຄົາລົບລັດຖະທຳມະນູນ, ກົດໝາຍ, ລະບຽບການອອກແຮງງານ, ລະບຽບການດຳລົງຊີວິດຂອງສັງຄົມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

- ເສຍພາສີ ແລະ ສວ່ຍສາອາກອນຕາມກົດໝາຍ.

- ປົກປັກຮັກສາປະເທດຊາດ ແລະປ້ອງກັນຄວາມສະຫງົບ ແລະ ເຮັດພັນທະທາງທະຫານ.

- ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດກໍມີສິດໄດ້ຮັບການປົກປ້ອງສິດ ແລະ ເສລີພາບຕາມທີ່ກຳນົດໄວ້ໃນກົດໝາຍຂອງ ສ ປ ປ ລາວ. ມີສິດຮ້ອງຟ້ອງຕໍ່ສານ ແລະ ອົງການທີ່ກ່ຽວຂ້ອງຂອງ ສ ປ ປ ລາວ. ມີພັນທະເຄົາລົບລັດຖະທຳມະນູນ ແລະ ລະບຽບກົດໝາຍຂອງ ສ ປ ປ ລາວ.

ລັດຖະທຳມະນູນຍັງໄດ້ກຳນົດໄວ້ວ່າ ສ ປ ປ ລາວ ອະນຸຍາດການລີ້ໄພໃຫ້ແກ່ຄົນຕ່າງປະເທດທີ່ຖືກປາບປາມໄດ້ທຳການຕໍ່ສູ້ເພື່ອອິດສະຫຼະພາບ ແລະ ພາລະກິດວິທະຍາສາດ. ອັນນີ້ແມ່ນນະໂຍບາຍມະນຸດສະທຳ ແລະ ທັງແມ່ນການປົກປ້ອງສິດທິມະນຸດ.

6. ອົງການນິຕິບັນຍັດ(ສະພາແຫ່ງຊາດ).

ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດແຫ່ງລັດ ແລະ ທັງເປັນອົງການນິຕິບັນຍັດທີ່ມີສິດຕົກລົງບັນຫາພື້ນຖານ

ຂອງປະເທດຊາດ, ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

- **ສະພາແຫ່ງຊາດມີສິດ ແລະ ໜ້າທີ່ດັ່ງນີ້:**
  1. ສ້າງ ແລະ ຮັບຮອງເອົາຫຼື ປ່ຽນແປງລັດຖະທຳມະນູນ.
  2. ພິຈາລະນາ, ຮັບຮອງເອົາ, ປ່ຽນແປງ ຫຼື ລົບລ້າງກົດໝາຍ.
  3. ພິຈາລະນາຮັບຮອງເອົາການກຳນົດ, ການປ່ຽນແປງ ຫຼື ລົບລ້າງພາສີ ແລະສ່ວຍສາອາກອນ.
  4. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ.
  5. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ.
  6. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານປະເທດ ແລະ ຮອງປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.
  7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງນາຍົກລັດຖະມົນຕີຕາມການສະເໜີຂອງປະທານປະເທດ ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງສະມາຊິກລັດຖະບານຕາມການສະເໜີຂອງນາຍົກລັດຖະມົນຕີ.
  8. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ.
  9. ຕົກລົງສ້າງຕັ້ງ ຫຼື ຍຸບເລີກກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ, ຕົກລົງເຂດແດນຂອງແຂວງ ແລະ ນະຄອນ ຕາມການສະເໜີຂອງນາຍົກລັດຖະມົນຕີ.
  10. ຕົກລົງໃຫ້ນິລະໂທດກຳ.
  11. ຕົກລົງໃຫ້ສັດຕະຍາບັນ ຫຼື ລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ.
  12. ຕົກລົງປັນຫາສົງຄາມ ຫຼື ສັນຕິພາບ.
  13. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ.
  14. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

- ສະພາແຫ່ງຊາດແຕ່ລະຊຸດມີອາຍຸການ 5 ປີ, ສາມາຊິກສະພາແຫ່ງຊາດແມ່ນແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍ.

7. ປະທານປະເທດ

ປະທານປະເທດເປັນປະມຸກລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນຜູ້ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າທັງຢູ່ພາຍໃນ ແລະ ຕ່າງປະເທດ.

ປະທານປະເທດແມ່ນສະພາແຫ່ງຊາດເປັນຜູ້ເລືອກຕັ້ງໂດຍໄດ້ຮັບຄະແນນສຽງຢ່າງໜ້ອຍ ສອງ ສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ. ປະທານປະເທດມີອາຍຸການ ເທົ່າກັບອາຍຸການຂອງສະພາແຫ່ງຊາດ.

- **ປະທານປະເທດມີສິດ ແລະ ໜ້າທີ່ດັ່ງນີ້:**
  1. ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ.
  2. ອອກລັດຖະບັນຍັດ ແລະ ລັດຖະດຳລັດ.
  3. ສະເໜີການແຕ່ງຕັ້ງ ຫຼື ປົດຕຳແໜ່ງນາຍົກລັດຖະມົນຕີຕໍ່ສະພາແຫ່ງຊາດເພື່ອພິຈາລະນາ ຕົກລົງ.
  4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງນາຍົກລັດຖະມົນຕີ, ແຕ່ງຕັ້ງຍົກຍ້າຍ ຫຼື ປົດຕຳແໜ່ງສະມາຊິກ ລັດຖະບານພາຍຫຼັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.
  5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງປະທານສານປະຊາຊົນສູງສຸດຕາມການສະເໜີຂອງປະທານ ສານປະຊາຊົນສູງສຸດ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງໄອຍະການປະຊາຊົນສູງສຸດຕາມການ ສະເໜີຂອງໄອຍະການປະຊາຊົນສູງສຸດ.
  6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງ ນາຍົກລັດຖະມົນຕີ.
  7. ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ.
  8. ຕົກລົງເລື່ອນຊັ້ນ ຫຼື ປົດຊັ້ນນາຍພົນຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມ ການສະເໜີຂອງນາຍົກລັດຖະມົນຕີ.
  9. ຮຽກໂຮມ ແລະ ເປັນປະທານກອງປະຊຸມພິເສດຂອງລັດຖະບານ.
  10. ຕົກລົງປະດັບຫຼຽນຄຳແຫ່ງຊາດ, ຫຼຽນກາງຕີຄຸນ, ຫຼຽນໄຊ ແລະ ນາມມະຍົດສູງສຸດແຫ່ງລັດ.
  11. ຕົກລົງການໃຫ້ອະໄພຍະໂທດ.
  12. ຕົກລົງການລະດົມພົນທົ່ວໄປ ຫຼື ເປັນພາກສ່ວນ, ຕົກລົງພາວະສຸກເສີນໃນທົ່ວປະເທດ ຫຼື ໃນ ທ້ອງຖິ່ນໃດໜຶ່ງ.
  13. ປະກາດການໃຫ້ສັດຕະຍາບັນ ຫຼື ການລົບລ້າງສົນທິສັນຍາ ແລະ ສັນຍາທີ່ໄດ້ເຊັນກັບ ຕ່າງປະເທດ.
  14. ແຕ່ງຕັ້ງຜູ້ຕາງໜ້າທີ່ມີອຳນາດເຕັມຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປ ປະຈຳຢູ່ຕ່າງປະເທດ ຫຼື ຮຽກກັບຄືນປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ, ຮັບຮອງເອົາຜູ້ຕາງໜ້າທີ່ມີອຳນາດເຕັມຂອງຕ່າງປະເທດທີ່ມາປະຈຳຢູ່ສາທາລະນະລັດ ປະ ຊາທິປະໄຕ ປະຊາຊົນລາວ.
  15. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກຳນົດໄວ້ໃນກົດໝາຍ.

ປະທານປະເທດ ມີຮອງປະທານປະເທດ ເຊິ່ງແມ່ນສະພາແຫ່ງຊາດເປັນຜູ້ເລືອກຕັ້ງໂດຍໄດ້ຮັບ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ.

8. ລັດຖະບານ

ລັດຖະບານ ແມ່ນອົງການບໍລິຫານແຫ່ງລັດ, ລັດຖະບານຄຸ້ມຄອງຢ່າງເປັນເອກະພາບການປະຕິບັດໜ້າທີ່ຂອງລັດໃນທຸກດ້ານ: ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

- **ລັດຖະບານມີສິດ ແລະໜ້າທີ່ດັ່ງນີ້:**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ.
2. ສະເໜີຮ່າງກົດໝາຍ ແລະຮ່າງລັດຖະບັນຍັດຕໍ່ສະພາແຫ່ງຊາດ, ຮ່າງລັດຖະດຳລັດຕໍ່ປະທານປະເທດ.
3. ກຳນົດແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປະຈຳປີ ແລ້ວນຳສະເໜີໃຫ້ສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາ.
4. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາແຫ່ງຊາດ, ຕໍ່ຄະນະປະຈຳສະພາແຫ່ງຊາດ(ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ) ແລະ ລາຍງານຕໍ່ປະທານປະເທດ.
5. ອອກດຳລັດ, ມະຕິຕົກລົງກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ- ສັງຄົມ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຢີ, ຊັບພະຍາກອນແຫ່ງຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.
6. ຈັດຕັ້ງ, ຊີ້ນຳ ແລະ ກວດກາການເຄື່ອນໄຫວຂອງບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ.
7. ຈັດຕັ້ງ ແລະ ກວດກາການເຄື່ອນໄຫວຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
8. ເຊັນສົນທິສັນຍາ, ສັນຍາກັບຕ່າງປະເທດ ແລະ ຊີ້ນຳການປະຕິບັດສົນທິສັນຍາ ແລະ ສັນຍາທີ່ໄດ້ເຊັນແລ້ວ.
9. ຖອດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງຂອງກະຊວງ, ອົງການທຽບເທົ່າກະຊວງ,ອົງການທີ່ຂຶ້ນກັບລັດຖະບານ ແລະອົງການປົກຄອງທ້ອງຖິ່ນທີ່ຂັດກັບລະບຽບກົດໝາຍ.
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກຳນົດໄວ້ໃນກົດໝາຍ.

ລັດຖະບານປະກອບດ້ວຍນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ.

ລັດຖະບານມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ

ນາຍົກລັດຖະມົນຕີແມ່ນປະທານປະເທດເປັນຜູ້ແຕ່ງຕັ້ງ ຫຼື ປົດຕຳແໜ່ງພາຍຫຼັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

9. ການປົກຄອງທ້ອງຖິ່ນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແບ່ງການປົກຄອງທ້ອງຖິ່ນອອກເປັນ ສາມ ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນແຂວງ ມີແຂວງ ແລະ ນະຄອນ

ຂັ້ນເມືອງ ມີເມືອງ ແລະ ເທດສະບານ

ຂັ້ນບ້ານ ມີບ້ານ

ແຂວງມີເຈົ້າແຂວງ, ນະຄອນມີເຈົ້າຄອງນະຄອນ, ເມືອງມີເຈົ້າເມືອງ, ເທດສະບານມີຫົວໜ້າເທດສະບານ, ບ້ານມີນາຍບ້ານ.

ເຈົ້າແຂວງມີຮອງເຈົ້າແຂວງ, ເຈົ້າຄອງນະຄອນມີຮອງເຈົ້າຄອງນະຄອນ, ເຈົ້າເມືອງມີຮອງເຈົ້າເມືອງ, ຫົວໜ້າເທດສະບານມີຮອງຫົວໜ້າເທດສະບານ, ນາຍບ້ານມີຮອງນາຍບ້ານເປັນຜູ້ຊ່ວຍວຽກ.

ໃນກໍລະນີທີ່ຈຳເປັນອາດຈະສ້າງຕັ້ງເຂດພິເສດຂຶ້ນຕາມການຕົກລົງຂອງສະພາແຫ່ງຊາດ, ເຂດພິເສດມີຖານະທຽບເທົ່າກັບແຂວງ.

- ເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງມີສິດ ແລະໜ້າທີ່ລວມດັ່ງນີ້:
  1. ຮັບປະກັນການປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ, ຈັດຕັ້ງປະຕິບັດທຸກມະຕິຄຳສັ່ງທີ່ຂັ້ນເທິງວາງອອກຢ່າງເຂັ້ມງວດ.
  2. ຊີ້ນຳ ແລະກວດກາການເຄື່ອນໄຫວຂອງທຸກຂະແໜງການ, ທຸກຂັ້ນທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ.
  3. ຖອດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງຂອງທຸກຂະແໜງການທີ່ຢູ່ຂັ້ນຂອງຕົນ ຫຼື ຂັ້ນລຸ່ມທີ່ຂັດກັບລະບຽບກົດໝາຍ.
  4. ຄຸ້ມຄອງພົນລະເມືອງ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ແລະ ຄຳສະເໜີຂອງປະຊາຊົນຢູ່ໃນເຂດສິດອຳນາດຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.
  5. ປະຕິບັດສິດແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.
     - ຫົວໜ້າເທດສະບານມີສິດ ແລະ ໜ້າທີ່ໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການພັດທະນາຕົວເມືອງ, ບໍລິການສາທາລະນະໃຫທົ່ວເຖິງ, ມີຄວາມເປັນລະບຽບຮຽບຮ້ອຍ... ປະຕິບັດສິດ ແລະໜ້າທີ່ອື່ນໆຕາມທີ່ໄດກຳນົດໄວ້ຕາມລະບຽບກົດໝາຍ.
     - ນາຍບ້ານມີຄວາມຮັບຜິດຊອບຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ມະຕິຄຳສັ່ງຂອງລັດ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ ແລະ ພັດທະນາບ້ານໃຫ້ມີຄວາມໜັກແໜ້ນໃນທຸກດ້ານ.

10. ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ

10.1 ສານປະຊາຊົນ:

ສານປະຊາຊົນແມ່ນອົງການພິພາກສາຂອງລັດເຊິ່ງປະກອບດ້ວຍ:

- ສານປະຊາຊົນສູງສຸດ
- ສານອຸທອນ
- ສານປະຊາຊົນແຂວງ, ນະຄອນ
- ສານປະຊາຊົນເມືອງ
- ສານທະຫານ

ໃນກໍລະນີທີ່ຈຳເປັນອາດຈະສ້າງຕັ້ງສານສະເພາະຕາມຂະແໜງການຂຶ້ນກໍໄດ້ ໂດຍການຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ.

10.2 ອົງການໄອຍະການປະຊາຊົນ:

ອົງການໄອຍະການປະຊາຊົນແມ່ນອົງການຕິດຕາມກວດກາການປະຕິບັດກົດໝາຍເຊິ່ງປະກອບ ດ້ວຍ:

- ອົງການໄອຍະການປະຊາຊົນສູງສຸດ
- ອົງການໄອຍະການປະຊາຊົນຂັ້ນອຸທອນ
- ອົງການໄອຍະການປະຊາຊົນແຂວງ, ນະຄອນ
- ອົງການໄອຍະການປະຊາຊົນເມືອງ
- ອົງການໄອຍະການທະຫານ

+ **ອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້:**

1. ຕິດຕາມກວດກາການເຄົາລົບລະບຽບກົດໝາຍຢ່າງຖືກຕ້ອງ ແລະ ເປັນເອກະພາບຢູ່ໃນທຸກ ກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິຊາຫະກິດ, ລັດຖະກອນ ແລະ ພົນລະເມືອງ.
2. ປະຕິບັດສິດກ່າວຟ້ອງ.

11. ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ.

- ພາສາ ແລະ ອັກສອນລາວເປັນພາສາ ແລະ ອັກສອນທີ່ໃຊ້ເປັນທາງການ.

- ເຄື່ອງໝາຍຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວເປັນຮູບວົງມົນ ດ້ານລຸ່ມມີ ຮູບເຄິ່ງກົງຈັກເປັນແຂ້ວ ແລະ ໂບສີແດງຂຽນອັກສອນ " ສາທາລະນະລັດປະຊາທິປະໄຕປະຊາຊົນ ລາວ", ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຟື້ອງພະຈັນ ແລະ ໂບສີແດງຂຽນ ອັກສອນ " ສັນຕິ ພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນາຖາວອນ ", ລະຫວ່າງກາງຂອງສອງຮວງເຂົ້າ ມີຮູບທາດຫຼວງ, ຢູ່ກາງຮູບວົງມົນມີຫົນທາງ, ທົ່ງນາ, ປ່າໄມ້ແລະ ເຂື່ອນໄຟຟ້ານ້ຳຕົກ.

- ທຸງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນທຸງພື້ນສີຄາມ, ແຂບສີແດງ ແລະ ວົງເດືອນສີຂາວຢູ່ເຄິ່ງກາງຂອງທຸງຊາດ. ລວງກວ້າງຂອງທຸງເທົ່າກັບສອງສ່ວນສາມຂອງລວງຍາວ, ລວງກວ້າງຂອງແຂບສີແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງລວງກວ້າງແຂບສີຄາມ ແລະ ວົງເດືອນສີ ຂາວກວ້າງເທົ່າກັບສີ່ສ່ວນຫ້າຂອງລວງກວ້າງແຂບສີຄາມ.

- ເພງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນເພງທີ່ມີຊື່ວ່າ " ຊາດລາວ ".

- ວັນຊາດຂອງາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນວັນສະຖາປະນາ ທາລະນະ ລັວປະຊາທິປະໄຕປະຊາຊົນລາວຄື. ວັນທີ 2 ເດືອນ ທັນວາປີ 1975.

- ສະກຸນເງິນ ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນເງິນກີບ.

- ນະຄອນລວງຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນ ນະຄອນຫຼວງວຽງຈັນ.

12. ບົດບັນຍັດສຸດທ້າຍ.

- ລັດຖະທຳມະນູນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນກົດ ໝາຍພື້ນຖານ ຂອງຊາດ. ທຸກກົດໝາຍຕ້ອງໃຫ້ສອດຄ່ອງກັບລັດຖະທຳມະນູນ.

- ມີແຕ່ກອງປະຊຸມສະພາແຫ່ງຊາດແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວເທົ່ານັ້ນ ຈຶ່ງມີສິດປ່ຽນແປງລັດຖະທຳມະນູນ.

ໃນການປ່ຽນແປງລັດຖະທຳມະນູນຕ້ອງມີສຳມະຊິກສະພາແຫ່ງຊາດຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສຳມະຊິກທັງໝົດເປັນຜູ້ລົງຄະແນນສຽງເຫັນດີ.

- ລັດຖະທຳມະນູນສະບັບນີ້ມີຜົນສັກສິດນັບແຕ່ວັນປະທານປະເທດແຫ່ງສາທາລະນະລັດປະຊາ ທິປະໄຕປະຊາຊົນລາວອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຄຳຖາມ

1. ຄຳນຳຂອງລັດຖະທຳມະນູນມີຄວາມໝາຍແນວໃດ ?
2. ລັດຖະທຳມະນູນໄດ້ກຳນົດລະບອບການເມືອງ, ລະບອບເສດຖະກິດ, ສັງຄົມໄວ້ແນວໃດ?
3. ສິດ ປລະພັນທະຂອງພົນລະເມືອງມີອັນໃດແດ່?
4. ລະບົບກົງຈັກລັດແຫ່ງ ສປປລາວມີແນວໃດ? ແລະມີສິດໜ້າທີ່ຫຍັງແດ່?
5. ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງມີແນວໃດ?.

ພາກທີ III

ກົດໝາຍອາຍາ

ບົດທີ 6

ກົດໝາຍອາຍາພາກທົ່ວໄປ.

1. ນິຍາມ ແລະ ໜ້າທີ່ຂອງກົດໝາຍອາຍາ.

1.1. ນິຍາມ :

ກົດໝາຍອາຍາແມ່ນຂໍ້ກຳນົດທີ່ວາງອອກ ແລະ ຄຸ້ມຄອງໂດຍລັດ, ເຊິ່ງກ່າວເຖິງພຶດຕິກຳທີ່ຖືວ່າເປັນການກະທຳຜິດທາງອາຍາ, ກຳນົດເງື່ອນໄຂ ແລະ ວິທີການກ່ຽວກັບການວາງໂທດ, ກຳນົດສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ແລະເງື່ອນໄຂກ່ຽວກັບການພົ້ນຈາກການລົງໂທດ.

ກົດໝາຍອາຍາ ແມ່ນກົດໝາຍພື້ນຖານຂອງລັດຂະແໜງໜຶ່ງ ເຊິ່ງວາງອອກເພື່ອປົກປັກຮັກສາ ແລະເສີມຂະຫຍາຍສາຍພົວພັນສັງຄົມ ທີ່ອຳນວຍຜົນປະໂຫຍດໃຫ້ແກ່ຊົນຊັ້ນທີ່ຄອບຄອງສັງຄົມ.

ກົດໝາຍອາຍາເກີດຂຶ້ນພ້ອມກັບກຳມະສິດເອກະຊົນ ການແບ່ງສັງຄົມອອກເປັນຊົນຊັ້ນແລະລັດ.

1.2. ໜ້າທີ່ຂອງກົດໝາຍອາຍາ ຂອງ ສ ປ ປລາວ.

ກົດໝາຍອາຍາລາວ ມີພາລະໜ້າທີ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກຳມະສິດຂອງລັດ ແລະ ຂອງລວມໝູ່, ບຸກຄົນ ສິດ ແລະຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມສະຫງົບສຸກຂອງບ້ານເມືອງ. ຕ້ານ ແລະ ສະກັດກັ້ນການກະທຳຜິດ ແລະ ສຶກສາອົບຮົມໃຫ້ພົນລະເມືອງຕື່ນຕົວເຄົາລົບກົດໝາຍ.

2. ຫຼັກການຂອງກົດໝາຍອາຍາ ສ ປ ປ ລາວ.

2.1 .ຫຼັກການຊົນຊັ້ນ :

ຫຼັກການນີ້ກຳນົດອອກຢູ່ບ່ອນວ່າ ທຸກຂໍ້ກຳນົດຂອງກົດໝາຍອາຍາຮັບໃຊ້ສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະຊາວຜູ້ອອກແຮງງານ, ຕອບສະໜອງຄວາມຮຽບຮ້ອງຕ້ອງການຂອງລັດ. ກົດໝາຍອາຍາແມ່ໃສ່ຮັບປະກັນສິດເປັນເຈົ້າຂອງປະຊາຊົນ. ຫຼັກການດັ່ງກ່າວນີ້ໄດ້ສະແດງອອກຢ່າງຈະແຈ້ງຢູ່ໃນກົດໝາຍອາຍາ.

2.2. ຫຼັກການນິຕິທຳ :

ຢູ່ໃນກົດໝາຍອາຍາ ມີກຳນົດຢ່າງຄົບຖ້ວນ ແລະຊັດເຈນພື້ນຖານ, ເງື່ອນໄຂ ແລະ ຂອບເຂດຄວາມຮັບຜິດຊອບທາງອາຍາ.

ຈະຖືວ່າພຶດຕິກຳໃດໜຶ່ງເປັນການກະທຳຜິດທາງອາຍາໄດ້ກໍເມື່ອພຶດຕິກຳດັ່ງກ່າວ ຫາກມີຄວາມກັນດາຕໍ່ສັງຄົມ ແລະ ຖືກບັ່ງໄວ້ໃນກົດໝາຍອາຍາ. ພຶດຕິກຳໃດທີ່ບໍ່ໄດ້ບັ່ງໄວ້ໃນກົດໝ!ຍອາຍາກໍຈະບໍ່ຖືວ່າເປັນການກະທຳຜິດທາງອາຍາໄດ້. ພ້ອມກັນນັ້ນກົດໝາຍອາຍາກໍໄດ້ບັ່ງປະເພດໂທດທີ່ສານສາ

ມາດລົງໃສ່ຜູ້ທີ່ກະທຳຜິດ, ນອກຈາກໂທດທີ່ ບົ່ງໄວ້ໃນກົດໝາຍອາຍານີ້ແລ້ວ ບໍ່ສາມາດນຳມາເອົາໂທດອື່ນມາລົງໃສ່ຜູ້ກະທຳຜິດໄດ້. ເວົ້າລວມນິຕິທຳຮຽກຮ້ອງໃຫ້ອົງການຮັບຜິດຊອບການດຳເນີນຄະດີອາຍາຕ້ອງປະຕິບັດຕາມຂໍ້ກຳນົດຂອງກົດໝາຍອາຍາຢ່າງເຂັ້ມງວດ.

2.3 ຫຼັກການມະນຸດສະທຳ.

ກົດໝາຍອາຍາທີ່ສະແດງອອກເຊິ່ງສະຕິກົດໝາຍຂອງຊົນຊັ້ນກຳມະກອນ ແລະຊາວຜູ້ອອກແຮງງານມີຈຸດປະສົງມະນຸດສະທຳ.

ກົດໝາຍອາຍາຂອງ ສ ປ ປລາວ ເອົາໃຈໃສ່ໃນການປົກປັກຮັກສາບຸກຄົນ, ສິດ ແລະ ຜົນປະໂຫຍດຂອງບຸກຄົນ, ລະບອບສັງຄົມເພື່ອການປ່ຽນແປງ ແລະ ການສຶກສາອົບຮົມຜູ້ກະທຳຜິດ ເພື່ອໃຫ້ສາມາດກັບຄືນສູ່ສັງຄົມໄດ້ ແລະ ການດຳລົງຊີວິດດ້ວຍການອອກແຮງງານທີ່ສັດຊື່ບໍລິສຸດ. ນອກຈາກນີ້ຫຼັກການມະນຸດສະທຳກໍສະແດງຢູ່ບ່ອນວ່າ ໃນກໍລະນີທີ່ແນ່ນອນມີຄວາມອາດສາມາດຫຼຸດພົ້ນອອກຈາກຄວາມຮັບຜິດຊອບ ທາງອາຍາ ແລະໂທດ, ການປົດປ່ອຍອອກຈາກການປະຕິບັດໂທດກ່ອນກຳນົດ ແລະ ອື່ນໆ .

2.4 ຫຼັກການ ຄວາມຮັກຊາດ.

ຫຼັກການນີ້ສະແດງອອກຢ່າງຈະແຈ້ງຢູ່ໃນຂໍ້ກຳນົດກົດໝາຍອາດຍາ ເຊິ່ງຄວາມຮັບຜິດຊອບທີ່ເນື່ອງມາຈາກການແຕະຕ້ອງເຖິງລະບອບສັງຄົມ, ຄວາມປອດໄພຂອງຊາດ ແລະ ອື່ນໆ ການແຕະຕ້ອງດັ່ງກ່າວໄດ້ຮັບໂທດໜັກ ອັນນີ້ອຳນວຍຄວາມສະດວກໃຫ້ແກ່ການສຶກສາອົບຮົມພົນລະເມືອງໃຫ້ມີ ຄວາມຈົງຮັກພັກດີຕໍ່ປະເທດຊາດ, ປະຕິບັດພັນທະໃນການປົກປັກຮັກສາປະເທດຊາດຂອງຕົນໂດຍສະ ໝັກໃຈ.

2.5 ຫຼັກການສາກົນນິຍົມ

ກົດໝາຍອາຍາຂອງ ສ ປ ປ ລາວ ນອກຈາກປົກປັກຮັກສາສິດຜົນປະໂຫຍດຂອງປະເທດຕົນເອງແລ້ວຍັງປົກປັກຮັກສາສິດຜົນປະໂຫຍດອັນຊອບທຳຂອງປະເທດສັງຄົມນິຍົມອີກ. ການກະທຳຜິດເຊິ່ງມີຄວາມກັນດາມເປັນພິເສດທີ່ໄດ້ກະທຳຕໍ່ລັດສັງຄົມນິຍົມ ກໍຈະຖືກລົງໂທດເໝືອນກັນກັບໄດ້ກະທຳຜິດຕໍ່ ສ ປ ປ ລາວ ເອງ.

3.ການກະທຳຜິດ ທາງອາຍາ

3.1 ລັກສະນະຊົນຊັ້ນ ຂອງ ການກະທຳຜິດ

- ຊົນຊັ້ນເຈົ້າທາດ, ສັກດິນາ ແລະ ນາຍທຶນຖືວ່າເປັນການກະທຳຜິດທາງອາຍາແມ່ນທຸກໆພຶດຕິກຳທີ່ແຕະຕ້ອງເຖິງສິດຜົນປະໂຫຍດຂອງພວກເຂົາ.
- ຢູ່ໃນສັງຄົມປະຊາທິປະໄຕຈະຖືວ່າເປັນການກະທຳຜິດທາງອາຍາກໍຕໍ່ເມື່ອທຸກພຶດຕິກຳທີ່ເປັນໄພອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດແລະສັງຄົມ, ກຳມະສິດຂອງລັດ, ລວມໝູ່, ບຸກຄົນ. ສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

3.2 ນິຍາມການກະທຳຜິດທາງອາຍາ

ການກະທຳຜິດທາງອາຍາ ແມ່ນທຸກການກະທຳ ຫຼື ທຸກການເມີນເສີຍທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ກຳມະສິດຂອງລັດ, ລວມໝູ່, ບຸກຄົນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຄວາມເປັນລະບຽບຮ້ອຍຂອງສັງຄົມ ແລະ ຄວາມສະຫງົບສຸກຂອງບ້ານເມືອງ.

4. ອົງປະກອບຂອງການກະທຳຜິດທາງອາຍາ

ອົງປະກອບຂອງການກະທຳຜິດທາງອາຍາ ແມ່ນບັນດາເຄື່ອງໝາຍທີ່ບອກວ່າພຶດຕິກຳໃດໜຶ່ງເປັນການກະທຳຜິດ. ການກະທຳຜິດທາງອາຍາຕ້ອງມີ 4 ອົງປະກອບຄື:

4.1 ວັດຖຸກຳ

ແມ່ນສາຍພົວພັນສັງຄົມທີ່ໄດ້ຮັບການຄຸ້ມຄອງຈາກກົດໝາຍອາຍາເຊິ່ງການກະທຳຜິດແມ່ໃສ່ທຳລາຍ.

4.2 ດ້ານພາວະວິໄສ

ແມ່ນບັນດາເຄື່ອງໝາຍຂອງການກະທຳຜິດ ທີ່ສະແດງອອກມາພາຍນອກທີ່ບົ່ງໄວ້ໃນກົດໝາຍອາຍາ ມີ 4 ເຄື່ອງໝາຍຄື:

- ພຶດຕິກຳແມ່ນການກະທຳ ຫຼື ການເມີນເສີຍທີ່ເປັນໄພຕໍ່ສັງຄົມ. ການກະທຳແມ່ນການເຄື່ອນໄຫວທີ່ເປັນອັນຕະລາຍຕໍ່ສັງຄົມ ແລະ ເປັນການລະເມີດກົດໝາຍອາຍາ. ການເມີນເສີຍແມ່ນການບໍ່ເຮັດໃນສິ່ງກົດໝາຍບອກໃຫ້ເຮັດ.

- ຜົນສະທ້ອນຈາກພຶດຕິກຳ ແມ່ນຄວາມເສຍຫາຍທີ່ເນື່ອງມາຈາກພຶດຕິກຳ. ຄວາມເສຍຫາຍອາດແມ່ນດ້ານຮ່າງກາຍ, ວັດຖຸ, ກຽດຊື່ສຽງ ແລະ ອື່ນໆ.

- ສາຍພົວພັນເຫດ ແລະ ຜົນລະຫວ່າງພຶດຕິກຳ ແລະ ຜົນສະທ້ອນແມ່ນສາຍພົວພັນລະຫວ່າງພຶດຕິກຳ ແລະ ຜົນສະທ້ອນທີ່ເກີດຂຶ້ນຈາກພຶດຕິກຳນັ້ນ.ພຶດຕິກຳຕ້ອງເກີດກ່ອນຜົນສະທ້ອນ ແລະເປັນສາເຫດທີ່ຈຳເປັນໃຫ້ແກ່ຜົນສະທ້ອນນັ້ນ.

- ວັນ, ເວລາ, ສະຖານທີ່ ແລະ ພາຫະນະຂອງການກະທຳຜິດ. ໃນບາງກໍລະນີ ວັນ, ເວລາ, ສະຖານທີ່ເປັນອົງປະກອບອັນຈຳເປັນຂອງການກະທຳຜິດ.

4.3 ດ້ານອັດຕະວິໄສ

ແມ່ນທັດສະນະຂອງເຈົ້າກຳຕໍ່ການກະທຳຜິດຂອງຕົນ ທີ່ສະແດງອອກຢູ່ໃນຮູບການຂອງຄວາມຜິດ, ສາເຫດ ແລະ ຈຸດປະສົງຂອງການກະທຳຜິດ.

ກ. ຄວາມຜິດແມ່ນທັດສະນະຂອງເຈົ້າກຳຕໍ່ການກະທຳຜິດຂອງຕົນທີ່ສະແດງອອກຢູ່ໃນຮູບການເຈຕະນາ ຫຼື ຄວາມບໍ່ລະມັດລະວັງ.

- ຖືວ່າເປັນການກະທຳຜິດໂດຍເຈຕະນາເມື່ອຜູ້ກະທຳຜິດຮູ້ວ່າການກະທຳ ຫຼື ການເມີນເສີຍຂອງຕົນເປັນອັນຕະລາຍຕໍ່ສັງຄົມ ແລະ ຄາດຄະເນເຖິງຜົນສະທ້ອນຂອງພຶດຕິກຳແຕ່ຈິງໃຈເຮັດໃຫ້ມັນເກີດຂຶ້ນ ຫຼື ຈິງໃຈປະປ່ອຍໃຫ້ມັນເກີດຂຶ້ນ.

- ຈະຖືວ່າເປັນການກະທຳຜິດໂດຍຄວາມບໍ່ລະມັດລະວັງ ເມື່ອຜູ້ກະທຳຜິດຄາດຄະເນໄດ້ວ່າ ການກະທຳ ຫຼື ການເມີນເສີຍຂອງຕົນອາດຈະມີຜົນສະທ້ອນທີ່ເປັນອັນຕະລາຍຕໍ່ສັງຄົມແຕ່ເຊື່ອໝັ້ນວ່າ ມັນຈະບໍ່ເກີດຂຶ້ນຫຼືບໍ່ຄາດຄະເນໄດ້ເຖິງຜົນສະທ້ອນດັ່ງກ່າວທັ້ງທີ່ຜູ້ກະທຳຜິດຕ້ອງຮູ້ ແລະ ສາມາດຄາດຄະເນໄດ້.

ຂ. ສາເຫດຂອງການກະທຳຜິດແມ່ນສິ່ງທີ່ຊຸກດັນໃຫ້ເກີດມີຄວາມຮູ້ສຶກຢາກກະທຳຄວາມຜິດ.

ຄ. ຈຸດປະສົງຂອງການກະທຳຜິດ ແມ່ນສິ່ງທີ່ຕອ້ງການຈາກການກະທຳຜິດ.

4.4 ເຈົ້າກຳ

ແມ່ນບຸກຄົນທີ່ມີສະຕິສຳປະຊັນຍະ ແລະ ເຖິງກະສຸນອາຍຸທາງອາຍາ ເຊິ່ງກ່ໍພຶດຕິກຳທີ່ເປັນໄພອັນຕະລາຍຕໍ່ສັງຄົມ.

- ສະຕິສຳປະຊັນຍະຂອງເຈົ້າກຳ ແມ່ນຄວາມສາມາດຮູ້ຮ້າຍຮູ້ດີ ແລະ ສາມາດບັນຊາພຶດຕິກຳຂອງຕົນໄດ້.

- ຈະຖືວ່າເປັນເຈົ້າກຳໄດ້ກ່ໍຕໍ່ເມື່ອ ມີອາຍຸເຖິງກະສຸນທາງອາຍາ ໃນເວລາກະທຳຜິດ.

- ເຈົ້າກຳພິເສດ ແມ່ນຜູ້ທີ່ໄດ້ກະທຳຜິດ ໂດຍມີການພົວພັນກັບອາຊີບ, ເພດ, ສາຍພົວພັນຄອບຄົວ, ຍາດ ແລະ ອື່ນໆ.

4.5 ສະຖານການກະທຳຜິດ

- ລະຫໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕຳນິວິຈານຕໍ່ໜ້າມະຫາຊົນ.

- ໂທສານຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດດັດສ້າງ ໂດຍບໍ່ຕັດອິດສະຫຼະພາບ, ປັບໃໝ, ໂທດຕັດສິນອິດສະຫຼະພາບແຕ່ ສາມເດືອນຫາ 10 ປີ.

- ຄະຣຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕັດອິດສະຫຼະພາບແຕ່ຫ້າປີຂຶ້ນໄປ ຫາປະຫານຊີວິດ.

5 ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ.

ແມ່ນສາເຫດທີ່ກ່ໍຄວາມເສຍຫາຍໃຫ້ແກ່ສັງຄົມເຊິ່ງມີລັກສະນະເປັນການກະທຳຜິດແຕ່ບໍ່ເປັນໄພອັນຕະລາຍຕໍ່ສັງຄົມ ແລະ ບໍ່ຖືວ່າເປັນການກະທຳຜິດທາງອາຍາ.

- **ສາເຫດດັ່ງກ່າວມີ:**

ກ. ການຖືກບັງຄັບ ຫຼື ການຂົ່ມຂູ່ ເຊິ່ງຕົນບໍ່ສາມາດຫຼີກລ່ຽງໄດ້

ຂ. ການປ້ອງກັນຕົວແມ່ນການກະທຳເພື່ອປ້ອງກັນຜົນປະໂຫຍດຂອງລັດ, ຂອງສັງຄົມ, ຂອງຕົນເອງ ຫຼື ຂອງບຸກຄົນອື່ນໆ ຕ້ານການບຸກລຸກທີ່ຜິດກົດໝາຍ. ການບຸກລຸກຕ້ອງມີຈິງ ແລະ ມີລັກສະນະເປັນອັນຕະລາຍ ແລະ ການປ້ອງກັນບໍ່ໃຫ້ກາຍຂອບເຂດຂອງການບຸກລຸກ.

- **ເງື່ອນໄຂຂອງການປ້ອງກັນມີ:**

- ການບຸກລຸກຕ້ອງມີຈິງ ແລະ ເປັນໄພອັນຕະລາຍ.

- ການປ້ອງກັນບໍ່ໃຫ້ກາຍຂອບເຂດຂອງການບຸກລຸກ, ປະຕິບັດໃນເວລາຈຳກັດ ແລະ ມີຈຸດປະສົງທີ່ຖືກຕ້ອງຕາມກົດໝາຍ.

ຄ. ສະພາວະທີ່ຈຳເປັນແມ່ນກໍລະນີທີ່ການກະທຳນັ້ນໄດ້ເຮັດໄປດ້ວຍຄວາມຈຳເປັນເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ ສິດ ແລະ ຜົນປະໂຫຍດຂອງລັດ, ຂອງສັງຄົມ, ຂອງຕົນເອງ ຫຼື ຂອງບຸກຄົນອື່ນ ແລະໃນເມື່ອໄພອັນຕະລາຍດັ່ງກ່າວບໍ່ສາມາດຫຼີກເວັ້ນໄດ້ດ້ວຍວິທີອື່ນ ແລະ ຜົນເສຍຫາຍທີ່ເກີດຈາກການກະທຳນັ້ນ ຕ້ອງໜ້ອຍກວ່າຜົນເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍ.

- **ສະພາວະທີ່ຈຳເປັນປະກອບດ້ວຍເງື່ອນໄຂດັ່ງນີ້:**

- ໄພອັນຕະລາຍຕ້ອງຂົ່ມຂູ່ ສິດຜົນປະໂຫຍດທີ່ຊອບດ້ວຍກົດໝາຍ.
- ໄພອັນຕະລາຍນັ້ນບໍ່ສາມາດສະກັດກັ້ນດ້ວຍວິທີອື່ນ.
- ໄພອັນຕະລາຍນັ້ນຕ້ອງມີຈິງ ແລະບໍ່ໄດ້ເກີດຂຶ້ນ ຍ້ອນຄວາມຜິດຂອງຕົນເອງ.
- ການສະກັດກັ້ນ ຕ້ອງກະທຳຂຶ້ນໃນເວລາກະທັນຫັນ.
- ການເສຍຫາຍທີ່ເກີດຂຶ້ນຈາກການສະກັດກັ້ນນັ້ນ ຕ້ອງໜ້ອຍກວ່າການເສຍຫາຍທີ່ຈະເກີດຂຶ້ນຈາກໄພອັນຕະລາຍ.

6. ໄລຍະຂອງການກະທຳຜິດ.

6.1ໄລຍະຂອງການກະທຳຜິດ:

ແມ່ນຂັ້ນຕອນໃນການຂະຫຍາຍຕົວຂອງການກະທຳຜິດ ໂດຍເຈຕະນາທີ່ສະແດງອອກໃນການກະກຽມ, ການພະຍາຍາມ ແລະ ການກະທຳຜິດທີ່ສິ້ນສຸດລົງ.

- **ໄລຍະຂອງການກະທຳຜິດມີ:**

ກ. ການກະກຽມການກະທຳຜິດແມ່ນການຫ້າງຫາພາຫະນະອຸປະກອນ, ການສ້າງເງື່ອນໄຂເພື່ອກະທຳຜິດ ຫຼືການຕົກລົງກັບບຸກຄົນອື່ນເພື່ອກະທຳຜິດໃດໜຶ່ງ. ການຫ້າງຫາພາຫະນະອຸປະກອນ, ການສ້າງເງື່ອນໄຂ, ການຕົກລົງກັບບຸກຄົນອື່ນເພື່ອກະທຳຜິດສະແດງເຖິງດ້ານພາວະວິໄສຂອງການກະກຽມ. ພ້ອມກັນນັ້ນເມື່ອຮູ້ດີວ່າການກະທຳເຫຼົ່ານີ້ແມ່ນແນໃສ່ການກະທຳຜິດໂດຍກົງ ແລະ ມີຄວາມຕ້ອງການຢາກໃຫ້ການກະທຳຜິດນັ້ນເກີດຂຶ້ນອັນນີ້ເປັນດ້ານອັດຕະວິໄສຂອງການກະທຳຜິດ.

ຂ. ການພະຍາຍາມກະທຳຜິດແມ່ນການກະທຳຜິດແລ້ວແຕ່ຍອ້ນມີສາຍເຫດນອກຕົວເຊິ່ງບໍ່ຂຶ້ນກັບເຈຕະນາຂອງຜູ້ກະທຳຜິດມາຂັດຂວາງພາໃຫ້ການກະທຳດັ່ງກ່າວນັ້ນບໍ່ສຳເລັດຜົນ. (ການພະຍາຍາມບໍ່ສິ້ນສຸດ ແລະ ການພະຍາຍາມສິ້ນສຸດ). ການກະທຳທີ່ແນໃສ່ການກະທຳຜິດໂດຍກົງ, ການກະທຳຜິດທີ່ບໍ່ສຳເລັດຜົນຍ້ອນສາຍເຫດນອກຕົວປະກອບເປັນດ້ານພາວະວິໄສຂອງການພະຍາຍາມ. ພ້ອມກັນນັ້ນເມື່ອຮູ້ດີວ່າການກະທຳຂອງຕົນເປັນການກະທຳຜິດ ແລະ ຕ້ອງການຢາກໃຫ້ມັນເກີດຂຶ້ນອັນນີ້ເປັນດ້ານອັດຕະວິໄສຂອງການພະຍາຍາມກະທຳຜິດ.

ຄ. ການກະທຳຜິດທີ່ສິ້ນສຸດ ຫຼື ສຳເລັດແລ້ວແມ່ນການກະທຳເຊິ່ງປະກອບດ້ວຍດ້ານພາວະວິໄສ ແລະ ດ້ານອັດຕະວິໄສຄົບຖ້ວນ.ການກະທຳຜິດບາງຢ່າງຈະຖືວ່າສິ້ນສຸດລົງ ເມື່ອມີຜົນສະທ້ອນທີ່ບົ່ງໄວ້ໃນກົດໝາຍເກີດຂຶ້ນຢ່າງແທ້ຈິງແລ້ວແຕ່ການກະທຳຜິດອີກບາງຢ່າງບໍ່ຈຳເປັນຈະມີຜົນສະທ້ອນກໍໄດ້

ຕົວຢ່າງ: ການໂຄສະນາຕ້ານ ສ ປ ປ ລາວ.

ການກະກຽມການກະທຳຜິດຈະເປັນການກະທຳຜິດສະເພາະ ແຕ່ການກະທຳທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມຊຶ່ງຈຳເປັນຕ້ອງໄດ້ປາບປາມແຕ່ຕົ້ນຈົ່ງທັນການ

ຕົວຢ່າງ: ການກະບົດ.

- ການພະຍາຍາມກະທຳຜິດຈະເປັນການກະທຳຜິດສຳລັບແຕ່ການກະທຳ ທີ່ເປັນອັນຕະລາຍຕໍ່ສັງຄົມປານກາງຂຶ້ນໄປ ເຊິ່ງຮຽກຮ້ອງໃຫ້ມີການປາບປາມກ່ອນການກະທຳຜິດຈະສຳເລັດຜົນ.

ຕົວຢ່າງ: ການ ຂົ່ມຂືນ ທຳຊຳເລົາ.

- ສ່ວນການກະທຳຜິດເບົານັ້ນ. ຍ້ອນຄວາມເປັນອັນຕະລາຍຕໍ່ສັງຄົມມີໜ້ອຍ. ສະນັ້ນ, ເມື່ອລົງມືກະທຳຈະສິ້ນສຸດແລ້ວ ເຊິ່ງຖືວ່າເປັນການກະທຳຜິດກໍໄດ້.

ຕົວຢ່າງ: ການໃຫ້ການເທັດ.

6.2 ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ.

- ແມ່ນການຢຸດເຊົາການກະທຳຜິດດ້ວຍຄວາມສະໝັກໃຈທັ້ງໆທີ່ຄວາມສາມາດສືບຕໍ່ໄດ້ແລ້ວ. ການເລີກລົ້ມນີ້ສະແດງອອກຢູ່ໃນຄວາມສະໝັກໃຈເລີກລົ້ມການກະທຳຜິດ ແລະ ການເລີກລົ້ມການກະທຳຜິດຢ່າງເດັດຂາດຈະບໍ່ມີຄວາມຮັບຜິຊອບທາງອາຍາຖ້າການກະທຳນັ້ນຫາກບໍ່ມີອົງປະກອບເປັນການກະທຳຜິດອື່ນ .

7. ການຮ່ວມມືກະທຳຜິດ

ການຮ່ວມມືກະທຳຜິດແມ່ນແມ່ນຮ່ວມມືກັນການກະທຳຜິດ ໂດຍເຈຕະນາ ແຕ່ 2 ຄົນຂຶ້ນໄປ .

7 .1. ດ້ານພາວະວິໄສ :

- ແຕ່ສອງຄົນຂຶ້ນໄປ ແຕ່ລະຄົນຕ້ອງມີສະຕິສຳປະຊັນຍະ ແລະ ເຖິງກະສ່ຽນອາຍຸທາງອາຍາ
- ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນກະທຳຜິດ

6.2. ດ້ານອັນຕະວິໄສ:

- ຄວາມຮັບຮູ້ແຈ້ງວ່າ ການຮ່ວມມືເປັນໄພອັນຕະລາຍ.
- ຄາດຄະເນໄດ້ວ່າການຮ່ວມມືມີຜົນສະທ້ອນຢ່າງຮ້າຍແຮງ.
- ຄວາມຕ້ອງການຢາກໃຫ້ຜົນສະທ້ອນນັ້ນເກີດຂຶ້ນ.

ກ. ປະເພດຜູ້ຮ່ວມມືກະທຳຜິດ

ມີ 4 ປະເພດ:

- ຕົວການແມ່ນຜູ້ທີ່ໄດ້ວາງແຜນ ຈັດຕັ້ງນຳພາການກະທຳຜິດ.
- ຜູ້ປະຕິບັດ ແມ່ນຜູ້ລົງມືກະທຳໂດຍກົງ.
- ຜູ້ຍຸແຍ່ ແມ່ນຜູ້ຊຸກຍູ້ໃຫ້ຜູ້ອື່ນໄປກະທຳຜິດ.
- ຜູ້ສົມຮູ້ຮ່ວມຄິດ ແມ່ນຜູ້ທີ່ໄດ້ໃຫ້ຄວາມຊ່ວຍເຫຼືອໂດຍເຈຕະນາ ໃນການກະທຳຜິດ ຫຼື ການໃຫ້ຄຳໝັ້ນສັນຍາລ່ວງໜ້າວ່າຈະຊຸກເຊື່ອງປົກປິດຜູ້ກະທຳຜິດ, ພາຫະນະ, ອຸປະກອນໃນການກະທຳຜິດ, ລົບລ້າງຮ່ອງຮອຍໃນການກະທຳຜິດ ຫຼື ຊຸກເຊື່ອງສິ່ງຂອງການກະທຳຜິດ ຫຼື ຊຸກເຊື່ອງສິ່ງຂອງທີ່ໄດ້ມາຈາກການກະທຳຜິດນັ້ນ.

ຂ. ປະເພດການຮ່ວມມືກະທຳຜິດ

ມີ 3 ປະເພດ

- ການພ້ອມພຽງກັນກະທຳຜິດ
- ການຮ່ວມມືກະທຳຜິດໂດຍມີບົດບາດແຕກຕ່າງກັນ
- ການຮ່ວມມືໂດຍມີການຈັດຕັ້ງເປັນກຸ່ມກ້ອນ

ຄ. ຄວາມຮັບຜິດຊອບຂອງຜູ້ຮ່ວມມືກະທຳຜິດປະຕິບັດຕາມ 3 ຫຼັກການຄື:

- ຫຼັກການຮັບຜິດຊອບເທົ່າທຽມກັນໝາຍວ່າຄວາມຮັບຜິດຊອບຂອງແຕ່ລະຄົນທີ່ຮ່ວມມືແມ່ນຊັ່ງຊາຕີລາຄາຄືກັນກັບວ່າຜູ້ດຽວກະທຳຜິດ.
- ຫຼັກການຮັບຜິດຊອບສ່ວນບຸກຄົນ ແມ່ນຄວາມຮັບຜິດຊອບຂອງຜູ້ຮ່ວມມືຕໍ່ການກະທຳຜິດລວມ.
- ຫຼັກການຮັບຜິດຊອບຕາມລັກສະນະຂອງການກະທຳຜິດແມ່ນຄວາມຮັບຜິດຊອບຂອງຜູ້ຮ່ວມມືກະທຳຜິດຊັ່ງຊາຕີລາຄາຕາມລັກສະນະ ແລະ ລະດັບໄພອັນຕະລາຍຂອງການກະທຳຜິດ, ຕາມຊີວະປະຫວັດຂອງຜູ້ຮ່ວມມືແຕ່ລະຄົນ ແລະ ຕາມສາຍເຫດທີ່ໃຫ້ໄດ້ຮັບໂທດໜັກ ຫຼື ເບົາ.

7. ການກະທຳຜິດຫຼາຍສະຖານ

ແມ່ນການກະທຳຜິດແຕ່ສອງຢ່າງຂຶ້ນໄປດ້ວຍການກະທຳອັນດຽວ ຫຼື ຫຼາຍການກະທຳທີ່ຜິດຕໍ່ຫຼາຍມາດຕາຂອງກົດໝາຍອາຍາ ແລະ ຈະຖືກຕັດສິນໃນຂອບເຂດຂອງການດຳເນີນຄະດີດຽວກັນ.

ການກະທຳຜິດຫຼາຍສະຖານ ດ້ວຍການກະທຳຜິດມີຫຼາຍອັນ ມີ 3 ປະເພດຄື:

- **ການກະທຳຜິດຊ້ອນ**: ແມ່ນການກະທຳຜິດແຕ່ 2 ອັນຂຶ້ນໄປດ້ວຍການກະທຳຜິດໃນສະຖານແຕກຕ່າງກັນ, ແຕ່ລະອັນຍັງບໍ່ໄດ້ຖືກສານຕັດສິນ.
- **ການກະທຳຜິດຊ້ຳ**: ແມ່ນການກະທຳຜິດ 2 ອັນຂຶ້ນໄປດ້ວຍການກະທຳຜິດໃນສະຖານດຽວກັນ ຫຼື ຖານຄ້າຍຄືກັນ, ແຕ່ລະອັນຍັງບໍ່ໄດ້ຖືກສານຕັດສິນ.
- **ການກະທຳຜິດທີ່ບໍ່ເຂັດຫຼາບ**: ແມ່ນການກະທຳຜິດຂອງຜູ້ຖືກຕັດສິນລົງໂທດຕັດອິດສະລະພາບດ້ວຍການກະທຳຜິດດ້ວຍເຈຕະນາ ເຊິ່ງໄດ້ກະທຳໃໝ່ໂດຍເຈຕະນາ. ອີກໃນເວລາປະຕິບັດໂທດຢູ່ນັ້ນ ຫຼືໄດ້ກະທຳຜິດໃໝ່ໂດຍເຈຕະນາອີກໃນສະຖານດຽວກັນ ຫຼື ສະຖານຄ້າຍຄືກັນພາຍໃນກຳນົດ 5 ປີ ພາຍຫຼັງທີ່ໄດ້ປະຕິບັດໂທດແລ້ວ.

ມາດຊັ

9. ໂທດ

9.1ນິຍາມ ແລະ ຈຸດປະສົງຂອງການລົງໂທດ

- ນິຍາມ:

ໂທດແມ່ນມາດຕະການບັງຄັບຂອງລັດເຊິ່ງບົ່ງໄວ້ໃນກົດໝາຍອາຍາ ແລະ ສານເປັນຜູ້ວາງໂທດໃສ່ຜູ້ກະທຳຜິດ.

ໂທດມີລັກສະນະດັ່ງນີ້ :

- ແມ່ນມາດຕະການບັງຄັບ ຂອງລັດເຊິ່ງບົ່ງໄວ້ໃນກົດໝາຍ.

- ໂທດຕ້ອງວາງໃສ່ຜູ້ກະທຳຜິດ .
- ແມ່ນສານເປັນຜູ້ລົງໂທດໃນນາມລັດ .

• **ຈຸດປະສົງຂອງການລົງໂທດ:**

ການລົງໂທດ ແມ່ນເພື່ອດັດສ້າງ ແລະ ສຶກສາອົບຮົມຂອງຜູ້ຖືກລົງໂທດໃຫ້ມີທັດສະນະແຮງງານ ໃຫ້ເຄົາລົບກົດໝາຍຢ່າງຖືກຕ້ອງ, ປ້ອງກັນບໍ່ມີການກະທຳຜິດເທື່ອໃໝ່ໂດຍຜູ້ຖືກລົງໂທດ ແລະບຸກຄົນອື່ນ.

9.2ປະເພດໂທດ :

- **ໂທດຕົ້ນຕໍ** : ປະຫານຊີວິດ, ຕັດອິດສະຫຼະພາບ, ດັດສ້າງໂດຍບໍ່ຕ້ອງຕັດອິດສະຫຼະພາບ, ຕຳນິຕໍ່ໜ້າມະຫາຊົນ.
- **ໂທດເພີ່ມ**: ປັບໄໝ, ຮິບຊັບ, ຮິບວັດຖຸສິ່ງຂອງ, ຈຳກັດທີ່ຢູ່, ປົດສິດເລືອກຕັ້ງ ແລະ ສະມັກຮັບເລືອກຕັ້ງ .

10. ການວາງໂທດ.

10.1 ຫຼັກການລວມຂອງການວາວາງໂທດ.

- ສານວາງໂທດ ໃນຂອບເຂດຂອງມາດຕາກົດໝາຍອາຍາທີ່ກຳນົດຄວາມຮັບຜິດຊອບຕໍ່ການກະທຳຜິດ .
- ອີງໃສ່ລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດຕໍ່ສັງຄົມ, ບຸກຄະລິກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບໜັກ ຫຼື ເບົາ .

10.2 ສາເຫດທີ່ພາໃຫ້ມີການວາງໂທດເບົາ:

- ເດັກທີ່ມີອາຍຸບຸດ 18 ປີ ກະທຳຜິດ
- ຜູ້ຍິງຖືພາກະທຳຜິດ
- ການປ້ອງກັນຕົວເກີນຂອບເຂດ
- ການກະທຳຜິດຍ້ອນຖືກແຕະຕ້ອງດ້ານຈິດໃຈຢ່າງໜັກຈົນບໍ່ສາມາດຄວບຄຸມສະຕິໄວ້ໄດ້ດ້ວຍການກະທຳອັນບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເຄາະຮ້າຍ
- ການກະທຳຜິດຍ້ອນຖືກຂົ່ມຂູ່ບັງຄັບ
- ຜູ້ກະທຳຜິດ ສະກັດກັ້ນຜົນເສຍຫາຍຂອງຜູ້ອື່ນກໍ່ຂຶ້ນ ຫຼື ຈ່ຽໃຈໃຊ້ແທນຄ່າເສຍຫາຍໂດຍສະໝັກໃຈ
- ການກະທຳຜິດຍ້ອນສະພາບໜັກໜ່ວງ ທາງສ່ວນຕົວ ຫຼື ທາງຄອບຄົວ
- ຜູ້ກະທຳຜິດຮູ້ສຶກກິນແໜງໃຈ, ຈ່ຽໃຈມອບຕົວຕໍ່ເຈົ້າໜ້າທີ່, ຮັບສະລະພາບ ແລະ ເປີດເຜີຍການກະທຳຜິດ ແລະ ຜູ້ກະທຳຜິດອື່ນ
- ການກະທຳຜິດຄັ້ງທຳອິດ ຖ້າການກະທຳດັ່ງກ່າວ ຫາກບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ.

ໃນການລົງໂທດສາມາດອີງໃສ່ສາເຫດທີ່ພາໃຫ້ລົງໂທດເບົາອື່ນທີ່ບໍ່ໄດ້ກ່າວມາເທິງນີ້ກໍໄດ້.

10.3 ສາເຫດທີ່ພາໃຫ້ມີການວາງໂທດໜັກ :

- ການບໍ່ເຂັດຫຼາບ ຫຼືເຄີຍໄດ້ກະທຳຜິດມາກ່ອນ
- ການກະທຳຜິດໂດຍມີການຈັດຕັ້ງເປັນກຸ່ມ
- ການກະທຳຜິດຍ້ອນຄວາມໂລບມາກໂລພາ ຫຼືແນວຄິດຕ່ຳຊ້າອື່ນໆ.
- ການກະທຳຜິດຕໍ່ເດັກທີ່ຍັງບໍ່ທັນເຖິງອາຍຸກະສຽນກະທຳຜິດ, ຕໍ່ຜູ້ເຖົ້າ ຜູ້ທີ່ບໍ່ສາມາດປ້ອງກັນຕົວເອງໄດ້, ຜູ້ທີ່ຂຶ້ນກັບຕົນທາງດ້ານວັດຖຸ ຫຼື ທາງດ້ານອື່ນ, ຜູ້ທີ່ຢູ່ໃຕ້ບັງຄັບບັນຊາຂອງຕົນ.
- ການຍຸແຍ່ໃຫ້ເດັກທີ່ຍັງບໍ່ທັນກະສຽນອາຍຸກະທຳຜິດ, ການຂົ່ມຂວາຍເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸເຂົ້າຮ່ວມການກະທຳຜິດ.
- ການກະທຳຜິດໂທດຮ້າຍຢ່າງປ່າເຖື່ອນ ຫຼື ແບບປະຈານຜູ້ຖືກເຄາະຮ້າຍ
- ການກະທຳຜິດທີ່ພາໃຫ້ມີຜົນສະທ້ອນຢ່າງໜັກໜ່ວງ
- ການສວຍໂອກາດກະທຳຜິດໃນເວລາເກີດໄພພິບັດ
- ການກະທຳຜິດດ້ວຍວິທີທີ່ເປັນອັນຕະລາຍຕໍ່ສາທາລະນະ
- ການກະທຳຜິດຍ້ອນເມົາເຫຼົ້າ ຫຼື ຢາສົບຕິດ
- ການໃຫ້ການຊັດສອດຄວາມຜິດໃສ່ຜູ້ທີ່ຕົນເຫັນແຈ້ງວ່າ ເປັນຄົນບໍລິສຸດ
- ການກະທຳຜິດ ເພື່ອປົກປິດກະທຳຜິດອື່ນ ຫຼື ໃຊ້ການຮຸນແຮງ ເພື່ອຫຼົບໜີ

10.4 ການວາງໂທດໃສ່ຜູ້ກະທຳຜິດຫຼາຍສະຖານ.

- ກ່ຽວກັບການກະທຳຜິດອັນດຽວ ທີ່ຜິດຕໍ່ຫຼາຍມາດຕານັ້ນ ໃຫ້ເອົາມາດຕາທີ່ກົດໝາຍໄດ້ກຳນົດໂທດໜັກກວ່າໝູ່ມາໃສ່
- ກ່ຽວກັບການກະທຳຫຼາຍອັນທີ່ຜິດຕໍ່ຫຼາຍມາດຕາ ໃຫ້ລົງໂທດໃສ່ແຕ່ລະການກະທຳຜິດ, ແລ້ວເອົາໂທດດັ່ງກ່າວມາສົມໃສ່ກັນແຕ່ລວມແລ້ວທັງໝົດບໍ່ໃຫ້ໃສ່ກາຍໂທດສູງສຸດ ຂອງການກະທຳຜິດດັ່ງກ່າວທີ່ໜັກກ່ວາໝູ່, ຈະຕື່ມໂທດໃດໜຶ່ງໃສ່ຕົ້ນຕໍອີກກໍໄດ້.
- ຖ້າວ່າຫຼັງຈາກຄຳຕັດສິນແລ້ວ ຫຼື ຄຳຕັດສິນໃຊ້ໄດ້ເດັດຂາດແລ້ວ ຫຼື ຜູ້ກະທຳຜິດໄດ້ປະຕິບັດໂທດສ່ວນໃດສ່ວນໜຶ່ງ ຫຼື ໝົດແລ້ວ ຫາກເຫັນວ່າ ຜູ້ກະທຳຜິດ ໄດ້ກະທຳຜິດ ມາກ່ອນອີກການລົງໂທດໃຫ້ປະຕິບັດຕາມວິທີການທີ່ໄດ້ກ່າວມາຂ້າງເທິງ.
- ຫຼັງຈາກຄຳຕັດສິນໃຊ້ໄດ້ເດັດຂາດແລ້ວ ຫຼື ໃນເວລາປະຕິບັດໂທດຢູ່ ຖ້າຜູ້ຖືກຕັດສິນຫາກໄດ້ກະທຳຜິດໃໝ່ອີກ ສາມາດຕື່ມໂທດເກົ່າທີ່ບໍ່ທັນໄດ້ປະຕິບັດໃສ່ໂທດທີ່ໄດ້ຕັດສິນໃໝ່ບາງສ່ວນ ຫຼື ທັງໝົດກໍໄດ້.
- ສຳລັບໂທດປັບໄໝ ໃຫ້ປະຕິບັດແຕ່ລະອັນ, ຈະເອົາສົມທົບໃສ່ກັນ ຫຼື ສົມໃສ່ໂທດປະເພດອື່ນຕາມວິທີການທີ່ໄດ້ກ່າວມາຂ້າງເທິງນີ້ກໍໄດ້.

10.5 ການວາງໂທດກ່ຽວກັບການເຂັດຫຼາບ.

- ສຳຫຼັບການກະທຳຜິດເບົານັ້ນ ໃຫ້ເອົາໂທດທີ່ສາມວາງໃສ່ກະທຳຜິດ ໃນກໍລະນີທຳມະດາສົມໃສ່ເຄິ່ງໜຶ່ງຂອງໂທດດັ່ງກ່າວ.
- ສ່ວນການບໍ່ເຂັດຫຼາບຂອງການກະທຳຜິດໜັກນັ້ນເປັນສາເຫດໜຶ່ງທີ່ໃຫ້ມີການລົງໂທດໜັກ.

10.6 ການວາງຕ່ຳກວ່າໂທດ ທີ່ກຳນົດໄວ້ໃນກົດໝາຍ

ສານຈະລົງໂທດ ທີ່ຕ່ຳກວ່າໃນກົດໝາຍກຳນົດໄວ້ ໄດ້ ສະເພາະໃນກໍລະນີລົງໂທດ ກ່ຽວກັບການກະກຽມ, ການພະຍາຍາມກະທຳຜິດ, ການສົມຮູ້ຮ່ວມຄິດ, ການຍຸແຍ ໃນການກະທຳຜິດ, ກ່ຽວກັບເດັກທີ່ອາຍຸບໍ່ເຖິງ 18 ປີ ໄປກະທຳຜິດ.

11. ການພາກໂທດ .

ການພາກໂທດຕັດອິດສະຫຼະພາບ, ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ຫຼື ໂທດປັບໃໝທີ່ເປັນໂທດຕົ້ນຕໍ ແມ່ນການໂຈະການປະຕິບັດໂທດນີ້ໄວ້ໃນກຳນົດໃດໜຶ່ງ (5 ປີ). ຕາມເງື່ອນໄຂຂອງການພາກໂທດ. ຖ້າວ່າພາຍໃນພາຍໃນກຳນົດດັ່ງກ່າວຜູ້ຖືກຕັດສິນບໍ່ໄດ້ກະທຳຜິດໃໝ່ໂດຍເຈດຕະນາ ອີກໂທດທີ່ພາກໄວ້ກໍ່ຕົກໄປ. ແຕ່ຖ້າວ່າຜູ້ກະທຳຜິດຫາກກະທຳຜິດໃໝ່ໂດຍເຈດຕະນາ , ຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ແລະ ຄຳຕັດສິນນີ້ໃຊ້ໄດ້ຢ່າງເດັດຂາດແລ້ວຜູ້ກ່ຽວຕ້ອງໄດ້ປະຕິບັດໂທດໃໝ່ລວມທັງໂທດເກົ່າທີ່ພາກໄວ້ນັ້ນອີກດ້ວຍ (ຜູ້ກະທຳຜິດໂດຍບໍ່ເຂັດຫຼາບ ແລະ ໂທດຕັດອິດສະຫຼະພາບແຕ່ 3 ປີຂຶ້ນໄປບໍ່ສາມາດພາກໂທດໄດ້)

12. ສາເຫດທີ່ພາໃຫ້ການປະຕິບັດໂທດຕົກໄປ.

- ຜູ້ຖືກຕັດສິນລົງໂທດ ເສຍຊີວິດກ່ອນ ຫຼື ໃນເວລາປະຕິບັດໂທດ
- ໝົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ
- ຜູ້ຖືກຕັດສິນໄດ້ຮັບອະໄພຍະໂທດ, ການປະຕິບັດໂທດຕາມຄວາມຕັດສິນຂອງສານຈະບໍ່ສາມາດປະຕິບັດໄດ້ຖ້າກຳນົດເວລາອັນແນ່ນອນທີ່ບົ່ງໄວ້ໃນກົດໝາຍອາຍາ (ມາດ 46).

13. ການປ່ອຍຕົວກ່ອນການກຳນົດ ໂດຍມີເງື່ອນໄຂ

- ຕາມຄຳສະເໜີ ຂອງຄະນະຮັບຜິຊອບ ຄ້າຍດັດສ້າງໂດຍຜ່ານໄອຍາການ
- ຜູ້ປະຕິບັດໂທດ ທີ່ກ້າວໜ້າ, ເປັນແບບຢ່າງໃນການອອກແຮງງານ
- ປະຕິບັດໂທດມາແລ້ວເຄິ່ງໜຶ່ງ ສຳລັບຜູ້ທີ່ບໍ່ທັນເຖິງກະສຽນ ອາຍຸ18 ປີໄປກະທຳຜິດ
- ປະຕິບັດ 2/3 ຂອງໂທດສຳລັບຜູ້ທີ່ເຖິງກະສຽນອາຍຸ 18 ປີຂຶ້ນໄປ
- 20 ປີ ສຳລັບໂທດຕັດອິດສະຫຼະພາບຕະຫຼອດຊີວິດ
- ຖ້າວ່າພາຍໃນກຳນົດໃດທີ່ແນ່ນອນ (5ປີ) ຜູ້ຖືກປ່ອຍຕົວກ່ອນກຳນົດຫາກໄດ້ປະຕິບັດຖືກຕ້ອງຕາມເງື່ອນໄຂທີ່ກຳນົດໃຫ້ ແລະ ບໍ່ໄດ້ກະທຳຜິດໃໝ່ ໂທດທີ່ເຫຼືອນັ້ນກໍຕົກໄປ. ໃນກໍລະນີທີ່ປະຕິບັດບໍ່ໄດ້ຕາມເງື່ອນໄຂພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດຈະໄດ້ປະຕິບັດໂທດທີ່ຍັງເຫຼືອນັ້ນ. ໃນກໍລະນີທີ່ໄດ້ກະທຳຜິດໃໝ່ພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດຈະໄດ້ປະຕິບັດໂທດໃໝ່ລວມທັງໂທດເກົ່າທີ່ຍັງເຫຼືອນັ້ນອີກດ້ວຍ.

ຄຳຖາມ

1. ກົດໝາຍອາຍາແມ່ນຫຍັງ? ມີຫຼັກການຫຍັງແດ່?
2. ການກະທຳຜິດທາງອາຍາແມ່ນແນວໃດ? ມີອົງການປະກອບແນວໃດ?
3. ມີສາເຫດຫຍັງແດ່ ທີ່ໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ.
4. ໄລຍະຂອງການກະທຳຜິດມີຂັ້ນຕອນຫຍັງແດ່?
5. ການຮ່ວມມືກະທຳຜິດແມ່ນແນວໃດ? - ມີປະເພດຮ່ວມມືແນວໃດແດ່? (ອະທິບາຍ)
6. ໂທດແມ່ນຫຍັງ? ມີຈັກປະເພດ ມີຈຸດປະສົງ ແລະ ຫຼັກການວາງໂທດແນວໃດ?
7. ສາເຫດທີ່ພາໃຫ້ວາງໂທດໜັກ, ວາງໂທດເບົາ ມີຄືແນວໃດແດ່ ?
8. ການພາກໂທດແມ່ນແນວໃດ ? ສາເຫດທີ່ພາໃຫ້ໂທດຕົກໄປມີຄືແນວໃດ ?

24/7 VIP

ຫ້າມຈຳໜ່າຍ

ບົດທີ 7

ກົດໝາຍອາຍາພາກສະເພາະ

1. ຄວາມຮັບຮູ້ທົ່ວໄປຂອງກົດໝາຍອາຍາພາກສະເພາະ

ພາກສະເພາະຂອງກົດໝາຍອາຍາ ແມ່ນບັນດາຂໍ້ກຳນົດຂອງກົດໝາຍອາຍາທີ່ກຳນົດວ່າພຶດຕິກຳໃດເປັນການກະທຳຜິດທາງອາຍາ, ກຳນົດອົງປະກອບຂອງການກະທຳຜິດ ແລະໂທດ.

ພາກສະເພາະນີ້ມີການພົວພັນຢ່າງສະນິດແໜ້ນກັບພາກທົ່ວໄປ ແລະ ທັງສອງພາກນີ້ໂຮມເຂົ້າກັນເປັນກົດໝາຍອາຍາເອກະພາບທີ່ສະແດງອອກຢູ່ບ່ອນວ່າການນຳໃຊ້ຂໍ້ກຳນົດຂອງພາກສະເພາະຈະເປັນໄປໄດ້ກໍໃນເມື່ອໄດ້ອີງໃສ່ຂໍ້ກຳນົດຂອງພາກທົ່ວໄປ.

ພາກສະເພາະມີຄວາມໝາຍສຳຄັນຫຼາຍສຳລັບການດຳເນີນຄະດີໃນພາກຕົວຈິງ. ໃນທຸກໆກໍລະນີ ອົງການສືບສວນ - ສອບສວນ, ໄອຍາການ ແລະສານບໍ່ພຽງແຕ່ກຳນົດການມີພື້ນຖານທົ່ວໄປຂອງຄວາມຮັບຜິດຊອບທາງອາຍາ (ອາຍຸ, ຮູບການ ແລະ ປະເພດການກະທຳຜິດ) ແຕ່ຕ້ອງປະກອບເຄື່ອງໝາຍ ຂອງການກະທຳຜິດໃດໜຶ່ງຄັກແນ່.

ເພື່ອຕີຄວາມໝາຍຂອງການກະທຳຜິດໃຫ້ຖືກຕ້ອງ ມັນຮຽກຮ້ອງໃຫ້ປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

- ເມື່ອຈະນຳເອົາມາດຕາກົດໝາຍອາຍາຂອງພາກສະເພາະມານຳໃຊ້ຕ້ອງເຂົ້າໃຈຈິດໃຈເນື້ອໃນຂອງມາດຕາດັ່ງກ່າວຢ່າງລະອຽດ ແລະຈະແຈ້ງດີ, ອັນຕັດສິນຊີ້ຂາດຢູ່ໃນທີ່ນີ້ແມ່ນວັດຖຸກຳ ເພາະວັດຖຸກຳຊີ້ບອກວ່າການກະທຳຜິດນັ້ນໄດ້ນຳຄວາມເສຍຫາຍມາສູ່ສາຍພົວພັນສັງຄົມອັນໃດ, ຊີ້ບອກຄວາມເປັນໄພອັນຕະລາຍຂອງພຶດຕິກຳນັ້ນ. ດັ່ງນັ້ນ, ກ່ອນອື່ນຕ້ອງຮູ້ວ່າມາດຕາຂອງກົດໝາຍທີ່ກ່ຽວກັບພຶດຕິກຳນັ້ນຢູ່ໃນບົດໃດ.
- ອົງປະກອບຂອງພຶດຕິກຳ ຕ້ອງສອດຄ່ອງຢ່າງເຕັມສ່ວນກັບອົງປະກອບການກະທຳຜິດທີ່ກຳນົດໄວ້ໃນມາດຕາຂອງກົດໝາຍທີ່ນຳມາໃຊ້ນັ້ນ.
- ຕອ້ງກຳນົດຄວາມສອດຄ່ອງຂອງອົງປະກອບທັງໝົດ ຂອງພຶດຕິກຳ ກັບອົງປະກອບຂອງການກະທຳຜິດທີ່ບົ່ງໄວ້ຢູ່ໃນມາດຕາໃດໜຶ່ງຂອງພາກສະເພາະ.

ການຕີຄວາມໝາຍ ຢ່າງຖືກຕ້ອງຂອງການກະທຳນັ້ນມີຄວາມໝາຍສຳຄັນທີ່ສຸດຄື :

- ມັນເປັນເງື່ອນໄຂອັນຈຳເປັນໃນການເຄົາລົບນິຕິທຳ.
- ຮັບປະກັນການລົງໂທດຢ່າງເປັນທຳ ແລະຖືກຕ້ອງກັບບຸກຄະລິກະພາບຂອງຜູ້ກະທຳຜິດ.
- ເປັນພາລະຮັບປະກັນສິດຂອງຜູ້ຕ້ອງຫາ.
- ອຳນວຍຄວາມສະດວກໃຫ້ແກ່ການປະຕິບັດພາລະໜ້າທີ່ສຶກສາອົບຮົມຂອງຄວາມຍຸຕິທຳ.

2. ປະເພດການກະທຳຜິດທາງອາຍາ.

ການກະທຳຜິດທາງອາຍາ ຢູ່ ສ ປ ປ ລາວ ມີຫຼາຍຢ່າງ, ອີງຕາມວັດຖຸກຳຂອງການກະທຳຜິດໄດ້ແບ່ງການກະທຳຜິດດັ່ງກ່າວອອກເປັນ 9 ໝວດດັ່ງນີ້ :

- ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

- ການກະທຳຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີ ຂອງບຸກຄົນ.
- ການກະທຳຜິດຕໍ່ ສິດ ແລະ ເສລີພາບຂອງພົນລະເມືອງ.
- ການກະທຳຜິດຕໍ່ ກຳມະສິດຂອງລັດ ຫຼື ລວມໝູ.
- ການກະທຳຜິດ ຕໍ່ ກຳມະສິດສ່ວນຕົວຂອງພົນລະເມືອງ.
- ການກະທຳຜິດ ຕໍ່ ສາຍພົວພັນຜົວເມຍ, ຄອບຄົວ ແລະ ຮີດຄອງປະເພນີ.
- ການກະທຳຜິດ ຕໍ່ເສດຖະກິດ.
- ການກະທຳຜິດ ຂອງພະນັກງານຕໍ່ໜ້າທີ່ຮັບຜິດຊອບ.
- ການກະທຳຜິດຕໍ່ລະບຽບການບໍລິຫານ ແລະການຍຸຕິທຳ.

2.1. ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

2.1.1. ການທໍລະຍົດຕໍ່ຊາດ

ພົນລະເມືອງລາວ ຜູ້ທີ່ໄດ້ພົວພັນແລະຮ່ວມມືກັບຄົນຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປະເທດ ໂດຍມີເຈດຕະນາເຄື່ອນໄຫວທຳລາຍຄວາມເປັນເອກະລາດ, ອຳນາດອະທິປະໄຕ ,ຜືນແຜ່ນດິນອັນຄົບຖ້ວນ, ຜືນປະໂຫຍດອັນຍິ່ງໃຫຍ່ທາງດ້ານການເມືອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນາທຳ ແລະ ສັງຄົມຂອງ ສ ປ ປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສິບປີ ຫາຊາວປີແລະຈະຖືກປັບໃໝແຕ່ 10.000 000 ກີບ ຫາ 500 000 000 ກີບອາດຈະຖືກຮິບຊັບຕາມທີ່ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້ແລະອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະຫຼະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດຈະຖືກລົງໂທດ.

ພົນລະເມືອງລາວຜູ້ທີ່ຖືກຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປະເທດມອບໝາຍ ໃຫ້ກະທຳຜິດ ແຕ່ໄດ້ສະໝັກໃຈລາຍງານເຫດການໃຫ້ເຈົ້າໜ້າທີ່ຮູ້ລ່ວງໜ້າ ແລະ ຍັງບໍ່ທັນໄດ້ລົງມືກະທຳຜິດນັ້ນຈະບໍ່ຖືກລົງໂທດ(ມາດຕາ 51 ໃໝ່).

2.1.2. ການລະເມີດກົດຈາລະຈອນທີ່ພາໃຫ້ເກີດອຸປະຕິເຫດ.

ບຸກຄົນໃດຫາກໄດ້ລະເມີດກົດຈະລາທີ່ພາໃຫ້ເກີດອຸປະຕິເຫດ ແລະເຮັດໃຫ້ຜູ້ອື່ນບາດເຈັບ ຈະຖືກປັບໃໝແຕ່ 50. 000 ກີບ ຫາ 300. 000 ກີບ.

ໃນກໍລະນີການກະທຳຜິດເຊິ່ງພາໃຫ້ຄົນບາດເຈັບສາຫັດເຈັບຫຼາຍຄົນ ຫຼື ເສຍອົງຄະຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫົກເດືອນຫາສາມປີ ແລະຈະຖືກປັບໃໝແຕ່100.000 ກີບຫາ 500.000ກີບ.

ໃນກໍລະນີທີ່ການກະທຳຜິດເຊິ່ງພາໃຫ້ຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ສອງປີ ຫາຫ້າປີ ແລະຈະຖືກປັບໃໝແຕ່ 150. 000 ກີບຫາ 700. 000 ກີບ.

ໃນກໍລະນີທີ່ເປັນການກະທຳຜິດເຊິ່ງພາໃຫ້ຄົນເສຍຊີວິດເປັນຈຳນວນຫຼາຍຈະຖືກລົງໂທດຕັດອິດສະລະພາບ ແຕ່ຫ້າປີ ຫາສິບປີ ແລະຈະຖືກປັບໃໝ ແຕ່ 200. 000 ກີບ ຫາ 1.000 000 ກີບ(ມາດຕາ 79 ໃໝ່)

2.1.3. ການຫຼົບໜີຈາກອຸປະຕິເຫດ.

ບຸກຄົນໃດຫາກເຮັດໃຫ້ອຸປະຕິເຫດເກີດຂຶ້ນແລ້ວຫຼົບໜີຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ ທົກເດືອນຫາສອງປີ. ແລະຈະຖືກປັບໃໝແຕ່ 200. 000 ກີບຫາ 1.000 000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.(ມາດຕາ 80ໃໝ່)

2.2. ການກະທຳຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີ ຂອງບຸກຄົນ.

2.2.1. ການຄາດຕະກຳ.

ບຸກຄົນໃດຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສິບປີຫາສິບຫ້າປີແລະຈະຖືກປັບໃໝແຕ່ 1. 000. 000 ກີບຫາ 5. 000. 000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການຄາດຕະກຳເປັນອາຈິນ, ຂ້າຄົນໂດຍມີແຜນການ, ຂ້າຄົນຢ່າງໂຫດຮ້າຍປ່າເຖື່ອນ, ຂ້າພະນັກງານທີ່ກຳລັງປະຕິບັດໜ້າທີ່, ຂ້າຫຼາຍຄົນ,ຂ້າຜູ້ຍິງຖືພາ, ຂ້າຄົນເພື່ອປິດບັງການກະທຳຜິດອື່ນ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ສິບປີຫາຊາວປີ ແລະ ຈະຖືກປັບໃໝ ແຕ່ 2.000. 000 ກີບຫາ 10. 000. 000 ກີບ, ອາດຈະຖືກຈຳກັດທີ່ຢູ່ ຫຼື ຕັດອິດສະຫຼະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

ໃນກໍລະນີຜູ້ກະທຳຜິດຫາກເຮັດໃຫ້ຄົນອື່ນເສຍຊີວິດໂດຍເຈດຕະນາຍ້ອນແຕະຕ້ອງດ້ານຈິດໃຈຢ່າງໜັກຈົນບໍ່ສາມາດຈະຄວບຄຸມສະຕິໄວ້ໄດ້ດ້ວຍການກະທຳອັນບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເຄາະຮ້າຍຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມປີຫາຫ້າປີ ແລະ ຈະຖືກປັບໃໝແຕ່ 500. 000 ກີບ ຫາ 2. 000. 000 ກີບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.(ມາດຕາ 81 ໃໝ່).

2.2.2. ການຫຼູລູກໂດຍບໍ່ຖືກຕ້ອງຕາມກົດໝາຍ.

ຜູ້ໃດຫາກທຳການຫຼູລູກໃຫ້ຜູ້ອື່ນຢ່າງຜິດກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ສອງປີ ຫາຫ້າປີ ແລະຈະຖືກປັບໃໝແຕ່ 200. 000 ກີບຫາ 5 .000 .000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກທຳການຫຼູລູກໃຫ້ຄົນອື່ນເປັນອາຈິນ ຫຼື ໃນກໍລະນີທີ່ການຫຼູລູກໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນຫາກເຮັດໃຫ້ສຸຂພາບຂອງແມ່ຊຸດໂຊມ ຫຼື ເຮັດໃຫ້ແມ່ເສຍຊີວິດຈະຖືກລົງໂທດຕັດອິດສະລະພາບແຕ່ຫ້າປີຫາສິບປີ ແລະຈະຖືກປັບໃໝແຕ່ 300. 000 ກີບຫາ 10. 000. 000 ກີບ.

ຜູ້ຍິງຜູ້ໃດຫາກໄດ້ທຳການຫຼູລູກດ້ວຍຕົນເອງ ຫຼືໃຊ້ຜູ້ອື່ນເຮັດໃຫ້ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນ ຫາໜຶ່ງປີ ແລະ ຈະຖືກປັບໃໝແຕ່ 100. 000 ກີບຫາ 500. 000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ (ມາດຕາ 85 ໃໝ່)

2.3. ການກະທຳຜິດຕໍ່ ສິດ ແລະ ເສລີພາບຂອງພົນລະເມືອງ.

2.3.1. ການບັງຄັບ.

ບຸກຄົນຜູ້ໃດຫາກໄດ້ບັງຄັບຜູ້ອື່ນດ້ວຍການໃຊ້ກຳລັງ ຫຼື ອາວຸດ ຫຼື ນາບຂູ່ ເພື່ອໃຫ້ກະທຳ ຫຼື ບໍ່ກະທຳສິ່ງໃດສິ່ງໜຶ່ງທີ່ຕົນຕ້ອງການເຊິ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະກໍ່ຄວາມເສຍຫາຍແກ່ຜູ້ກ່ຽວນີ້ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນ ຫາສາມປີ ແລະຈະຖືກປັບໃໝແຕ່ 100. 000 ກີບຫາ1. 000.000 ກີບ.

ໃນກໍລະນີທີ່ການບັງຄັບຫາກແມ່ນການຈີ້ລັດ ຫຼື ກຳປັ່ນ ຫຼື ຍົນຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນ ຫາໜຶ່ງປີ ແລະຈະຖືກປັບໃໝແຕ່ 1. 000. 000 ກີບຫາ 50. 000. 000 ກີບ.(ມາດຕາ 90 ໃໝ່)

2.3.2. ການຈັບຕົວ, ການກັກຂັງໂດຍບໍ່ຖືກຕ້ອງຕາມກົດໝາຍ.

ບຸກຄົນຜູ້ໃດຫາກໄດ້ກັກຕົວ ຫຼືກັກຂັງຜູ້ອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫົກເດືອນ ຫາສອງປີ ແລະ ຈະຖືກປັບໃໝແຕ່ 500. 000 ກີບຫາ 3. 000. 000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນຫາກໄດ້ເຮັດໃຫ້ສຸຂພາບຂອງຜູ້ຖືກຈັບຕົວ ຫຼືຜູ້ຖືກກັກຂັງຊຸດໂຊມ ຈະຖືກລົງໂທດຕັດອິດສະລະພາບແຕ່ສອງປີ ຫາຫ້າປີ ແລະຈະຖືກປັບໃໝແຕ່ 700.000 ກີບຫາ 5. 000. 000 ກີບ.

ໃນກໍລະນີທີ່ການກະທຳຜິດນັ້ນຫາກໄດ້ເຮັດໃຫ້ຜູ້ຖືກຈັບຕົວ, ຜູ້ຖືກກັກຂັງເສຍອົງຄະ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫ້າປີ ຫາສິບຫ້າປີ ແລະ ຈະຖືກປັບໃໝແຕ່ 1.000.000 ກີບຫາ 7. 000. 000 ກີບ(ມາດຕາ 91 ໃໝ່)

2.3.3. ການຂາຍຄົນ ແລະ ການລັກພາຕົວ

ຜູ້ໃດຫາກໄດ້ຂາຍຄົນ , ລັກເອົາຕົວຄົນໄປຄົນໄປຮຽກຄ່າໄຖ່, ຂາຍ ຫຼື ອື່ນ ໆຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ຫ້າປີ ຫາສິບຫ້າປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 50.000. 000 ກີບ. (ມາດຕາ 92 ໃໝ່).

2.4. ການກະທຳຜິດຕໍ່ ກຳມະສິດຂອງລັດ ຫຼື ລວມໝູ່.

2.4.1. ການປຸ້ນຊັບຂອງລັດ

ຫາກຜູ້ໃດຫາກໄດ້ໃຊ້ຄວາມຮຸນແຮງບຸກລຸກ ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຈະຖືກລົງໂທດ ຕັດ ອິດສະຫຼະພາບແຕ່ຫົກປີ ຫາສິບປີ ແລະຈະຖືກປັບໃໝແຕ່1. 000.000 ກີບຫາ 10. 000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດນັ້ນຫາກໄດ້ເອົາການປຸ້ນຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມເຮັດໃຫ້ຄົນອື່ນບາດເຈັບສາຫັດ ຫຼືເສຍຊີວິດ ຫຼືໃນກໍລະນີມີຄວາມເສຍຫາຍຢ່າງໜວງໜາຍ ຈະຖືກລົງໂທດ ຕັດ ອິດສະຫຼະພາບແຕ່ສິບປີ ຫາຊາວປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 20.000.000 ກີບ,ອາດ ຈະຖືກຣິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍລະບັບນີ້, ອາດຈະຈຳກັດທີ່ຢູ່ ຫຼືຕັດ ອິດສະຫຼະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມແກ່ການກະທຳຜິດກໍຈະຖືກລົງໂທດ. (ມາດຕາ 98 ໃໝ່)

2.4.2.ການສວຍໃຊ້ຊັບຂອງລັດຂອງລັດ ຫຼື ຂອງລວມໝູ່

ບຸກຄົນຜູ້ໃດຫາກໄດ້ສວຍໃຊ້ຊັບຂອງລັດ ຫຼື ຂອງລວມໝູ່ເພື່ອຜົນປະໂຫຍດສ່ວນຕົວເຊິ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍແກ່ລັດ ແລະລວມໝູ່ ຈະຖືກລົງໂທດ ຕັດ ອິດສະລະພາບແຕ່ໜຶ່ງປີ ຫາ ຫ້າປີ ແລະຈະຖືກປັບໃໝແຕ່100. 000 ກີບຫາ 5.000. 000 ກີບ.(ມາດຕາ 108 ໃໝ່).

2.5. ການກະທຳຜິດ ຕໍ່ ກຳມະສິດສ່ວນຕົວຂອງພົນລະເມືອງ.

2.5.1.ການລັກຊັບ, ການຍາດຊິງຊັບຂອງພົນລະເມືອງ

ບຸກຄົນໃດຫາກໄດ້ເອົາຊັບຂອງບຸກຄົນອື່ນມາເປັນຂອງຕົນໂດຍລັບຫຼັງ ຈະຖືກລົງໂທດ ຕັດ ອິດສະລະພາບແຕ່ສາມເດືອນຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະຈະຖືກປັບໃໝ ແຕ່100. 000 ກີບຫາ 3. 000. 000 ກີບ.

ບຸກຄົນຜູ້ໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນດ້ວຍວິທີຍາດຊິງເອົາຈະຖືກລົງໂທດ ຕັດ ອິດສະຫຼະພາບແຕ່ຫົກເດືອນ ຫາສາມປີ ແລະຈະຖືກປັບໃໝແຕ່150. 000 ກີບຫາ 5. 000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ລັກດ້ວຍການງັດແງະ, ມ້າງເພຣີ້ອຮາວ, ປະຕູ, ຫີບ, ຕູ້, ແລະ ອື່ນໆຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫົກເດືອນ ຫາສາມປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ 5. 000. 000 ກີບ.

ໃນກໍລະນີຫາກໄດ້ເອົາການລັກ, ການຍາດຊິງຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີທີ່ມີຄວາມເສຍຫາຍຢ່າງຫຼວງຫຼາຍຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມປີຫາຫ້າປີ ແລະຈະຖືກປັບໃໝແຕ່ 1. 000. 000 ກີບຫາ 8. 000. 000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ. (ມາດຕາ 110 ໃໝ່)

2.5.2. ການຄອບຄອງຊັບຂອງພົນລະເມືອງຢ່າງຜິດກົດໝາຍ.

ບຸກຄົນຜູ້ໃດໂດຍເຈດຕະນາຫາກໄດ້ຄອບຄອງຊັບຜູ້ອື່ນທີ່ຕົນຊອກໄດ້, ເກັບໄດ້, ຂຸດຄົ້ນໄດ້ ຫຼື ບຸກຄົນອື່ນໄດ້ມອບໃຫ້ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ສາມເດືອນຫາ ໜຶ່ງປີ ແລະຈະຖືກປັບໃໝແຕ່ 50. 000 ກີບຫາ 3. 000. 000 ກີບ.

ໃນກໍລະນີທີ່ຊັບເຫຼົ່ານີ້ຫາກມີມູນຄ່າສູງ ຫຼືເປັນຈຳນວນຫຼວງຫຼາຍ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ໜຶ່ງປີ ຫາສາມປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ 3.000.000 ກີບ(ມາດຕາ114 ໃໝ່)

2.6. ການກະທຳຜິດຕໍ່ສາຍພົວພັນຜົວເມຍ, ຄອບຄົວ ແລະ ຮີດຄອງປະເພນີ.

2.6.1.ການຂົ່ມຂືນທຳສຳເລັ໋ງ

ຜູ້ໃດຫາກໄດ້ໃຊ້ກຳລັງ,ໃຊ້ອາວຸດນາບຂູ່,ໃຊ້ຢາສະຫຼົບ,ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນໆ ທີ່ເຮັດໃຫ້ຜູ້ຍິງຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອທຳສຳເລັ໋ງດ້ວຍການຂືນໃຈຂອງຜູ້ຍິງທີ່ບໍ່ແມ່ນເມຍຂອງຕົນ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມປີ ຫາຫ້າປີ ແລະຈະຖືກປັບໃໝແຕ່ 1.000. 000 ກີບຫາ 5. 000. 000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຂົ່ມຂືນທຳສຳເລົ່າຜູ້ຍິງທີ່ມີອາຍຸແຕ່ສິບຫ້າຫາສິບແປດປີ ທີ່ຢູ່ໃນຄວາມດູແລເບິ່ງແຍງຂອງຕົນ ຫຼື ຢູ່ໃນການປົ່ນປົວຂອງຕົນຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫ້າປີ ຫາສິບປີ ແລະຈະຖືກປັບໃໝແຕ່ 2.000. 000 ກີບຫາ 15. 000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຂົ່ມຂືນທຳສຳເລົ່າດ້ວຍວິທີປ່ຽນຜຽນກັນ, ຂົ່ມຂືນທຳສຳເລົ່າເດັກທີ່ມີອາຍຸຕ່ຳກວ່າສິບຫ້າປີ,ໄດ້ທຳຮ້າຍຮ່າງກາຍໃນເວລາຂົ່ມຂືນເຮັດໃຫ້ຜູ້ຍິງພິການຕະຫຼອດຊີວິດ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະຫຼະພາບແຕ່ເຈັດປີ ຫາສິບຫ້າປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 15. 000. 000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ຂົ່ມຂືນທຳສຳເລົ່າແລ້ວຂ້າຜູ້ຍິງນັ້ນຖິ້ມຈະຖືກລົງໂທດຕັດອິດສະຫຼະພາບແຕ່ສິບຫ້າປີ ຫາຊາວປີ ແລະຈະຖືກປັບໃໝແຕ່ 10.000.000 ກີບຫາ 20.000.000 ກີບ.(ມາດຕາ 119 ໃໝ່)

2.6.2. ການເຜີຍແຜ່ສິ່ງທີ່ລາມົກ ແລະສິ່ງທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ

ບຸກຄົນໃດຫາກໄດ້ຜະລິດຫຼືນຳເອົາໜັງສື, ຮູບ, ຟິມວີດີໂອ ແລະສິ່ງອື່ນໆທີ່ລາມົກທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ ອອກຈຳໜ່າຍ ຫຼື ເຜີຍແຜ່ທາງກວ້າງ ຫຼື ທາງເລິກ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນ ຫາໜຶ່ງປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ5.000.000 ກີບ. (ມາດຕາ 127 ໃໝ່)

2.7. ການກະທຳຜິດ ຕໍ່ເສດຖະກິດ.

2.7.1. ການທຳລາຍປ່າໄມ້.

ຜູ້ໃດຫາກໄດ້ຕັດໄມ້, ຖາງປ່າ,ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບປ່າໄມ້, ຈູດປ່າ ຫຼືທຳລາຍປ່າໄມ້ດ້ວຍວິທີການອື່ນໆ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນ ຫາໜຶ່ງປີ ແລະ ຈະຖືກປັບໃໝຕາມລະບຽບການກ່ຽວກັບປ່າໄມ້.

ໃນກໍລະນີທີ່ມີການເສຍຫາຍຢ່າງຫຼວງຫຼາຍຈະຖືກລົງໂທດຕັດອິດສະຫຼະພາບແຕ່ໜຶ່ງປີ ຫາ ຫ້າປີ ແລະຈະຖືກປັບໃໝຕາມລະບຽບການກ່ຽວກັບປ່າໄມ້.(ມາດຕາ 128 ໃໝ່)

2.7.2. ການຜະລິດ, ການຄ້າ, ເສບ ຫຼື ມີຢາເສບຕິດໄວ້ໃນຄອບຄອງ.

ບຸກຄົນໃດຫາກຜະລິດ, ຄ້າຂາຍ, ຈຳໜ່າຍ ຫຼື ມີຢາເສບຕິດໄວ້ໃນຄອບຄອງ ນຳເຂົ້າລົງອອກຫຼື ນຳຢາເສບຕິດຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ເຊັ່ນ ເຮໂລອິນ, ຢາບ້າ, ວັດຖຸເຄມີ ເພື່ອຜະລິດຢາເສບຕິດ, ຝິ່ນ ຫຼື ກັນຊານັ້ນຈະຖືກລົງໂທດດັ່ງຕໍ່ໄປນີ້:

1. ບຸກຄົນໃດຫາກຜະລິດ, ຄ້າຂາຍ, ຈຳໜ່າຍ ຫຼື ມີໄວ້ໃນຄອບຄອງ ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳ ເຮໂລອິນຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວຕ່ຳກວ່າ ໜຶ່ງຮ້ອຍກຣາມ ຈະຖືກລົງໂທດຕັດ ອິດສະຫຼະພາບແຕ່ສິບປີ ຫາສິບຫ້າປີ ແລະຈະຖືກປັບໃໝແຕ່ 50. 000.000 ກີບຫາ 100. 000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ບຸກຄົນໃດຫາກຜະລິດ, ຄ້າຂາຍ, ຈຳໜ່າຍ ຫຼື ມີໄວ້ໃນຄອບຄອງ ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳ ເຮໂລອິນຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ

ຫຼືມີເຮໂລອິນຕັ້ງແຕ່ ໜຶ່ງຮ້ອຍກຣາມຫາສາມຮ້ອຍກຣາມ ຈະຖືກລົງໂທດຕັດ ອິດສະຫຼະພາບແຕ່ສິບຫ້າ ປີຫາ ຊາວປີ ແລະຈະຖືກປັບໃໝແຕ່ 100.000.000 ກີບຫາ 500.000.000 ກີບ ແລະຈະຖືກຮິບ ຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ຄ້າຂາຍ, ຈຳໜ່າຍ ຫຼື ມີໄວ້ໃນຄອບຄອງ ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳ ເຮໂລອິນຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ເກີນກວ່າສາມຮ້ອຍກຣາມ ຫາຫ້າ ຮ້ອຍກຣາມຈະຖືກລົງໂທດຕັດ ອິດສະຫຼະພາບຕະຫຼອດຊີວິດ ແລະຈະຖືກປັບໃໝແຕ່ 500.000.000 ກີບຫາ 1.000.000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ຄ້າຂາຍ, ຈຳໜ່າຍ ຫຼື ມີໄວ້ໃນຄອບຄອງ ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳເຮໂລອິນຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວເກີນກວ່າຫ້າຮ້ອຍກຣາມ ຂຶ້ນໄປຈະ ຖືກລົງໂທດປະຫານຊີວິດ.

ບຸກຄົນໃດຫາກເສບ, ຊື້ ຫຼື ມີເຮໂລອິນໄວ້ໃນຄອບຄອງ ເພື່ອເສບຈຳນວນແຕ່ສອງກຣາມລົງມາ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ໜຶ່ງປີຫາຫ້າປີ ຫຼືດັດສ້າງໂດຍບໍ່ຕັດອິດສະລະພາບ.

2. ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳ ຢາບ້າ ຫຼືວັດຖຸອອກລິດຕໍ່ຈິດປະສາດອື່ນ ໆຜ່ານສາທາລະນະລັດ ປະຊາທິປະໄຕປະຊາ ຊົນລາວ ຕ່ຳກວ່າ ໜຶ່ງຮ້ອຍກຣາມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫ້າປີຫາສິບປີ ແລະຈະຖືກປັບ ໃໝແຕ່ 10 000 000 ກີບຫາ 100 000 000 ກີບແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຢາບ້າ ຫຼື ວັດຖຸອອກລິດຕໍ່ຈິດປະສາດອື່ນໆຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຢາບ້າ ຫຼື ວັດຖຸອອກລິດຕໍ່ຈິດປະສາດອື່ນ ໆ ແຕ່ໜຶ່ງຮ້ອຍກຣາມຫາຫ້າຮ້ອຍກຣາມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ ສິບປີຫາຊາວປີ ແລະຈະ ຖືກປັບໃໝແຕ່ 100.000.000 ກີບຫາ 500.000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດ ໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຢາ ບ້າ ຫຼື ວັດຖຸອອກລິດຕໍ່ຈິດປະສາດອື່ນໆຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ເກີນກ່ວາຫ້າຮ້ອຍກຣາມຫາພັນກຣາມ ຈະຖືກລົງໂທດຕັດອິດສະຫຼະພາບຕະຫຼອດຊີວິດແລະ ຈະຖືກປັບໃໝແຕ່ 500. 000. 000 ກີບຫາ 1.000. 000. 000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດ ໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຢາບ້າ ຫຼືວັດຖຸອອກລິດຕໍ່ຈິດປະສາດອື່ນ ໆຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ເກີນກວ່າສາມພັນກຣາມຂຶ້ນໄປຈະຖືກລົງໂທດປະຫານຊີວິດ.

ບຸກຄົນໃດຫາກເສບ, ຊື້ ຫຼື ມີຢາບ້າ ຫຼືວັດຖຸອອກລິດຕໍ່ຈິດປະສາດອື່ນ ໆໄວ້ໃນຄອບຄອງ ເພື່ອເສບຈຳນວນແຕ່ສາມກຣາມລົງມາ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫົກເດືອນຫາສາມປີ ຫຼືດັດສ້າງໂດຍບໍ່ຕັດອິດສະຫຼະພາບ.

3. ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີວັດຖຸເຄມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳ ວັດຖຸເຄມີຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຕ່ຳກວ່າ ຫ້າຮ້ອຍກຣາມ ເພື່ອຜະລິດຢ່າເສບຕິດຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫ້າປີຫາສິບປີ ແລະຈະຖືກປັບໃໝ ແຕ່ 5. 000. 000 ກີບຫາ 20. 000. 000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳວັດຖຸເຄມີ ເພື່ອຜະລິດຢາເສບຕິດຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີວັດຖຸເຄມີ ເພື່ອຜະລິດຢາເສບຕິດແຕ່ຫ້າຮ້ອຍກຣາມຫາພັນກຣາມ ຈະຖືກລົງໂທດຕັດອິດສະລະພາບສິບປີຫາຊາວປີແລະຈະຖືກປັບໃໝແຕ່ 20.000.000 ກີບຫາ 50.000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳວັດຖຸເຄມີ ເພື່ອຜະລິດຢາເສບຕິດຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າໜຶ່ງພັນກຣາມຫາສິບພັນກຣາມ ຈະຖືກລົງໂທດຕັດອິດສະຫຼະພາບຕະຫຼອດຊີວິດແລະຈະຖືກປັບໃໝແຕ່ 50.000.000 ກີບຫາ 100.000.000 ກີບແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳວັດຖຸເຄມີ ເພື່ອຜະລິດຢາເສບຕິດຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼືມີວັດຖຸເຄມີ ເພື່ອຜະລິດຢາເສບຕິດແຕ່ໜຶ່ງກິໂລກຣາມຫາສາມກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບສິບປີຫາສິບຫ້າປີ ແລະຈະຖືກປັບໃໝແຕ່ 15.000.000 ກີບຫາ 20.000.000 ກີບແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

4. ບຸກຄົນໃດຫາກຜະລິດ, ຫຼືມີຝິ່ນໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຝິ່ນຜ່ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຕ່ຳກວ່າໜຶ່ງກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສອງປີຫາເຈັດປີ ແລະຈະຖືກປັບໃໝແຕ່ 1.000.000 ກີບຫາ 10.000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີຝິ່ນໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຝິ່ນຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼືມີຝິ່ນແຕ່ໜຶ່ງກິໂລກຣາມຫາສາມກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບສິບປີຫາສິບຫ້າປີ ແລະຈະຖືກປັບໃໝແຕ່ 15.000.000 ກີບຫາ 20.000.000 ກີບແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີຝິ່ນໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຝິ່ນຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼືມີຝິ່ນເກີນກວ່າສາມກິໂລກຣາມຫາຫ້າກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບສິບຫ້າປີຫາ

ຊາວປີແລະຈະຖືກປັບໃໝແຕ່ 30.000.000 ກີບຫາ 40.000.000 ກີບແລະຈະຖືກຮີບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກຜະລິດ, ປຸງແຕ່ງ ຫຼືມີຝັ່ນໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຝັ່ນຜ່ານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼືມີຝັ່ນເກີນກວ່າຫ້າກິໂລກຣາມຂຶ້ນໄປ ຈະຖືກລົງໂທດຕັດອິດສະຫຼະພາບຕະຫຼອດຊີວິດແລະຈະຖືກປັບໃໝແຕ່ 50.000.000 ກີບຫາ 1.000.000.000 ກີບແລະຈະຖືກຮີບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

ບຸກຄົນໃດຫາກດຳເນີນການບໍລິການການສູບຝັ່ນ ຈະຖືກລົງໂທດຕັດອິດສະຫຼະພາບສາມປີຫາສິບປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 20.000.000 ກີບແລະຈະຖືກຮີບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

5. ບຸກຄົນໃດຫາກໄດ້ປູກກັນຊາເປັນຈຳນວນແຕ່ສາມກິໂລກຣາມຫາສິບກິໂລກຣາມ ກັນຊາດິບເພື່ອຄ້າ ຈະຖືກລົງໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບແລະຈະຖືກປັບໃໝແຕ່ 500.000 ກີບຫາ 2.000.000 ກີບ.

ບຸກຄົນໃດຫາກໄດ້ປູກກັນຊາເປັນຈຳນວນແຕ່ສິບກິໂລກຣາມຂັ້ນຊາດິບ ຂຶ້ນໄປເພື່ອຄ້າຈະຖືກລົງໂທດຕັດອິດສະຫຼະພາບແຕ່ໜຶ່ງປີຫາສາມປີແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 20.000.000 ກີບ.

ບຸກຄົນໃດຫາກຜະລິດ ຫຼືມີກັນຊາແຫ້ງໄວ້ໃນຄອບຄອງ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼືນຳຂັ້ນຊາແຫ້ງຜ່ານສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າຈຳນວນແຕ່ໜຶ່ງກິໂລກຣາມ ຫາສິບກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມປີຫາເຈັດປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 20.000.000 ກີບ.

ບຸກຄົນໃດຫາກຜະລິດ ຫຼືມກັນຊາແຫ້ງໄວ້ໃນຄອບຄອງ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼືນຳກັນຊາແຫ້ງຜ່ານສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າເປັນອາຈິນ ຫຼືມີການຈັດຕັ້ງເປັນກຸ່ມ ຫຼືມີກັນຊາແຫ້ງເກີນຈຳນວນແຕ່ໜຶ່ງກິໂລກຣາມ ຫາສິບກິໂລກຣາມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມປີຫາເຈັດປີ ແລະຈະຖືກປັບໃໝແຕ່ 5.000.000 ກີບຫາ 20.000.000 ກີບ.

ບຸກຄົນໃດຫາກຜະລິດ ຫຼືມີກັນຊາແຫ້ງໄວ້ໃນຄອບຄອງ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼືນຳກັນຊາແຫ້ງຜ່ານສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເພື່ອຄ້າເປັນອາຈິນ ຫຼືມີການຈັດຕັ້ງເປັນກຸ່ມ ຫຼືມີກັນຊາແຫ້ງເກີນຈຳນວນແຕ່ສິບກິໂລກຣາມຂຶ້ນໄປ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫ້າປີຫາສິບປີ ແລະຈະຖືກປັບໃໝແຕ່ 20.000.000 ກີບຫາ 50.000.000 ກີບ.

ບຸກຄົນໃດຫາກດຳເນີນການບໍລິການ ການສູບຄັນຊາຈະຖືກລົງໂທດຕັດອິດສະຫຼະພາບ ສາມເດືອນຫາຫ້າປີ ແລະຈະຖືກປັບໃໝແຕ່ 1.000.000 ກີບຫາ 5.000.000 ກີບ

ບຸກຄົນໃດຫາກໄດ້ສູບຄັນຊາເປັນການເສບຕິດຈະຖືກລົງໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ແລະຈະຖືກປັບໃໝແຕ່ 500.000 ກີບຫາ 2.000.000 ກີບ.(ມາດຕາ 135 ໃໝ່)

2.8 ການກະທຳຜິດຂອງພະນັກງານ ຕໍ່ໜ້າທີ່ຮັບຜິດຊອບ.

2.8.1.ການສວຍໃຊ້ອຳນາດ

ພະນັກງານຜູ້ໃດຫາກອີງໃສ່ອຳນາດ, ຕຳແໜ່ງ ແລະໜ້າທີ່ຂອງຕົນໄດ້ຫາຜົນປະໂຫຍດສ່ວນຕົວ ເຊິ່ງເປັນການກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະຜົນປະໂຫຍດຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນຫາສອງປີ ແລະຈະຖືກປັບໃໝແຕ່ 300.000 ກີບຫາ 3.000.000 ກີບ.

ໃນກໍລະນີທີ່ການສວຍໃຊ້ອຳນາດໄດ້ເຮັດໃຫ້ມີການເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສອງປີຫາຫ້າປີ ແລະຈະຖືກປັບໃໝແຕ່ 1.000.000 ກີບຫາ 50.000.000 ກີບ (ມາດຕາ 142ໃໝ່)

2.8.2.ການປະລະໜ້າທີ່

ຜູ້ໃດຫາກໄດ້ປະລະໜ້າທີ່ຂອງຕົນໂດຍເຈດຕະນາ ເຊິ່ງເປັນການກໍ່ຄວາມເສຍຫາຍແກ່ການເຄື່ອນໄຫວວຽກງານຂອງລັດຫຼືຂອງສັງຄົມ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ຫົກເດືອນຫາສາມປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ 3.000.000 ກີບ(ມາດຕາ 144 ໃໝ່).

2.9 ການກະທຳຜິດຕໍ່ກົດລະບຽບ ການບໍລິຫານ ແລະ ການຍຸຕິທຳ.

2.9.1. ການປອມເອກະສານ ຫຼື ໃຊ້ເອກະສານປອມ

ບຸກຄົນຜູ້ໃດຫາກໄດ້ປອມແປງເອກະສານປອມ, ລາຍເຊັນ, ຕາປະທັບ, ໄດ້ຕັດ ຫຼືໄດ້ເພີ່ມຂໍ້ຄວາມໃດຂໍ້ຄວາມໜຶ່ງ ໃນເອກະສານ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນຫາສອງປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ 32.000. 000 ກີບ.

ຜູ້ໃດຫາກຮູ້ວ່າເອກະສານປອມແລ້ວຍັງເອົາໄປໃຊ້ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນຫາສອງປີ ແລະຈະຖືກປັບໃໝແຕ່ 200.000 ກີບຫາ 2.000.000 ກີບ.

ໃນກໍລະນີທີ່ການປອມແປງເອກະສານ ຫຼືການໃຊ້ເອກະສານປອມເຊິ່ງພາໃຫ້ມີຜົນເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ສອງປີຫາ ຫ້າປີ ແລະຈະຖືກປັບໃໝແຕ່ 500.000 ກີບ ຫາ 10.000.000 ກີບ(ມາດຕາ 150 ໃໝ່)

2.9.2. ການທໍລະມານຜູ້ຖືກຫາ

ຜູ້ໃດຫາກໄດ້ທຸບຕີທໍລະມານ, ໃຊ້ມາດຕການ ຫຼືມີການກະທຳອື່ນໆທີ່ບໍ່ຖືກຕ້ອງຕາມກົດໝາຍຕໍ່ຜູ້ທີ່ຖືກຫາ ຫຼືນັກໂທດໃນເວລາຈັບຕົວ, ໃນເວລາດຳເນີນຄະດີ ຫຼືໃນເວລາປະຕິບັດໂທດ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ສາມເດືອນຫາສາມປີ ຫຼືຕັດສ້າງໂດຍບໍ່ຕັດອິດສະຫຼະພາບ ແລະຈະຖືກປັບໃໝແຕ່ 300.000ກີບ ຫາ 2.000.000 ກີບ(ມາດຕາ 160 ໃໝ່)

ຄຳຖາມ

1. ກົດໝາຍອາຍາພາກສະເພາະມີຄວາມໝາຍແນວໃດ?
- ເພື່ອຕີລາຄາຄວາມໝາຍຂອງການກະທຳຜິດ ໃຫ້ຖືກຕ້ອງມັນຮຽກຮ້ອງໃຫ້ມີເງື່ອນໄຂຫຍັງແດ່?
2. ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມສະແດງອອກແນວໃດ?
3. ການກະທຳຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີຂອງບຸກຄົນ ແມ່ນຄືແນວໃດ?
4. ການກະທຳຜິດຕໍ່ສິດທິ ແລະ ເສລີພາບ ແລະກຽດສັກສີຂອງບຸກຄົນມີຄືແນວໃດ?
5. ການກະທຳຜິດຕໍ່ສິດຂອງລັດ ແລະລວມໝູ່ແມ່ນແນວໃດ?
6. ການກະທຳຜິດ ຕໍ່ສິດສ່ວນຕົວ ຂອງພົນລະເມືອງແມ່ນແນວໃດ?
7. ການກະທຳຜິດຕໍ່ສາຍພົວເມຍ, ຄອບຄົວ ແລະຮີດຄອງປະເພນີແມ່ນແນວໃດ?
8. ການກະທຳຜິດຕໍ່ເສດຖະກິດແມ່ນແນວໃດ?
9. ການກະທຳຜິດຂອງພະນັກງານ ຕໍ່ເຈົ້າໜ້າທີ່ຮັບຜິດຊອບ ແມ່ນແນວໃດ?
10. ການກະທຳຜິດຕໍ່ລະບຽບການບໍລິຫານ ແລະຍຸຕິທຳ ແມ່ນແນວໃດ?

ພາກທີ IV
ກົດໝາຍແພ່ງ(ບັນຫາພື້ນຖານ)
ບົດທີ 8
ຄວາມຮັບຮູ້ທົ່ວໄປກ່ຽວກັບກົດໝາຍແພ່ງ

1 . ກົດໝາຍແພ່ງແມ່ນຂະແໜງໜຶ່ງຂອງລະບົບກົດໝາຍ .

1.1 ຄວາມໝາຍຂອງກົດໝາຍແພ່ງ .

ກົດໝາຍແພ່ງແມ່ນຂະແໜງໜຶ່ງ ຂອງລະບົບກົດໝາຍຢູ່ໃນລັດໜຶ່ງ. ດັ່ງນັ້ນ, ກົດໝາຍແພ່ງ ຈຶ່ງມີລັກສະນະ ແລະຫຼັກການລວມຄືກັນກັບບັນດາຂະແໜງການອື່ນໆ ໝາຍຄວາມວ່າ ແຕ່ລະຂະແໜງ ກົດໝາຍແມ່ນສ່ອງແສງເຖິງເຈຈຳນົງຂອງຊົນຊັ້ນປົກຄອງ, ບົດບັນຍັດຂອງກົດໝາຍມີລັກສະນະເປັນຂໍ້ ກຳນົດ ແລະ ເປັນຜົນບັງຄັບທົ່ວໄປ ແລະ ອື່ນໆ.

ກົດໝາຍແພ່ງແມ່ນບັນດາຂໍ້ກຳນົດກົດໝາຍດັດປັບ ສາຍພົວພັນທີ່ມີລັກສະນະຊັບສົມບັດ ແລະ ສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດທີ່ຕິດພັນ (ບາງອັນກໍບໍ່ ຕິດພັນ) ກັບສາຍພົວພັນທີ່ມີ ລັກສະນະຊັບສົມບັດບົນພື້ນຖານຄວາມສະເໝີພາບ.

ກົດໝາຍແພ່ງ ຊຸກຍູ້ໃຫ້ມີການປັບປຸງ ລະບົບເສດຖະກິດ , ກຳມະສິດ ແລະ ຮູບການຂະຫຍາຍ ຕົວຂອງກຳມະສິດດັ່ງກ່າວ. ນອກຈາກນີ້ກົດໝາຍແພ່ງຍັງຊຸກຍູ້ໃຫ້ມີການປັບປຸງວຽກງານ ການເຮັດສັນ ຍາ, ຍົກສູງຄຸນະພາບຂອງຜົນຜະລິດ, ປະຕິບັດຊື້ຂາຍ , ຂົນສົ່ງ ແລະ ອື່ນໆ . ຂະຫຍາຍຕາມ່າງການຄ້າ, ປ້ອງກັນຜົນປະໂຫຍດທາງດ້ານວັດຖຸ ແລະ ວັດທະນາທຳຂອງພົນລະເມືອງ, ຂະຫຍາຍຫົວຄິດປະດິດ ສ້າງ ທາງດ້ານວິທະຍາສາດ ແລະ ເຕັກນິກ, ວັນນະຄະດີ ແລະ ສິລະປະກຳ.

ກົດໝາຍແພ່ງແຕກຕ່າງກັບກົດໝາຍອື່ນໆຍ້ອນເປົ້າໝາຍ ແລະວິທີດັດປັບສາຍພົວພັນສັງຄົມ.

1.2 ເປົ້າໝາຍດັດປັບ ຂອງກົດໝາຍແພ່ງ.

ເປົ້າໝາຍດັດປັບຂອງກົດໝາຍແພ່ງ ແມ່ນສາຍພົວພັນສັງຄົມເຊິ່ງດັດປັບດ້ວຍຂໍ້ກຳນົດກົດໝາຍ ແພ່ງ. ກົດໝາຍແພ່ງດັດປັບສາຍພົວພັນສັງຄົມ 2 ປະເພດ: ສາຍພົວພັນທີ່ລັກສະນະຊັບສົມບັດ ແລະ ສາຍພົວພັນສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດ.

ສາຍພົວພັນທີ່ມີລັກສະນະຊັບສົມບັດແມ່ນສາຍພົວພັນສັງຄົມແຕ່ຫາກບໍ່ແມ່ນສາຍພົວພັນລະຫວ່າງ ສິ່ງຂອງດ້ວຍກັນ ແລະ ກໍບໍ່ແມ່ນສາຍພົວພັນລະຫວ່າງຄົນກັບກັບຄົນ ແລະ ຄົນກັບຊັບສົມບັດ. ແມ່ນ ສາຍພົວພັນລະຫວ່າງຄົນກັບຄົນກ່ຽວກັບຊັບສົມບັດ. ບັນດາຜູ້ເຂົ້າຮ່ວມສາຍພົວພັນທີ່ມີລັກສະນະຊັບ ສົມບັດອາດຈະແມ່ນໂຮງງານ, ອົງການ, ການຈັດຕັ້ງ ແລະ ພົນລະເມືອງ ເຊັ່ນ ພົນລະເມືອງມີຊັບສົມບັດ ອັນໜຶ່ງອັນດຽວເປັນກຳມະສິດສ່ວນຕົວໃນການຄອບຄອງ ຫຼື ມອບໃຫ້ບຸກຄົນອື່ນ, ເຂົ້າຮ່ວມສາຍພົວພັນ ດັ່ງກ່າວກັບຄົນອື່ນ ຫຼື ໂຮງງານ, ອົງການ ແລະ ອົງການຈັດຕັ້ງ ເຊັ່ນ ໃນຂະບວນການເຄື່ອນໄຫວວຽກງານ ທາງການຜະລິດ, ການກໍ່ສ້າງ, ການຂົນສົ່ງ, ການຄ້າ, ເສດຖະກິດອື່ນໆ.

ສາຍພົວພັນສ່ວນຕົວທີ່ບໍ່ມີລັກສະນະ ຊັບສົມບັດ , ມີລັກສະນະພື້ນຖານດັ່ງຕໍ່ໄປນີ້:

ກ. ສາຍພົວພັນປະເພດນີ້ ບໍ່ມີເນື້ອໃນເສດຖະກິດ.

ຂ. ເປົ້າໝາຍຂອງສາຍພົວພັນປະເພດນີ້ແມ່ນສົມບັດທີ່ບໍ່ເປັນວັດຖຸ ເຊັ່ນ ຊື່, ກຽດ, ສັກສີ, ການປະພັນບົດວິທະຍາສາດ, ວັນນະຄະດີ ຫຼື ສິລະປະກຳອື່ນໆ .

ຄ. ສາຍພົວພັນປະເພດນີ້ບໍ່ສາມາດແຍກອອກຈາກສ່ວນບຸກຄົນໄດ້ ເຊັ່ນ ຖ້າວ່າບຸກຄົນໃດໜຶ່ງຫາກເປັນຜູ້ປະພັນບົດໃດໜຶ່ງແລ້ວເວລານັ້ນບໍ່ມີບຸກຄົນອື່ນໃດອີກຈະສາມາດເປັນຜູ້ປະພັນບົດດັ່ງກ່າວ.

ງ. ສາຍພົວພັນນີ້ອາດຈະຖືກດັດປັບດ້ວຍຂະແໜງກົດໝາຍຕ່າງໆ ເຊັ່ນ ກົດໝາຍອາຍາກ່ຽວກັບການນິນທາ ແລະໃສ່ຮ້າຍ , ກົດໝາຍຄອບຄົວກ່ຽວກັບການເລືອກນາມສະກຸນຂອງຜົວ - ເມຍ, ກົດໝາຍບໍລິຫານກ່ຽວກັບການໃຫ້ນາມມະຍົດແກ່ຜູ້ໃດຜູ້ໜຶ່ງ.

ໃນບາງກໍລະນີໃນການຮັບຮູ້ສ່ວນຕົວທີ່ບໍ່ເປັນວັດຖຸຂອງຜູ້ໃດໜຶ່ງນັ້ນແມ່ນເງື່ອນໄຂ ທີ່ພາໃຫ້ເສດຖະກິດ ມີສາຍພົວພັນທີ່ມີລັກສະນະຊັບສົມບັດ.

ຕົວຢ່າງ: ການຮັບຮູ້ບົດປະພັນເລື່ອງໃດໜຶ່ງທີ່ຜູ້ໃດ ໜຶ່ງຂຽນຂຶ້ນມານັ້ນ ພາໃຫ້ຜູ້ນັ້ນມີສິດຮັບເອົາລາງວັນ ຫຼື ຂອງຂວັນທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງຖືວ່າ ສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະ ຊັບສົມບັດ ແມ່ນສາຍພົວພັນທີ່ກ່ຽວກັບການເຄື່ອນໄຫວຂອງບຸກຄົນໃດ ໜຶ່ງເຊິ່ງມີຜົນປະໂຫຍດແກ່ສັງຄົມແຕ່ບໍ່ເປັນວັດຖຸ.

- **ວິທີດັດປັບຂອງກົດໝາຍແພ່ງ .**

ຕາມຫຼັກການແລ້ວ ວິທີດັດປັບຂອງກົດໝາຍແພ່ງ ແມ່ນຖືກກຳນົດດ້ວຍເປົ້າໝາຍ ຫຼືລັກສະນະຂອງສາຍພົວພັນສັງຄົມ ເຊິ່ງຂະແໜງກົດໝາຍທີ່ກ່ຽວຂ້ອງດັດປັບໃຫ້. ດັ່ງນັ້ນ, ກົດໝາຍແພ່ງ ຈຶ່ງດັດປັບສາຍພົວພັນທີ່ມີລັກ ສະນະ ຊັບສົມບັດ ແລະ ສາຍພົວພັນສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດ. ແຕ່ສາຍພົວພັນອັນພື້ນຖານທີ່ກົດໝາຍແພ່ງດັດປັບໃຫ້ນັ້ນ ແມ່ນພົວພັນທີ່ມີລັກສະນະຊັບສົມບັດທີ່ຕິດພັນກັບ ການນຳໃຊ້ຮູບການສິນຄ້າ ແລະ ເງິນເປັນພື້ນຖານເສດຖະກິດແຫ່ງຊາດ.

ຈຸດພິເສດສາຍພົວພັນສິນຄ້າ - ເງິນຕາແມ່ນອັນທີ່ວ່າຜູ້ເຂົ້າຮ່ວມສາຍພົວພັນດັ່ງກ່າວມີຄວາມເປັນເອກະລາດ, ບໍ່ຂຶ້ນເຊິ່ງກັນ ແລະ ກັນທາງດ້ານຊັບສົມບັດ, ທາງດ້ານບໍລິຫານອື່ນໆ .

ດັ່ງນັ້ນ, ກົດໝາຍແພ່ງຈຶ່ງຖືວ່າຜູ້ເຂົ້າຮ່ວມສາຍພົວພັນມີຖານະທາງດ້ານກົດໝາຍເທົ່າທຽມກັນ, ເປັນເອກະລາດເຊິ່ງກັນ ແລະ ກັນ.

ພື້ນຖານຂອງຄວາມສະເໝີພາບ ແລະ ຄວາມເປັນກະລາດຂອງຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງແມ່ນວ່າຜູ້ເຂົ້າຮ່ວມນັ້ນມີສິດຊີ້ຂາດຕໍ່ຊັບສົມບັດຢູ່ນຳຕົວຕາມເຈດຈຳນົງຂອງຕົນເອງ. ຄວາມເປັນເອກະລາດໃນການຊີ້ຂາດຕໍ່ຊັບສົມບັດນີ້ອາດຈະແມ່ນວ່າຜູ້ເຂົ້າຮ່ວມນັ້ນມີສິດໃນກຳມະສິດ, ສິດໃນການຄຸ້ມຄອງຊັບສົມບັດ.

ຕົວຢ່າງ: ມອບເຮືອນໃຫ້ຜູ້ໃດໜຶ່ງເຊົ່າ ເຊິ່ງສິດເຫຼົ່ານີ້ເປັນຂອງຜູ້ກ່ຽວເອງ.

ຄວາມເປັນເຈົ້າຕົນເອງແລະຄວາມເປັນເອກະລາດຂອງບັນດາຜູ້ເຂົ້າຮ່ວມນັ້ນພາໃຫ້ໄປເຖິງບ່ອນວ່າສາຍພົວພັນລະຫວ່າງພວກກ່ຽວແມ່ນເກີດຂຶ້ນບົນພື້ນຖານການຕົກລົງເຫັນດີນຳກັນ. ດັ່ງນັ້ນ, ບັນດາຜູ້ເຂົ້າຮ່ວມຈຶ່ງມີສິດກຳນົດເອງລັກສະນະສາຍພົວພັນເຊິ່ງກັນ ແລະ ກັນ.

ວິທີດັດປັບກົດໝາຍແພ່ງ ຍັງມີຈຸດພິເສດບ່ອນວ່າ ຂໍ້ຂັດແຍ່ງລະຫວ່າງບັນດາຜູ້ເຂົ້າຮ່ວມການໝູນວຽນທາງແພ່ງນັ້ນ ແມ່ນສານ ຫຼື ອົງການໄກ່ເກ່ຍເສດຖະກິດເປັນຜູ້ແກ້ໄຂ. ໃນບາງກໍລະນີອາດຈະທຳການໄກ່ເກ່ຍກັນໂດຍບໍ່ໃຫ້ສານຕັດສິນ ຫຼື ພິພາກສາກໍໄດ້.

ໃນເມື່ອຫາກມີການມອບສິດແລະພັນທະອັນແນ່ນອນໃຫ້ແກ່ກັນແລ້ວກົດໝາຍໄດ້ວາງມາດຕະການຢ່າງເໝາະສົມຕໍ່ຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ທີ່ໄດ້ລະເມີດສິດ ແລະພັນທະຂອງກັນ. ຍ້ອນວ່າ ສາຍພົວພັນທາງແພ່ງສ່ວນຫຼາຍ ແມ່ນສາຍພົວພັນທີ່ມີລັກສະນະຊັບສົມບັດໃນຮູບການສົມຄ້າ - ເງິນຕາ ຄວາມຮັບຜິດຊອບທາງແພ່ງ ຈຶ່ງຕ້ອງສອດຄ່ອງກັບລັກສະນະຂອງສາຍພົວພັນດັ່ງກ່າວ.

2. ສາຍພົວພັນທາງແພ່ງ

2.1 ຄວາມໝາຍ ແລະ ຈຸດພິເສດ ຂອງ ສາຍພົວພັນທາງແພ່ງ.

ໃນຂະບວນວິວັດແຫ່ງການເຄື່ອນໄຫວການຈັດຕັ້ງ ແລະພົນລະເມືອງອາດຈະເຂົ້າຮ່ວມໃນສາຍພົວພັນຕ່າງໆນຳກັນ ເຊິ່ງເອີ້ນວ່າ ສາຍພົວພັນສັງຄົມ. ສາຍພົວພັນກົດໝາຍ ແມ່ນສາຍພົວພັນສັງຄົມປະເພດໜຶ່ງທີ່ເກີດຂຶ້ນ ຈາກການ ດັດປັບສາຍພົວພັນສັງຄົມຕ່າງໆໂດຍຂໍ້ກຳນົດກົດໝາຍ . ພາຍຫຼັງທີ່ຂໍ້ກຳນົດກົດໝາຍໄດ້ກະທົບໃສ່ສາຍພົວພັນສັງຄົມ ນັ້ນແລ້ວຜູ້ເຂົ້າຮ່ວມກໍມີສິດ ແລະ ພັນທະທີ່ສອດຄ່ອງກັນ, ການລະເມີດສິດ ແລະ ພັນທະດັ່ງກ່າວຈະພາໃຫ້ມີການນຳໃຊ້ມາດຕະການທີ່ມີລັກສະນະບັງຄັບຕໍ່ຜູ້ລະເມີດ. ດັ່ງນັ້ນ, ສາຍພົວພັນກົດໝາຍຈຶ່ງແມ່ນສາຍພົວພັນສັງຄົມ ເຊິ່ງຜູ້ເຂົ້າຮ່ວມລ້ວນແຕ່ມີສາຍພົວພັນເຊິ່ງກັນແລະກັນ, ມີສິດ ແລະ ພັນທະ ແລະ ການປະຕິບັດສິດແລະພັນທະດັ່ງກ່າວກໍຖືກຮັບປະກັນດ້ວຍມາດຕະການທີ່ມີລັກສະນະບັງຄັບຂອງລັດ.

ສາຍພົວພັນທາງແພ່ງກໍແມ່ນສາຍພົວພັນກົດໝາຍປະເພດໜຶ່ງ ເຊິ່ງເກີດຂຶ້ນຈາກການດັດປັບສາຍພົວພັນທີ່ມີລັກສະນະຊັບສົມບັດ ແລະ ສາຍພົວພັນສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດໂດຍຂໍ້ກຳນົດກົດໝາຍແພ່ງ.

3. **ຈຸດພິເສດຂອງສາຍພົວພັນທາງແພ່ງມີດັ່ງນີ້:**

- ເຈົ້າກຳຂອງສາຍພົວພັນທາງແພ່ງແມ່ນ ບຸກຄົນທີ່ແຍກຕົວອອກຈາກກັນທາງດ້ານຊັບສົມບັດ ແລະ ການຈັດຕັ້ງ.

- ຖານະກົດໝາຍຂອງຜູ້ເຂົ້າຮ່ວມ ສາຍພົວພັນທາງແພ່ງສະເໝີພາບກັນ, ຜູ້ເຂົ້າຮ່ວມດັ່ງກ່າວບໍ່ຂຶ້ນເຊິ່ງກັນ ແລະ ກັນທາງດ້ານບໍລິຫານ.

- ມາດຕະການມີລັກສະນະຊັບສົມບັດ ຖືກນຳໃຊ້ສ່ວນຫຼາຍເຂົ້າໃນການຄ້ຳປະກັນ (ທາງດ້ານກົດໝາຍ) ການປະຕິບັດ ແລະ ພັນທະທີ່ເປັນເຈົ້າກຳໃຫ້ເປັນຈິງ.

ຈາກສິ່ງທີ່ກ່າວມານັ້ນຈຶ່ງເວົ້າໄດ້ວ່າ ສາຍພົວພັນທາງແພ່ງແມ່ນສາຍພົວພັນທາງສັງຄົມ ເຊິ່ງຜູ້ເຂົ້າໃນນີ້ແຍກຕົວອອກຈາກກັນທາງດ້ານຊັບສົມບັດ ແລະ ການຈັດຕັ້ງ, ເປັນຜູ້ມີສິດທາງແພ່ງສະເໝີພາບກັນທາງດ້ານກົດໝາຍເຊິ່ງປະຕິບັດສິດ ແລະ ພັນທະດັ່ງກ່າວຖືກຮັບປະກັນໂດຍຄວາມອາດສາມາດໃນການນຳໃຊ້ມາດຕະການບັງຄັບຂອງລັດທີ່ມີມີລັກສະນະບັງຄັບຕໍ່ຜູ້ລະເມີດ.

2.2 ເນື້ອໃນຂອງສາຍພົວພັນທາງແພ່ງ

ສາຍພົວພັນທາງແພ່ງແມ່ນສາຍພົວພັນສັງຄົມເຊິ່ງຜູ້ເຂົ້າຮ່ວມໃນນີ້ລ້ວນເປັນຜູ້ມີສິດ ແລະ ພັນທະທາງແພ່ງສະເໝີພາບກັນ. ດັ່ງນັ້ນ, ເນື້ອໃນຂອງສາຍພົວພັນກົດໝາຍຈຶ່ງແມ່ນສິດ ແລະ ພັນທະຂອງເຈົ້າກຳ.

ສິດຂອງເຈົ້າກຳແມ່ນຄວາມອາດສາມາດມີການກະທຳສິ່ງໃດໜຶ່ງຂອງບຸກຄົນທີ່ມີສິດນັ້ນ. ສິດທາງແພ່ງແຕກຕ່າງກັນທາງດ້ານເນື້ອໃນ. ເນື້ອໃນຂອງສິດແມ່ນຄວາມອາດສາມາດທີ່ເປັນຂອງເຈົ້າກຳ ຫຼື ກົດໝາຍໄດ້ກຳນົດໄວ້.

ສິດຂອງເຈົ້າກຳ ໃຫ້ຄວາມອາດສາມາດທຸກຢ່າງແກ່ບຸກຄົນທີ່ມີສິດນັ້ນ

ຕົວຢ່າງ: ສິດກ່ຽວກັບກຳມະສິດປະກອບດ້ວຍ:

- ຄວາມສາມາດຄອບຄອງ, ນຳໃຊ້ ,ໄດ້ຮັບໝາກຜົນ ແລະຊີ້ຂາດກ່ຽວກັບຊັບສົມບັດທີ່ເປັນຂອງຕົນເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການອັນແນ່ນອນ.

- ຄວາມອາມສາມາດ ທວງໃຫ້ບຸກຄົນອື່ນຢຸດເຊົາການກີດຂວາງ ຫຼືລົບລ້າງອຸປະສັກຕໍ່ການນຳໃຊ້ຄວາມອາດສາມາດເທິງນີ້ຂອງຜູ້ເປັນເຈົ້າກຳມະສິດ.

- ໃນກໍລະນີທີ່ມີການລະເມີດສິດກ່ຽວກັບການກຳມະສິດແລ້ວ ໃຫ້ນຳໃຊ້ມາດຕະການຕາມລະບຽບການປົກປ້ອງກຳມະສິດ ເຊັ່ນ ຮ້ອງຟ້ອງຕໍ່ສານ ຫຼື ອົງການໄກ່ເກ່ຍເສດຖະກິດ ເພື່ອຟື້ນຟູສິດ ແລະ ຄືນຊັບໂຫຍດທີ່ໄດ້ຖືກລະເມີດນັ້ນຄືນໃຫ້ກຳມະສິດ.

ພັນທະຂອງເຈົ້າກຳ ແມ່ນຄວາມຈຳເປັນຂອງບຸກຄົນທີ່ມີຄວາມພັນທະນັ້ນຕ້ອງກະທຳສິ່ງໃດໜຶ່ງ. ກົດໝາຍແພ່ງໃຫ້ຂໍ້ກຳນົດທີ່ມີລັກສະນະເປັນຂໍ້ເກືອດຫ້າມ ແລະ ຂໍ້ບັນຍັດ. ຂໍ້ກຳນົດທີ່ເປັນເກືອດຫ້າມໄດ້ກຳນົດພັນທະຂອງຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ.

ຕົວຢ່າງ : ຫ້າມຄູ່ສັນຍາປ່ຽນແປງ ຫຼື ຍົກເລີກເງື່ອນໄຂຂໍ້ສັນຍາແຕ່ຝ່າຍດຽວ. ສຳລັບຂໍ້ກຳນົດທີ່ເປັນຂໍ້ບັນຍັດນັ້ນກໍມີລັກສະນະຄ້າຍຄືກັນ ເຊັ່ນ ກົດໝາຍບັນຍັດ ໃຫ້ພົນລະເມືອງລາວທຸກຄົນ ແລະ ການຈັດຕັ້ງປະຕິບັດສິດ ແລະ ພັນທະຕາມລະບຽບການທີ່ໄດ້ກຳນົດໄວ້.

2.3 ເຈົ້າຂອງສາຍພົວພັນ ທາງແພ່ງ.

ເຈົ້າຂອງສາຍພົວພັນ ທາງແພ່ງ ແມ່ນຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງເຊິ່ງມີສິດ ແລະພັນທະເທົ່າທຽມກັນ. ເຈົ້າກຳສາຍພົວພັນທາງແພ່ງ ແມ່ນບຸກຄົນ ຫຼື ການຈັດຕັ້ງ (ນິຕິ ບຸກຄົນ). ເພື່ອໃຫ້ກາຍເປັນເຈົ້າກຳຂອງສາຍພົວພັນທາງແພ່ງບຸກຄົນ ຫຼືການຈັດຕັ້ງ (ນິຕິບຸກຄົນ) ນັ້ນຕ້ອງມີຄວາມສາມາດທາງດ້ານກົດໝາຍ ແລະ ຄວາມສາມາດທາງດ້ານການປະພຶດ.

2.3.1 . ຄວາມສາມາດທາງດ້ານກົດໝາຍ ຂອງບຸກຄົນ.

ຄວາມສາມາດທາງດ້ານກົດໝາຍ ແມ່ນຄວາມສາມາດມີສິດ ແລະ ພັນທະທາງແພ່ງ. ຄວາມສາມາດທາງດ້ານກົດໝາຍເກີດຂຶ້ນນັບ ແຕ່ເວລາທີ່ບຸກຄົນນັ້ນກຳນົດມາ ແລະສິ້ນສຸດລົງພ້ອມກັບການເສຍຊີວິດຂອງບຸກຳຄົນນັ້ນໆ. ດັ່ງນັ້ນ, ຄວາມສາມາດທາງດ້ານກົດໝາຍຈຶ່ງແມ່ນຄຸນນະພາບທີ່ຕັດແຍກອອກບໍ່ໄດ້ຈາກຕົວຂອງຄົນ ໝາຍຄວາມວ່າ ແຕ່ລະຄົນຈະມີຄວາມສາມາດທາງດ້ານກົດໝາຍໃນຕະຫຼອດຊີວິດຂອງຕົນໂດຍບໍ່ຂຶ້ນກັບອາຍຸ ແລະ ສະພາບການເປັນຢູ່ຂອງຕົນ.

ແຕ່ຢ່າງໃດກໍຕາມ ບໍ່ຄວນຈະເຂົ້າໃຈວ່າຄວາມສາມາດທາງດ້ານກົດໝາຍ ແມ່ນເອກະລັກທຳມະຊາດຂອງຄົນຄື ດັ່ງ, ຕາ, ຫູ ແລະ ອື່ນໆ. ເຖິງວ່າຄວາມສາມາດ ທາງດ້ານກົດໝາຍຈະເກີດຂຶ້ນ ນັບຕັ້ງແຕ່ເວລາບຸກຄົນນັ້ນກຳເນີດມາກໍຕາມ ແຕ່ກໍບໍ່ແມ່ນສິ່ງທີ່ໄດ້ມາຈາກທຳມະຊາດ ແຕ່ຫາກແມ່ນໄດ້ມາຈາກກົດໝາຍ. ໝາຍຄວາມວ່າ ຄວາມສາມາດທາງດ້ານກົດໝາຍ ແມ່ນເອກະລັກຂອງສັງຄົມ ທີ່ຖືກກຳນົດໂດຍລະບອບເສດຖະກິດຂອງສັງຄົມນັ້ນ.

ຕົວຢ່າງ : ໃນລະບອບເຈົ້າທາດ, ຂ້າທາດ ບໍ່ມີຄວາມສາມາດທາງດ້ານກົດໝາຍແຕ່ຢ່າງໃດທັງສິ້ນ.

ອີກຢ່າງໜຶ່ງ ກໍບໍ່ຄວນປົນເປລະຫວ່າງຄວາມສາມາດທາງດ້ານກົດໝາຍ ກັບສິດຕົວຈິງ. ຄວາມສາມາດທາງດ້ານກົດໝາຍແມ່ນພື້ນຖານທີ່ພາໃຫ້ມີສິດ. ກົດໝາຍອະນຸຍາດໃຫ້ພົນລະເມືອງທຸກຄົນ ມີສິດຫຼາຍໆຢ່າງແຕ່ໃນພາກຕົວຈິງແລ້ວ ພົນລະເມືອງຜູ້ໜຶ່ງມີສິດເຫຼົ່ານີ້ ພຽງແຕ່ສ່ວນໃດສ່ວນໜຶ່ງເທົ່ານັ້ນ. ເຊັ່ນ ທຸກຄົນສາມາດມີສິດເປັນແພດ ຫຼື ວິສາວະກອນ ຕ່າງໆ ແຕ່ກໍບໍ່ແມ່ນໝົດທຸກຄົນຈະມີສິດເປັນໄດ້ໃນຊີວິດຕົວຈິງ. ດັ່ງນັ້ນ, ການໄດ້ສິດຕົວຈິງ ຈຶ່ງແມ່ນການປະຕິບັດຄວາມສາມາດ ທາງດ້ານກົດໝາຍໃຫ້ເປັນຈິງ.

ແຕ່ລະບຸກຄົນ ສາມາດມີສິດທີ່ມີລັກສະນະຊັບສົມບັດ ແລະ ສິດສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດ." ໂດຍສອດຄ່ອງກັບກົດໝາຍ" ອັນນີ້ໝາຍຄວາມວ່າ ແຕ່ລະບຸກຄົນບໍ່ແມ່ນຈະມີສິດອັນໃດກໍໄດ້ ແຕ່ຫາກສາມາດມີພຽງແຕ່ສິດທີ່ກົດໝາຍໄດ້ອະນຸຍາດເທົ່ານັ້ນ.

2.3.2 ຄວາມສາມາດທາງດ້ານການປະພຶດ ຂອງບຸກຄົນ.

ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ ແມ່ນຄວາມສາມາດໄດ້ສິດທາງແພ່ງມາດ້ວຍການກະທຳຂອງຕົນເອງ ແລະ ສ້າງພັນທະທາງແພ່ງໃຫ້ຕົນເອງ. ມີຄວາມສາມາດທາງດ້ານການປະພຶດ ໝາຍຄວາມວ່າ ມີຄວາມສາມາດດຳເນີນການຕ່າງໆ ທາງດ້ານກົດໝາຍດ້ວຍຕົນເອງ ເຊັ່ນ ເຮັດສັນຍາ, ມອບສັນທະ ແລະ ອື່ນໆ. ຮັບຜິດຊອບໃຊ້ຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ (ທຳລາຍຊັບ ຫຼື ເຮັດໃຫ້ຊັບຂອງຜູ້ອື່ນເປ່ເພ. ເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ) ແລະ ຮັບຜິດຊອບຕໍ່ການປະຕິບັດສັນຍາ ແລະ ພັນທະອື່ນໆ.

ຄວາມສາມາດທາງດ້ານການປະພຶດ ກໍຄືຄວາມສາມາດທາງດ້ານກົດໝາຍ ແມ່ນເອກະລັກທີ່ກົດໝາຍຮັບຮູ້ໃຫ້ທຸກຄົນ. ດັ່ງນັ້ນ, ຄວາມສາມາດທາງດ້ານການປະພຶດ ກໍຄືຄວາມສາມາດທາງດ້ານກົດໝາຍຈຶ່ງບໍ່ອາດໂອນໃຫ້ກັນໄດ້.

2.3.3 ຄວາມສາມາດທາງດ້ານກົດໝາຍ ແລະ ຄວາມສາມາດທາງດ້ານການປະພຶດ ຂອງການຈັດຕັ້ງ (ນິຕິບຸກຄົນ).

ນິຕິບຸກຄົນ ແມ່ນການຈັດຕັ້ງທີ່ມີລັກສະນະຊັບສົມບັດສະເພາະ, ສາມາດມີສິດທີ່ມີລັກສະນະຊັບສົມບັດ ແລະສິດສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດ ແລະ ມີພັນທະໃນນາມສະເພາະຂອງຕົນ, ສາມາດເປັນໂຈດ ແລະ ຈຳເລີຍຢູ່ສານ ຫຼື ອົງການໄກ່ເກ່ຍເລດຖະກິດ.

ຄວາມສາມາດທາງດ້ານກົດໝາຍ ແລະ ຄວາມສາມາດທາງດ້ານການປະພຶດຂອງນິຕິບຸກຄົນເກີດຂຶ້ນພ້ອມກັນນັບແຕ່ມີຮັບຮອງເອົາກົດລະບຽບຂອງນິຕິບຸກຄົນທີ່ກ່ຽວຂ້ອງ ຖ້າວ່າກົດລະບຽບນັ້ນຫາກຍັງຕ້ອງຈົດທະບຽນຢູ່ຄວາມສາມາດທາງດ້ານກົດໝາຍກໍເກີດຂຶ້ນນັບແຕ່ມີຈົດທະບຽນເປັນຕົ້ນໄປ.

ຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນ ບໍ່ມີລັກສະນະລວມ ແຕ່ຫາກມີລັກສະນະສະເພາະພົນລະເມືອງສາມາດມີສິດ ແລະ ພັນທະທຸກຢ່າງທີ່ບໍ່ຂັດກັບກົດໝາຍ ແຕ່ເນື້ອໃນຂອງຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນແມ່ນຕິດພັນໂດຍກົງກັບຈຸດປະສົງ, ການເຄື່ອນໄຫວຂອງນິຕິບຸກຄົນນັ້ນ ໝາຍຄວາມວ່າ ນິຕິບຸກຄົນດັ່ງກ່າວສາມາດມີສິດ ແລະ ພັນທະທາງແພ່ງທີ່ສອດຄ່ອງກັບກິດລະບຽບກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນເທົ່ານັ້ນ.

ຄວາມສາມາດທາງດ້ານການປະພຶດຂອງນິຕິບຸກຄົນແມ່ນຢູ່ບ່ອນວ່ານິຕິບຸກຄົນມີຄວາມອາດສາມາດໄດ້ສິດ ແລະ ປະຕິບັດພັນທະທາງແພ່ງ (ເຂົ້າຮ່ວມໃນການໝູນວຽນທາງແພ່ງ) ດ້ວຍຕົນເອງ.

ຫົວໜ້າ (ຜູ້ອຳນວຍການ) ນິຕິບຸກຄົນ ເຊິ່ງເອີ້ນວ່າ ອົງການນິຕິບຸກຄົນນັ້ນເຄື່ອນໄຫວໃນນາມນິຕິບຸກຄົນໂດຍບໍ່ມີໃບມອບສັນທະ.

2.3.4 ວັດຖຸກຳ ຂອງ ສາຍພົວພັນ ທາງແພ່ງ:

ວັດຖຸກຳ ຂອງ ສາຍພົວພັນທາງແພ່ງແມ່ນສາຍພົວພັນທີ່ ກົດໝາຍກະທົບໃສ່.

ສາຍພົວພັນກົດໝາຍ ແມ່ນສາຍພົວພັນລະຫວ່າງບັນດາເຈົ້າກຳ ຜູ້ທີ່ມີສິດ ແລະ ພັນທະດ້ວຍກັນ. ໃນນີ້ສິດ ແລະ ພັນທະຂອງເຈົ້າກຳໄດ້ກຳນົດຄວາມອາດສາມາດ ແລະ ຄວາມຈຳເປັນຕ້ອງກະທຳສິ່ງໃດສິ່ງໜຶ່ງ. ສະນັ້ນ, ສິ່ງທີ່ການກະທຳຂອງເຈົ້າກຳ ຂອງສາຍພົວພັນກົດໝາຍ (ຂອງຜູ້ທີ່ມີສິດ ຫຼື ຜູ້ທີ່ມີພັນທະ) ກະທົບໃສ່ນັ້ນ ເອີ້ນວ່າ ວັດຖຸກຳຂອງສາຍພົວພັນ ກົດໝາຍ.

ດ້ວຍເຫດນີ້ ວັດຖຸກຳ ຂອງສາຍພົວພັນທາງແພ່ງຈຶ່ງແມ່ນ.

- ຊັບສິ່ງຂອງ
- ວຽກງານໃດໜຶ່ງ ຫຼື ການຮັບໃຊ້ ຂອງບຸກຄົນ ຜູ້ນີ້ ຕໍ່ບຸກຄົນຜູ້ນັ້ນ.
- ຜົນຂອງການເຄື່ອນໄຫວປະດິດສ້າງ.
- ສົມບັດສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດ.

ຄຳຖາມ

1. ກົດໝາຍແພ່ງມີຄວາມໝາຍສຳຄັນແນວໃດ ? ມີເປົ້າໝາຍດັດປັບແນວໃດ ?
2. ຄວາມໝາຍ ແລະ ຈຸດພິເສດ ຂອງ ສາຍພົວພັນທາງແພ່ງມີຄືແນວໃດ ?
3. ສາຍພົວພັນທາງແພ່ງມີເນື້ອໃນແນວໃດ ?
4. ເຈົ້າກຳ ຂອງສາຍພົວພັນທາງແພ່ງ ມີຄວາມໝາຍສຳຄັນແນວໃດ ?